<u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ</u>

**Copyright © 2014 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ໊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas,
333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປື້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ 2004

BAPTISTWAY Management Team

Executive Director, Baptist General Convention of Texas: David Hardage
Director, Church Ministry Resources: Chris Liebrum
Director, Bible Study/Discipleship: Phil Miller

Publisher, BAPTISTWAY PRESS®: Scott Stevens

Language Materials Team

Bible Study Writer for Lessons 1, 2
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 3, 4, 5, 6
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 3, 4, 5, 6
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 7, 8, 9, 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7, 8, 9, 10
Phaisane Somsith, Homprakhoon Baptist Church, Dallas, Texas

Bible Study Writer for Lessons 11, 12, 13 and Easter
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11, 12, 13 and Easter
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ບົດຮຽນທີ 1
# ຄວາມກ້າຫານໃນເວລາມີການປ່ຽນແປງ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຢຊວຍ ບົດທີ 1

**ພູມຫລັງຂອງພຣະຄັມພີ:** ໂຢຊວຍ ບົດທີ 1

**ຈຸດສໍາຄັນສໍາລັບບົດຮຽນນີ້:** ການນໍາພາຂອງພຣະເຈົ້າ ຕຽມຄວາມກ້າຫານໃຫ້ພວກເຮົາ ຖ້າມກາງການປ່ຽນແປງຕ່າງໆ

**ຄໍາຖາມເພື່ອການຄົ້ນຄວ້າ:** ພວກເຮົາຈະເຫັນຄວາມກ້າຫານໄດ້ຢ່າງໃດ ໃນເວລາມີການປ່ຽນແປງ

**ຈຸດປະສົງຂອງບົດຮຽນນີ້:** ເພື່ອເຮັດໃຫ້ພວກເຮົາເຫັນເຖິງການນໍາພາຂອງພຣະເຈົ້າ ແລະເຫັນພຣະຄໍາຂອງພຣະອົງໃນເວລາມີການປ່ຽນແປງ.

## ຄໍານໍາ

ເມື່ອສາມີຂອງຂ້າພະເຈົ້າ ແລະຂ້າພະເຈົ້າເອງ ໄດ້ຖືກເອີ້ນໃຫ້ໄປເປັນຜູ້ປະກາດຢູ່ທີ່ຕ່າງປະເທດ, ໃນຂະນະນັ້ນພວກເຮົາເປັນພໍ່ແມ່ຂອງລູກທີ່ຍັງນ້ອຍຫລາຍ. ພວກເຮົາພາກັນຄິດເຖິງລູກນ້ອຍໆທີ່ຈະເດີນທາງ, ແລະອີກສອງຄົນກໍຕ້ອງອອກຈາກການຕຽມເຂົ້າໂຮງຮຽນ ເພື່ອຈະເດີນທາງເຂົ້າສູ່ອັນຕະລາຍທີ່ຢູ່ຕ່າງປະເທດ. ຫລາຍອາທິດຕໍ່ມາ ຫລັງຈາກທີ່ພວກເຮົາໄດ້ອົດທົນທູນຂໍອະທິຖານ, ພວກເຮົາກໍໄດ້ມາເຖິງຈຸດທີ່ວ່າຍອມເຮັດຕາມພຣະຄໍາຂອງພຣະເຈົ້າ.

ໂຢຊວຍເປັນຄົນທີ່ເຄີຍຜ່ານກັບຊີວິດທີ່ທໍ້ຖອຍໃນການປ່ຽນແປງມາຫລາຍແລ້ວ. ເປັນເວລາຫລາຍສິບປີທີ່ລາວຮັບໃຊ້ກັບໂມເຊຜ່ານມາ ດ້ວຍຄວາມສັດຊື່. ໂດຍສ່ວນຕົວແລ້ວ ໂຢຊວຍຍັງໄດ້ມີປະສົບການໃນການສັຣເສີນພຣະເຈົ້າ, ໃນພລັງອໍານາດຂອງພຣະເຈົ້າ, ແລະໃນຄວາມເປັນພຣະເຈົ້າອົງດຽວຂອງພຣະອົງ. ແຕ່ວ່າຫລັງຈາກທີ່ໂມເຊເສັຽຊີວິດໄປແລ້ວ, ໂຢຊວຍກໍພົບວ່າຕົວເອງຈໍາເປັນຈະຕ້ອງເປັນຜູ້ນໍາຂອງຊາວອິສຣາເອນ, ຊຶ່ງເປັນຕໍາແໜ່ງທີ່ມີຄວາມຮັບຜິດຊອບຫລາຍ ສ□າລັບຊີວິດທີ່ເຄີຍເປັນຂ້າທາດມາແລ້ວຈົນເຄິ່ງຊີວິດ. ພຣະເຈົ້າຊົງສັນຍາວ່າຈະສະຖິດຢູ່ນໍາ ແລະຈະຊົງຊ່ວຍເຫລືອທຸກປະການ. ນີ້ຄືສິ່ງທີ່ໂຢຊວຍກັງວົນໃຈຫລາຍທີ່ສຸດ, ພຣະເຈົ້າກໍໄດ້ຕອບຄໍາຖາມໄປແລ້ວ.

## 1. ວຽກງານທີ່ມີຄວາມທໍ້ໃຈ: (ໂຢຊວຍ 1:1-4)

ພຣະເຈົ້າຜູ້ດຽວທີ່ເປັນຜູ້ຈັດຕຽມໂມເຊ ເພື່ອວຽກງານໃນການນໍາພາຄົນອິສຣາເອນອອກຈາກປະເທດອີຢິບ. ລາວເຕີບໂຕຂຶ້ນໃນຂອບຂ່າຍຂອງກະສັດຟາຣາໂອ ອີກຄໍາເວົ້ານຶ່ງກໍຄືວ່າລາວເຕີບໂຕຂຶ້ນໃນວັງຂອງຜູ້ນໍາ.(ອພຍ 2:10) ໂມເຊເປັນຄົນແຂງແຮງ, ເປັນຄົນສລາດປາດເປື່ອງ ວ່ອງໄວແລະຍັງເປັນຄົນຮູບງາມໜ້າຮັກ. ໃນພຣະຄັມພີໃໝ່ ຍັງໄດ້ກ່າວເຖິງໂມເຊກ່ຽວກັບການສຶກສາຂອງລາວ. (ກິຈການ 7:22) ໂມເຊໄດ້

ຮຽນຮູ້ໃນວິຊາການທຸກຢ່າງຂອງຊາວອີຢິບ ມີຄວາມສລາດປາດເປື່ອງຫລາຍໃນການເວົ້າຈາແລະການທຳງານທຸກຢ່າງ. ໂມເຊເປັນຜູ້ນຳທີ່ພຽບພ້ອມທຸກຢ່າງ.

ທັນມາອີກດ້ານນຶ່ງ, ໂຢຊວຍຖືກເຕີບໃຫຍ່ຂຶ້ນມາຈາກການເປັນຂີ້ຂ້າ, ເປັນຂ້າທາດ. ຂ້າທາດຫມາຍຄວາມວ່າບໍ່ມີທີ່ຢູ່ໃນປະເທດອີຢິບ, ບໍ່ມີຣະບຽບ, ບໍ່ມີສິ່ງຄົມອັນໃດ, ບໍ່ມີຄວາມເປັນມະນຸສທັນໃດໆ ທັງສິ້ນເລີຍ. ພວກເຂົາດຳເນີນຢູ່ໃນລະດັບຕ່ຳສຸດຂອງມະນຸດ. ພວກເຂົາບໍ່ມີສິດປາກ, ບໍ່ມີສິດຖຽງ, ແລະບໍ່ມີສິດເລືອກ. ໂດຍທົ່ວໄປແລ້ວພວກເຂົາປຽບເໝືອນສັດທີ່ຢູ່ໃນຄອກ. ສີ່ສັດຕະວັດທີ່ພວກເຂົາຕົກຢູ່ໃນຄວາມຢ້ານກົວ. ຕົກຢູ່ໃນການບໍ່ເຊື່ອໃຜທັງນັ້ນ.

ໂມເຊຍອມເປັນຫົວໜ້າກໍແບບບໍ່ເຕັມໃຈ ຮັບເອົາວຽກງານນີ້ກໍເພາະພຣະເຈົ້າເອີ້ນເອົາ (ອພຍ 4:13) ໂອຂ້າແຕ່ອົງພຣະຜູ້ເປັນເຈົ້າຂອງຂ້າພຣະອົງຂໍຊົງໂຜດໃຊ້ຜູ້ອື່ນໄປເຖີດ. ສຳລັບໂຢຊວຍແລ້ວຄົງຈະແຕກຕ່າງໂມເຊ ເພາະເພິ່ນບໍ່ໄດ້ບອກວ່າໃຊ້ຜູ້ອື່ນເຖີດ ເພິ່ນຄົງຈະເຫັນແກ່ປະຊາກອນຂອງພຣະເຈົ້າວ່າບໍ່ມີຜູ້ໃດຈະນຳພາອີກລ້ວ. ເຖິງແມ່ນເພິ່ນຈະບໍ່ໄດ້ຮັບການຝຶກຊ້ອມເໝືອນໂມເຊກໍຕາມ ແຕ່ເພິ່ນກໍໄດ້ຮ່ວມວຽກງານຄຽງບ່າຄຽງໄຫລ່ມາກັບໂມເຊຕລອດທາງ. ໂຢຊວຍຄົງຈະຄິດວ່າເຮົາຈຳເປັນຕ້ອງຮັບຜິດຊອບໃນໜ້າທີ່ນີ້.

ໃນກໍຣະນີຂອງໂຢຊວຍນີ້ ເປັນງານທີ່ໃຫຍ່ຫລາຍຄືບໍ່ແມ່ນແຕ່ນຳຄົນທັມດາເທົ່ານັ້ນ ທ່ານຍັງມີງານເພີ້ມເຕີມອີກ ຄືຕ້ອງນຳຄົນອິສຣາເອນເຂົ້າສູ່ແຜ່ນດິນຊົງສັນຍາ (ການາອານ). ຄົນການາອານເປັນຄົນທີ່ຖືກຝຶກຊ້ອມມາແລ້ວໃນທຸກດ້ານ ຈຶ່ງເປັນການຍາກຫລາຍທີ່ຈະນຳພາຄົນອິສຣາເອນເຂົ້າໄປໃນການາອານໄດ້.

## 2. <u>**ພຣະເຈົ້າຊົງໃຫ້ຄຳສັນຍາ:**</u> (ໂຢຊວຍ 1:5-9)

ພຣະເຈົ້າບໍ່ຊົງປະຖິ້ມໂຢຊວຍ, ເມື່ອພຣະອົງຊົງສັນຍາແລ້ວພຣະອົງກໍຊົງກະທຳຕາມນັ້ນ. ພຣະອົງໄດ້ໃຫ້ຄຳແນະນຳພິເສດໃຫ້ແກ່ໂຢຊວຍ:

- ຈົ່ງຂ້າມແມ່ນ້ຳຈໍແດນແລະຍຶດເອົາແຜ່ນດິນນັ້ນ (1:2)
- ຈົ່ງກ້າຫານແລະເຂັ້ມແຂງເຖີດ (1:6)
- ຈົ່ງກ້າຫານແລະເຂັ້ມແຂງ ແລະເຊື່ອຟັງກົດລະບຽບຂອງພຣະຈົ້າ (1:7)
- ຈົ່ງຕຶກຕອງພຣະບັນຍັດທັງກາງເວັນແລະກາງຄືນ ກະທຳຕາມທຸກຂໍ້ ເຈົ້າຈະຈະເຣີນ (1:8)
- ຈົ່ງເຂັ້ມແຂງແລະກ້າຫານເຖີດ ຢ່າຕົກໃຈແລະຢ້ານກົວ ເຈົ້າຢູ່ໃສພຣະເຈົ້າຊົງສະຖິດກັບເຈົ້າ (1:9)

ໂຢຊວຍຈະຕິດຕາມຄຳແນະນຳນີ້ໄດ້ຢ່າງໃດ? ຍ້ອນການສະຖິດນຳພາ ແລະການໃຫ້ພລັງຂອງພຣະເຈົ້າ.

- ທຸກບ່ອນທີ່ເຈົ້າຢຽບຕີນລົງໄປ ເຮົາຈະມອບໃຫ້ເຈົ້າ (1:3)
- ບໍ່ມີຜູ້ໃດຈະຕໍ່ສູ້ເຈົ້າໄດ້ ເຮົາຈະຢູ່ກັບເຈົ້າ ເຮົາຈະບໍ່ປະຖິ້ມເຈົ້າເລີຍ (1:5)
- ພຣະເຈົ້າຊົງສະຖິດຢູ່ກັບເຈົ້າຕລອດໄປ (1:9)

ຕາມສາຍຕາຂອງໂຢຊວຍແລ້ວ ລາວກໍບໍ່ຢາກຮັບ. ຖ້າຕາມປະສົບການທີ່ໄດ້ເຫັນຜ່ານມາກັບໂມເຊ ແລ້ວລາວມີຄວາມເຊື່ອຫລາຍ ສີ່ສິບປີໃນປ່າກັບດານຊີວິດທີ່ລາວລອດມາໄດ້ກໍຍ້ອນຄວາມເຊື່ອ. ພຣະເຈົ້າຍັງໄດ້ຢັ້ງຢືນກັບລາວວ່າ: ເຮົາຢູ່ກັບໂມເຊມາແລ້ວຢ່າງໃດເຮົາຈະຢູ່ກັບເຈົ້າຢ່າງນັ້ນ ເຮົາຈະບໍ່ປະຖິ້ມເຈົ້າເລີຍ.(ໂຢຊວຍ1:5) ຊີວິດທີ່ຜ່ານມາຂອງໂຢຊວຍ ຖ້າຈະເວົ້າແລ້ວແມ່ນບໍ່ມີຈັກເວລາທີ່ເພິ່ນຈະຫ່າງເຫີນຈາກພຣະເຈົ້າ

## 3. <u>**ຄວາມຮັບຜິດຊອບຂອງປະຊາຊົນ:**</u> (ໂຢຊວຍ 1:10-18)

ທັນທີທັນໃດ ດ້ວຍຄວາມເຊື່ອໂມເຊກໍເລີ້ມທຳງານ. ເມື່ອຮັບຄຳສັ່ງຈາກພຣະເຈົ້າແລ້ວ, ໂຢຊວຍກໍຈັດຕຽມປະຊາຊົນ (1:10) ຄືເອີ້ນຫົວໜ້າແຕ່ລະເຜົ່າ ແລ້ວກໍສັ່ງໃຫ້ຈັດຕຽມສະບຽງອາຫານຕ່າງໆ ເພື່ອຈະໄດ້ຂ້າມໄປຍຶດຄອງແຜ່ນດິນທີ່ພຣະເຈົ້າມອບໃຫ້. ສາມວັນເປັນໄປໄດ້ບໍ່ ເພາະການຈັດຕຽມນັ້ນຕ້ອງຈັດຕຽມທຸກຢ່າງ.(ໂຢຊວຍ 1:11) ໂຢຊວຍສັ່ງໃຫ້ສາມເຜົ່າຢູ່ຟາກແມ່ນ້ຳຈໍແດນຝັ່ງນີ້, ຄືເຜົ່າຣູເບັນ, ເຜົ່າກາດ, ແລະເຜົ່າມານັດເສ ໃຫ້ຢູ່ດິນແດນຝັ່ງເບື້ອງນີ້. ນີ້ເປັນຄຳສັ່ງທີ່ໂມເຊໄດ້ສັ່ງໄວ້ (1:12) ສ່ວນເຜົ່າເຮັບເຣີທຸກຄົນຕ້ອງໄດ້ໄປປະກອບສ່ວນໃນການສລອງຊັຍຊະນະ. ຄົນເຮັບເຣີທັງໝົດມີທີກາແສນນຶ່ງພັນເຈັດຮ້ອຍສາມສິບຄົນ ພຣະທັມຈົດບັນຊີ ບົດ 26:51. ໂຢຊວຍກໍໄດ້ປະກາດໃຫ້ຜູ້ຊາຍເຂົ້າປະກອບສ່ວນໃນການຕໍ່ສູ້ຄັ້ງນີ້.

ສີ່ສິບປີຜ່ານມາ ໂຢຊວຍແລະກາເລັບໄດ້ຕິດຕາມໂມເຊໃນຄວາມເຊື່ອພຣະເຈົ້າຢ່າງຈິງຈັງຕລອດມາ, ສ່ວນຄົນທັງຫລາຍທີ່ມີຄວາມຢ້ານກົວຂາດຄວາມເຊື່ອ ກໍພາກັນລົ້ມຕາຍຕາມເສັ້ນທາງ. ສ່ວນລູກຫລານຂອງພວກເຂົາທີ່ມີປະສົບການນຳພຣະເຈົ້າ ໄດ້ຮັບການຊ່ວຍເຫລືອຈາກພຣະເຈົ້າມາຕລອດທາງ ພວກເຂົາກໍມີຄວາມໄຕຣັບຕໍ່ໂມເຊແລະໂຢຊວຍ.

ຄວາມຮັບຜິດຊອບຂອງຄົນລຸ້ນຕໍ່ມາຈຶ່ງໄດ້ເຫັນຄວາມເຊື່ອຂອງພວກເຂົາ ໂດຍການເຫັນໄດ້ໃນການປະຕິບັດຕາມຄຳສັ່ງຂອງໂຢຊວຍ. ໂຢຊວຍ 1:16 ເຂົາທັງຫລາຍຈຶ່ງຕອບໂຢຊວຍວ່າ ສິ່ງສາຣະພັດຊຶ່ງທ່ານບັນຊາແກ່ພວກເຮົາ ເຮົາຈະກະທຳຕາມ ທ່ານຈະໃຫ້ພວກເຮົາໄປໃສ ເຮົາຈະໄປ. ໂຢຊວຍ 1:17-18 ເຮົາເຊື່ອຟັງໂມເຊໃນເຣື່ອງທັງປວງຢ່າງໃດ ເຮົາຈະເຊື່ອຟັງທ່ານຢ່າງນັ້ນ ຂໍພຽງວ່າພຣະເຈົ້າຂອງທ່ານຊົງສະຖິດຢູ່ກັບທ່ານ ດັ່ງທີ່ພຣະອົງຊົງສະຖິດຢູ່ກັບໂມເຊກໍແລ້ວກັນ. ຜູ້ໃດທີ່ຂັດຂືນຄຳບັນຊາຂອງທ່ານ ແລະບໍ່ເຊື່ອຟັງຖ້ອຍຄຳຂອງທ່ານ ບໍ່ວ່າທ່ານຈະບັນຊາເຂົາຢ່າງໃດ ຜູ້ນັ້ນຈະຕ້ອງເຖິງຕາຍ ຂໍພຽງໃຫ້ເຂັ້ມແຂງແລະກ້າຫານເຖີດ.

## <u>**ຄວາມໝາຍແລະພາກປະຕິບັດ**</u>

ເມື່ອມີການປ່ຽນແປງໃນຊີວິດໂດຍຕັ້ງໃຈຫລືບໍ່ຕັ້ງໃຈກໍຕາມ, ຈະເປັນການສ່ວນຕົວ ຫລືເປັນຊີວິດຄຣິສຕຽນກໍຕາມ ຊຶ່ງເຮັດໃຫ້ການເດີນທາງມີຄວາມຫຍຸ້ງຍາກ.

ພຣະເຈົ້າໄດ້ໃຫ້ຄໍາແນະນໍາແກ່ໂຢຊວຍໃນບົດຮຽນວັນນີ້ ເປັນບົດຮຽນທີ່ດີສໍາລັບຄຣິສຕຽນຂອງພວກເຮົາ. ຄວາມເຂັ້ມແຂງ, ຄວາມກ້າຫານ, ຄວາມເຊື່ອໝັ້ນແມ່ນມາຈາກພຣະເຢຊູຄຣິດເປັນຜູ້ມອບໃຫ້ແກ່ພວກເຮົາ. ພຣະວິນຍານບໍຣິສຸດອີງກ້າຫານຈະຊ່ວຍພວກເຮົາຂັບໄລ່ ຄວາມຢ້ານກົວ ແລະຄວາມທໍ້ຖອຍໃຫ້ອອກໄປຈາກພວກເຮົາ. ພຣະເຢຊູໄດ້ສັນຍາແກ່ພວກເຮົາວ່າ ເຮົາຈະບໍ່ປະຖິ້ມເຈົ້າຈັກເທື່ອ.

**<u>ຄໍາຖາມ:</u>**

1. ໄລຍະທີ່ຢູ່ໃນປ່າກັນດານ, ຄົນອິສຣາເອນຈະມັກຕໍ່ສູ້ໂມເຊຢູ່ສເມີ. ໃນສມັຍຂອງໂຢຊວຍເດ ພວກເຂົາເຮັດຢ່າງໃດ? ໂຢຊວຍ 1:17

2. ພຣະເຈົ້າໄດ້ໃຫ້ຄໍາສັນຍາແກ່ໂຢຊວຍຢ່າງໃດແດ່ ຢູ່ໃນໂຢຊວຍ 1:3;5 ແລະ 9. ຖ້າວ່າຢູ່ໃນສມັຍນີ້ ພວກເຮົາຈະຈັດຕຽມຫຍັງແດ່?

3. ທ່ານຄິດຢ່າງໃດໃນຄໍາເຕືອນທີ່ວ່າ ຈົ່ງກ້າຫານແລະເຂັ້ມແຂງ ຊໍ້າໆ ຫລາຍເທື່ອ. ໃນກໍຣະນີໃດທີ່ຄຣິສຕຽນຕ້ອງການຫລາຍທີ່ສຸດ?

4. ຜູ້ທີ່ມີຄວາມເຊື່ອທຸກວັນນີ້ ຈະສໍາແດງວ່າຕົນເອງເຊື່ອໃນຄໍາສັນຍາຂອງພຣະເຈົ້າຢ່າງໃດ? ແມ່ນຫຍັງທີ່ສະແດງອອກວ່າຕົນເອງເຊື່ອຟັງ?

*ບພ*

# ບົດຮຽນທີ 2
# ຄ້າຍຄືພຣະເອກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຊວຍ ບົດທີ 2

**ພູມຫລັງຂອງພຣະຄັມພີ:** ໂຢຊວຍ ບົດທີ 2

**ຈຸດສຳຄັນສຳລັບບົດຮຽນນີ້:** ຄວາມກ້າທີ່ຈະເຊື່ອສາມາດເຫັນໄດ້ໃນຄົນຄືຊິບໍ່ກ້າ, ແລະສາມາດເຫັນໄດ້ໃນສະຖານທີ່ໆບໍ່ອາດຄາດຄິດໄວ້ກ່ອນ

**ຄຳຖາມເພື່ອການຄົ້ນຄວ້າ:** ເຣື່ອງລາວຂອງນາງຣາຮັບ ສອນພວກເຮົາກ່ຽວກັບການກ້າທີ່ຈະເຊື່ອແມ່ນຄືແນວໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະໄດ້ເຫັນການຕິລາຄາຂອງພຣະເຈົ້າ ວ່າຢູ່ນຳຜູ້ໃດແລະຢູ່ໃສທີ່ພຣະເຈົ້າຈຶ່ງຈະສຳແດງອອກ.

## ຄຳນຳ

ເປັນເວລາສິບສີ່ປີທີ່ຂ້າພະເຈົ້າແລະສາມີ ໄດ້ໄປທຳງານຊ່ວຍວຽກທີ່ປະເທດທີ່ປົກຄອງດ້ວຍລະບອບຄອມມູນິສ. ຕັ້ງແຕ່ເລີ້ມເຂົ້າມາຢູ່ໃນປະເທດນີ້ ພວກເຮົາກໍຮູ້ສຶກຕົວເອງວ່າເປັນຄຣິສຕຽນຢູ່ຕລອດ. ມີມື້ນຶ່ງພວກເຮົາໄດ້ໄປຮັບທານອາຫານແລງຮ່ວມກັບທ່ານເຈົ້າເມືອງ. ພວກເຮົາແປກປລາດໃຈຫລາຍເມື່ອທ່ານ ເຈົ້າເມືອງກ່າວຂຶ້ນວ່າ ຂ້າພະເຈົ້າເຄີຍໄດ້ຍິນວ່າຄຣິສຕຽນຕ້ອງອະທິຖານກ່ອນກິນເຂົ້າ. ທ່ານບອກຂ້າພະເຈົ້າວ່າ ທ່ານເປັນຄຣິສຕຽນ ຂ້າພະເຈົ້າບໍ່ເຄີຍເຫັນທ່ານອະທິຖານຈັກເທື່ອກ່ອນຈະກິນເຂົ້າ. ສາມີຂອງຂ້າພະເຈົ້າຕອບທ່ານເຈົ້າເມືອງວ່າ ພວກເຮົາອະທິຖານຢູ່ໃນໃຈ ພຣະເຈົ້າຂອງພວກເຮົາເຂົ້າໃຈເຖິງຄວາມຄິດ. ຈັກປະມານອຶດໃຈນຶ່ງ ທ່ານເຈົ້າເມືອງກໍກ່າວວ່າ ຖ້າຢ່າງນັ້ນໃຫ້ເຈົ້າອະທິຖານດັງ ໃຫ້ເຮົາໄດ້ຍິນນຳແດ່ ວ່າເຈົ້າຈະເວົ້າຫຍັງແດ່. ພໍໄດ້ໂອກາດສາມີຂອງຂ້າພະເຈົ້າກົ້ມຫົວແລະອະທິຖານ ທຸກຄົນກໍເຮັດຕາມ. ສັຣເສີນພຣະເຈົ້າຜູ້ຊົງສ້າງ ແລະເປັນຜູ້ປະທານຂອງດີທຸກຢ່າງ. ຂອບພຣະຄຸນອາຫານ ແລະທູນຂໍໃຫ້ພຣະອົງຊົງອວຍພຣະພອນທ່ານເຈົ້າເມືອງພ້ອມດ້ວຍຄະນະທຸກໆຄົນ ແລະຄອບຄົວດ້ວຍ.

ເມື່ອອະທິຖານສຸດແລ້ວ ທ່ານເຈົ້າເມືອງກໍກ່າວວ່າ ຄຳອະທິຖານນີ້ໃຊ້ໄດ້ ຕໍ່ນີ້ໄປເວລາພວກເຮົາກິນເຂົ້າຮ່ວມກັນ ໃຫ້ເຈົ້າອະທິຖານທຸກຄັ້ງ. ສາມີຂອງຂ້າພະເຈົ້າກໍປລາດໃຈໃນການຈັດຕຽມຂອງພຣະເຈົ້າໃນຄັ້ງນີ້. ພວກເຮົາທັງຫລາຍກໍຮູ້ກັນແລ້ວວ່າ ຖ້າໃຜໄປກ່າວຂອບຄຸນສິ່ງໃດກໍຕາມ ໂດຍບໍ່ໄດ້ຮັບອະນຸຍາດ ຈະຕ້ອງຖືກລົງໂທດ, ແຕ່ພຣະເຈົ້າໄດ້ນຳໜ້າພວກເຮົາໄປຢູ່ແລ້ວ ພຣະອົງໄດ້ຈັດຕຽມຫົວໃຈໄວ້ລໍຖ້າພວກເຮົາຢູ່ແລ້ວເໝືອນດັ່ງນັກສືບຂອງອິສຣາເອນສອງຄົນ.

## 1. ການປ່າວປະກາດໃນທີ່ກັນດານ: (ໂຢຊວຍ 2:1-7)

ໃນສມັຍຂອງໂຢຊວຍ, ບໍ່ມີລະບົບການເມືອງທີ່ຈະໄກ່ເກັ່ງໃຫ້ຄົນເຂົ້າຫາກັນໄດ້. ກຸ່ມຊາວນາ, ກຸ່ມໝູ່ບ້ານ, ກຸ່ມທະຫານ, ກຸ່ມພວກປົກຄອງ ແຕ່ລະກຸ່ມກໍປົກຄອງກຸ່ມໃຜກຸ່ມລາວ. ສ່ວນໂຢຊວຍກໍທຳງານຮ່ວມກັບພວກນັກສືບ ແລະກໍໄດ້ໃຊ້ຊາຍສອງຄົນຈາກເມືອງຊິດທິມ ເພື່ອໄປເປັນຄົນສອດແນມ.(2:1) ແລະໂຢຊວຍເອງກໍໄດ້ປະຊຸມກັບບັນດາຜູ້ທີ່ມີຄວາມຮັບຜິດຊອບທັງຫລາຍ. ຄົນສອດແນມທັງສອງກໍໄດ້ເຂົ້າໄປໃນເຮືອນຂອງນາງຣາຮັບ (ຊຶ່ງແປວ່າ ໂສເພນີ). ເຮືອນຂອງນາງຢູ່ໃກ້ໆກັບກຳແພງເມືອງເຢຣິໂກ, ພວກສອດແນມເລືອກໃຊ້ເຮືອນຫລັງນີ້ ພວກເຂົາອາດຈະມີເຫດຜົນພິເສດຂອງເຂົາ. ເມື່ອນາງເຫັນຊາຍສອງຄົນ ລາວກໍຮູ້ທັນທີວ່າພວກເຂົາເປັນຄົນອິສຣາເອນ.

ກະສັດຂອງເມືອງເຢຣິໂກອາດຈະໄດ້ຮັບລາຍງານວ່າມີຄົນອິສຣາເອນເຂົ້າມາສອດແນມຢູ່ໃນເມືອງ ຈຶ່ງສັ່ງໃຫ້ທະຫານອອກໄປກວດກາທີ່ບ້ານຂອງຣາຮັບ . ເມື່ອທະຫານຂອງກະສັດເມືອງເຢຣິໂກມາເຄາະປະຕູບ້ານຂອງນາງ, ນາງຈຶ່ງປະເຊີນກັບການຕັດສິນໃຈຢ່າງໃຫຍ່ຫລວງ. ຖ້າທະຫານຫາກຈັບໄດ້ວ່ານາງເປັນຄົນຊຸກເຊື່ອງຄົນອິສຣາເອນ ນາງກໍຈະຕ້ອງຖືກໂທດເຖິງຂັ້ນປະຫານຊີວິດ. ແຕ່ຣາຮັບຮູ້ເຖິງປະວັດການສູ້ຮົບຂອງຄົນອິສຣາເອນວ່າເປັນຜູ້ສູ້ຮົບທີ່ເກັ່ງຢ່າງໃດໆກໍຕາມ ນາງຈຶ່ງຕັດສິນໃຈຊ່ວຍສອດແນມທັງສອງຄົນ. ພວກເຂົາໄດ້ມາທີ່ນີ້ແທ້ແຕ່ພວກເຂົາກໍອອກໄປແລ້ວ ຈົ່ງອອກໄປຕາມພວກເຂົາບາງທີພວກທ່ານອາດຈະຕາມທັນ.

## 2. <u>ສິ່ງທີ່ບໍ່ຄາດຫວັງເກີດຂຶ້ນ:</u> (ໂຢຊວຍ 2:8-21)

ພວກທະຫານຂອງກະສັດເມືອງເຢຣິໂກກໍເຊື່ອ ແລ້ວກໍຕາມພວກເຂົາໄປ. ແທ້ຈິງແລ້ວນາງໄດ້ຊຸກເຊື່ອງນັກສືບໄວ້ເທິງຫລັງຄາເຮືອນຂອງນາງ. ນາງຈຶ່ງຂຶ້ນໄປຫາພວກເຂົາແລະກ່າວວ່າ ຂ້າພະເຈົ້າຮູ້ແລ້ວວ່າພຣະເຈົ້າໄດ້ປະທານແຜ່ນດິນນີ້ໃຫ້ແກ່ພວກທ່ານ, ພວກເຮົາຢ້ານກົວພວກທ່ານຫລາຍ, ພວກເຮົາເຄີຍໄດ້ຍິນເຣື່ອງທະເລແດງແຫ້ງໄປຕໍ່ໜ້າພວກທ່ານ… (2:9-10).

ສັຕະວັດຕໍ່ສັຕະວັດສືບໆມາ ພຣະນາມຂອງພຣະເຈົ້າໂດ່ງດັງທັງຣິດອຳນາດແລະເດຊານຸພາບ ໃຜໆກໍຮູ້ວ່າພຣະເຈົ້າຂອງອິສຣາເອນເປັນທີ່ເກງຂາມ. ປະເທດອີຢິບເຄີຍເປັນປະເທດທີ່ມີອຳນາດ ມີກຳລັງເຂັ້ມແຂງມີພຣະເຈົ້າຫລາຍກວ່າສອງພັນພຣະເຈົ້າ(ພຣະເຈົ້າປອມ) ກໍຍັງເສັຽຊັຍໃຫ້ແກ່ກອງທັບຂອງຄົນອິສຣາເອນ ເຫດຜົນຂອງນາງຣາຮັບກໍຄືວ່າຕ້ອງເຂົ້າຂ້າງຝ່າຍທີ່ຈະມີຊັຍຊະນະໄວ້ກ່ອນ. ເພາະວ່າຄົງຈະບໍ່ມີຊົນຊາດໃດອີກແລ້ວທີ່ຈະເອົາຊະນະຊົນຊາດອິສຣາເອນ. ຣາຮັບຍອມຮັບວ່າພວກເຂົາຢ້ານກົວຊາວອິສຣາເອນຫລາຍ.

ການຕົກລົງລະຫວ່າງຣາຮັບແລະສອດແນມອິສຣາເອນຄືບໍ່ໃຫ້ບອກຜູ້ໃດ ເຈົ້າແລະຄອບຄົວທັງໝົດຂອງເຈົ້າຈະປອດພັຍ. ນາງຣາຮັບກໍຮັບປາກທັນທີ. (2:14,20-21) ແລະຍັງໄດ້ບອກເຖິງທາງຫລົບໜີໄປ ເພາະ

ຢ້ານວ່າຈະມີຜູ້ໄລ່ຕາມມທັນ. ສອດແນມທັງສອງຈຶ່ງກ່າວຕໍ່ນາງອີກວ່າ ພວກເຮົາຈະບໍ່ຜິດຄໍາສັນຍາ ທີ່ເຮົາໄດ້ໃຫ້ແກ່ເຈົ້າ.

ພຣະເຈົ້າໄດ້ເຂົ້າມາໃນເຢຣິໂກກ່ອນທີ່ພວກສອດແນມຈະເຂົ້າມາເຖິງ. ພວກສອດແນມບໍ່ໄດ້ມີແຜນໄວ້ລ່ວງໜ້າວ່າຈະໄປຫາຜູ້ຊ່ວຍ ຫລືໄປຫາຣາຮັບເພື່ອເປັນຜູ້ຊ່ວຍ. ພຣະເຈົ້າໄດ້ເຂົ້າມາຕຽມຫົວໃຈຂອງຣາຮັບຢູ່ກ່ອນແລ້ວ, ເມື່ອເວລາມີໂອກາດພຣະເຈົ້າກໍປ່ອຍຄວາມເຊື່ອເຂົ້າສູ່ຈິດໃຈຂອງນາງ, ເມື່ອນາງຊັ່ງຊາຕິຣາຄາກັບພຣະເຈົ້າແລ້ວ, ນາງກໍຮູ້ວ່າພຣະເຈົ້າຈະຊ່ວຍນາງໃຫ້ລອດຈາກຄວາມຕາຍໄດ້.

ໃນທີ່ສຸດນາງຣາຮັບກໍຮັບເອົາພຣະເຈົ້າຢ່າງໝົດຈິດໝົດໃຈ ແມ່ນແຕ່ຊີວິດຂອງນາງ ນາງກໍມີຄວາມກ້າສາມາດໃຫ້ພຣະເຈົ້າໄດ້. ນາງຍອມສະລະທຸກຢ່າງແມ່ນແຕ່ການປົກຄອງທີ່ນາງອາສັຍຢູ່ນາງກໍຍອມສະລະໄດ້. ພວກເຮົາໄດ້ເຫັນຄວາມເຊື່ອທີ່ຍິ່ງໃຫຍ່ຂອງນາງທີ່ພຣະເຈົ້າຊົງພໍພຣະທັຍ.

## 3. <u>ກັບມາລາຍງານດ້ວຍຄວາມກ້າຫານ:</u> (ໂຢຊວຍ 2:22-24)

ເປັນທີ່ໜ້າແປກໃຈ ທີ່ໂຢຊວຍຄິດໄວ້ລ່ວງໜ້າກ່ອນວ່າຈະຫຍຸ້ງຍາກ ແລະຈະວາງແຜນຢ່າງໃດທີ່ຈະເອົາຊະນະໄດ້. ເພາະວ່າເວລາຄິດຄືນຫລັງຕອນທີ່ລາວເປັນນັກສືບ ລາວກໍເຫັນບັນຫາຢູ່ແລ້ວ. ປະຊາຊົນທັງຫລາຍກໍເຄີຍຈົ່ມເຄີຍເວົ້າໃຫ້ລາວໃນເວລາທີ່ລາວກັບມາຈາກການເປັນສອດແນມ. ຄົນອິສຣາເອນທີ່ຂາດຄວາມເຊື່ອກໍຢາກກັບຄືນຫລືບໍ່ກໍບໍ່ຢາກເດີນຕໍ່ໄປອີກແລ້ວ. ປະຊາຊົນພາກັນຢ້ານກົວຄົນການາອານ ເພາະຄວາມໃຫຍ່ຂອງເຂົາ ຈົນບໍ່ເຫັນຄວາມຍິ່ງໃຫຍ່ຂອງພຣະເຈົ້າຂອງຕົນເອງ.

ເມື່ອມາເຖິງຕອນນີ້ ປວັດສາດໄດ້ປ່ຽນໄປ. ສີ່ສິບປີທີ່ຜ່ານໄປ ໂຢຊວຍເຄຍໜູນໃຈຄົນອິສຣາເອນມາຕລອດວ່າຈົ່ງເຊື່ອພຣະເຈົ້າ ແລະໄປຍຶດຄອງເອົາດິນແດນນັ້ນເຖີດ. ປະຊາຊົນທັງຫລາຍເຄີຍຕໍ່ວ່າຕໍ່ຂານ ແລະຍັງໄດ້ກ່າວວ່າຈະຄວ່າງກ້ອນຫີນໃສ່ໃຫ້ຕາຍ.(ຈົດບັນຊີ 14:1-10) ບັດນີ້ມາເຖິງສອດແນມສອງຄົນນີ້ ເມື່ອພວກເຂົາກັບມາເຖິງໂຢຊວຍແລ້ວ ພວກເຂົາກໍລາຍງານທຸກຢ່າງໃຫ້ແກ່ເພິ່ນ. ພຣະເຈົ້າຊົງມອບແຜ່ນດິນນັ້ນທັງໝົດໃຫ້ພວກເຮົາແລ້ວ. (2:24) ຊາວບ້ານຊາວເມືອງຢູ່ທີ່ນັ້ນເຂົາກໍຢ້ານກົວພວກເຮົາ ແລະເຂົາກໍເປັນຝ່າຍເຮົາໝົດແລ້ວ.

## <u>ຄວາມໝາຍແລະພາກປະຕິບັດ</u>

ຖ້າເບິ່ງພື້ນຖານຄວາມກ້າຫານຂອງຣາຮັບແລ້ວ ເປັນການສ່ຽງຊີວິດຕົນເອງເພື່ອພຣະເຈົ້າ, ເພື່ອສອດແນມ, ເພື່ອວຽກງານຂອງພຣະເຈົ້າ. ດ້ວຍຄວາມເຊື່ອນາງຈຶ່ງປະລະທຸກຢ່າງເພື່ອຊ່ວຍຄົນອິສຣາເອນ. ບໍ່ແມ່ນຂອງງ່າຍໆ ທີ່ຈະປະລະສິ່ງໃດສິ່ງນຶ່ງທີ່ພວກເຮົາເຊື່ອຖືມາດົນແລ້ວ.

ແຕ່ພວກເຮົາຕ້ອງເຂົ້າໃຈຄວາມຈິງທີ່ຜ່ານມາ ອັນໃດເປັນຄວາມຈິງແທ້ໆ ຊັ່ງຊາຕີລາຄາວ່າອັນໃດຈະຊະນະໂລກ ແລະອັນໃດຈະນຳເຮົາໄປເຖິງເປົ້າໝາຍ.

**<u>ຄຳຖາມ:</u>**

1. ເປັນຫຍັງໂຢຊວຍຈຶ່ງສົ່ງສອດແນມສອງຄົນໄປສືບໃນເມືອງເຢຣີໂກ ທັງໆທີ່ພຣະເຈົ້າສັນຍາວ່າຈະໃຫ້ຊັຍຊະນະຢູ່ແລ້ວ?

2. ແມ່ນຫຍັງທີ່ເຮັດໃຫ້ນາງຣາຮັບຕັດສິນໃຈຊ່ວຍສອດແນມສອງຄົນ? ແມ່ນຫຍັງເປັນສິ່ງທີ່ບັນດົນໃຈໃຫ້ທ່ານຮັບເຊື່ອພຣະເຢຊູ?

3. ຣາຮັບເຊື່ອພຣະເຈົ້າ ກໍເພາະວ່າລາວເຄີຍໄດ້ຍິນເຣື່ອງພລັງອຳນາດຂອງພຣະເຈົ້າ. "ໂທມາເອີຍ, ເພາະທ່ານໄດ້ເຫັນເຮົາທ່ານຈຶ່ງເຊື່ອ ຜູ້ທີ່ບໍ່ເຫັນເຮົາແຕ່ເຊື່ອກໍເປັນສຸກ" ໂຢຮັນ 20:29 ທ່ານຈະອະທິບາຍຖ້ອຍຄຳຕອນນີ້ວ່າຢ່າງໃດ?

4. ເຮົາຍັງຕ້ອງການອັນໃດອີກນອກຈາກຄວາມກ້າຫານແລ້ວ ທີ່ຈະເຊື່ອພຣະເຈົ້າ?

5. ຍັງມີສັນຍານອັນໃດ ທີ່ພວກເຮົາຈະຮູ້ວ່າພຣະເຈົ້າຊົງຈັດຕຽມໃຫ້ພວກເຮົາຮັບເອົາພຣະທັມຂອງພຣະເຈົ້າ?

*ບພ*

# ບົດຮຽນທີ 3
# ທຸກຄົນມີພາກສ່ວນ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຢຊວຍ 3:5-17; 4:14-24

**ພູມຫລັງຂອງພຣະຄັມພີ:** ໂຢຊວຍ 3-4

**ຈຸດສໍາຄັນຂອງບົດຮຽນນີ້:** ການຂ້າມກໍາແພງຮ່ວມກັບພຣະເຈົ້າຕ້ອງອາສັຍບາດກ້າວແຫ່ງຄວາມເຊື່ອ.

**ຄໍາຖາມເພື່ອການຄົ້ນຄວ້າ:** ມີກໍາແພງອັນໃດທີ່ຂ້າພະເຈົ້າຕ້ອງຂ້າມໄປນັ້ນ ທີ່ເພິ່ງບາດກ້າວແຫ່ງຄວາມເຊື່ອໃນພຣະເຈົ້າ?

**ຈຸດປະສົງຂອງບົດຮຽນ:** ເພື່ອສະແດງເຖິງຄວາມເຊື່ອໃນພຣະເຈົ້າວ່າຕົນເອງຈະເອົາຊະນະບັນຫາໃນຊີວິດໄດ້ຢ່າງໃດ.

**ເພື່ອຄວາມເຂົ້າໃຈ:** ພຣະເຈົ້າໄດ້ແຍກນໍ້າທະເລແດງໃນສມັຍກ່ອນ ແລະພຣະເຈົ້າຍັງສັນຍາວ່າຈະຊ່ອຍພວກອິສຣາເອນແລະຈະຢູ່ນໍາເພື່ອຊ່ອຍແຍກແມ່ນໍ້າຢໍດາເນໃນສມັຍນີ້.

## ບົດນໍາ

ລູກເຂີຍຂອງຂ້າພະເຈົ້າມີບັນຫາກັບການຮຽກເອີ້ນຈາກພຣະເຈົ້າໃຫ້ເປັນນັກບິນປະຈໍາຫນ່ວຍປະກາດ ເພາະລາວເປັນຄົນຍັງໜຸ່ມເຮັດວຽກເປັນນັກວິຊາການໄດ້ເງິນດີ. ການທີ່ຈະປະງານດີອັນໜັ້ນຄົງໄປເຂົ້າໂຮງການບິນນັ້ນຕ້ອງອາສັຍຄວາມເຊື່ອ. ລາວມີຄໍາຖາມວ່າໃນເວລາໄປຮຽນນັ້ນຈະເອົາຫຍັງມາລ້ຽງຄອບຄົວ? ຖ້າຈົບໄປເປັນນັກບິນປະຈໍາຫນ່ວຍປະກາດແລ້ວລາວຈະສາມາດຮຽນພາສາແລະທໍານຽມຕ່າງໆໄດ້ບໍ່? ພວກລູກຈະດີໃຈນໍາໃນການຕັນສິນໃຈຂອງລາວບໍ່?

ລູກສາວຂ້າພະເຈົ້າຜູ້ເຄີຍມີຊີວິດໃນຖານະເປັນລູກສາສນາທູດໄດ້ເປັນຄົນໜູນໃຈຜູ້ເປັນສາມີໃຫ້ຕອບການຮຽກເອີ້ນຈາກພຣະເຈົ້າ ໃນທີ່ສຸດຜູ້ເປັນສາມີກໍຍອມຮັບແລະມອບຊີວິດໄວ້ພາຍໃນການຄຸ້ມຄອງຂອງພຣະເຈົ້າ ແລະພວກເຂົາກໍໄດ້ເຫັນການນໍາພາແລະເບິ່ງແຍງຈາກພຣະເຈົ້າຢ່າງປລາດໃຈ. ຫລັງຈາກການຕຽມຕົວເປັນເວລາຫ້າປີ ພວກເຂົາກໍໄດ້ໄປຮັບໃຊ້ໃນປະເທດອິນໂດນີເຊັຽ.

ການປ່ຽນແປງນີ້ເຫັນວ່າມັນເປັນການຍາກຫລາຍ. ພວກອິສຣາເອນໄດ້ລໍຖ້າເຖິງສີ່ສິບປີຈຶ່ງໄດ້ຮັບດິນແຫ່ງພຣະສັນຍາ. ແມ່ນແທ້ການເຂົ້າໄປຍຶດເອົາແຜ່ນດິນນັ້ນເຕັມໄປດ້ວຍພັຍອັນຕະລາຍນາໆປະການ ສິ່ງນີ້ຕ້ອງອາສັຍຄວາມເຊື່ອເພື່ອຈະເລີ້ມກ້າວທໍາອິດ. ພຣະເຈົ້າໄດ້ເຮັດໃຫ້ພວກອິສຣາເອນສາມາດໄວ້ວາງໃຈໃນພຣະອົງໄດ້ຍ້ອນພລັງອັນຍິ່ງໃຫຍ່ແລະຮອບຮູ້ທຸກດ້ານຂອງພຣະເຈົ້ານັ້ນເອງ.

## 1. ລໍຖ້າສິ່ງປະເສີດຈະເກີດຂຶ້ນດ້ວຍຄວາມຫວັງ: (ໂຢຊວຍ 3:5-13)

ພຣະເຈົ້າບໍ່ຢາກໃຫ້ພວກອິສຣາເອນເຂົ້າໃຈວ່າການຍຶດເອົາແຜ່ນດິນການາອານນີ້ບໍ່ແມ່ນທາງດ້ານທະຫານແຕ່ແມ່ນດ້ານຄວາມເຊື່ອ ເພາະພຣະເຈົ້າເປັນຜູ້ບັ່ງການແລະນໍາໄປເຖິງຊັຍຊະນະ ສ່ວນໜ້າທີ່ຂອງພວກອິສຣາເອນຄືຕ້ອງໄວ້ວາງໃຈ ຕິດຕາມ ແລະເຊື່ອໝັ້ນໃນພຣະອົງ. ໃນທີ່ສຸດໂຢຊວຍໄດ້ເລີ່ມຕົ້ນເຮັດໃຫ້ເຫດການນັ້ນເປັນພິທີສໍາຄັນໃນຊີວິດຂອງຊາດອິສຣາເອນ.

ພິທີຊໍາຣະລ້າງໄດ້ຊ່ວຍໃຫ້ປະຊາຊົນເຂົ້າໃຈເຖິງສິ່ງທີ່ພຣະເຈົ້າເຮັດ (ຈົດບັນຊີ 11:18, ໂຢຊວຍ 7:13, 1 ຊາມູເອນ 16:5, 1 ຂ່າວຄາວ 15:12, 2 ຂ່າວຄາວ 29:5 ແລະ 35:6). ພິທີອາບນໍ້າທໍາຄວາມສະອາດ, ເວັ້ນຈາກເພດສໍາພັນ ແລະນຸ່ງເຄື່ອງສະອາດເປັນການຕຽມໃຈເພື່ອຮັບໃຊ້ພຣະເຈົ້າ. ພາສາເຮັບເຣີໃຊ້ໃນເຣື່ອງນີ້ແມ່ນ (ຄາດາສ) ເຮັດໃຫ້ຕົນເອງບໍຣິສຸດ ເພື່ອຈະເຂົ້າໄປຊ້ອງພຣະພັກຂອງພຣະເຈົ້າ. ຜົນຂອງການຊໍາຣະລ້າງນີ້ແມ່ນອຸປະນິສັຍກ່ອນເຂົ້າໄປໃນສະຖານບ່ອນນະມັສການ.

ແມ່ນແທ້ພຣະເຈົ້າຕ້ອງການໃຫ້ພວກອິສຣາເອນຂ້າມນໍ້າຢໍດາເນໄປຍັງເມືອງການາອານ ແຕ່ຄໍາຖາມມີຢູ່ວ່າດ້ວຍວິທີໃດ? ໃນຍາມນັ້ນເປັນລະດູໃບໄມ້ປົ່ງນໍ້າຂຶ້ນຖ້ວມຝັ່ງເພາະຫິມະໄດ້ເປື່ອຍຈາກພູເຂົາ ມີດິນເຈື່ອນເຮັດໃຫ້ນໍ້າຢໍດາເນໄຫລແຮງ ແລະເປັນອັນຕະລາຍ ໂດຍສະເພາະຕໍ່ພວກຜູ້ຍິງແລະເດັກນ້ອຍ. ໂດຍເຫດນີ້ໂຢຊວຍໄດ້ເອີ້ນໃຫ້ປະຊາຊົນຟັງຄໍາສັ່ງຂອງພຣະເຈົ້າ ມີຫີບພຣະສັນຍາຊຶ່ງເປັນຕົວແທນວ່າພຣະເຈົ້າຊົງສະຖິດຢູ່ນໍາ. ບອກໃຫ້ປະຊາຊົນຢູ່ຫ່າງດ້ວຍຄວາມຢໍາເກງ (ໂຢຊວຍ 3:4), ປະຊາຊົນຕ້ອງຍ່າງນໍາຫລັງພວກປະໂຣຫິດທີ່ຫາມຫີບພຣະສັນຍານັ້ນ. ໂຢຊວຍບອກປະຊາຊົນວ່າພຣະເຈົ້າຈະເຮັດໃຫ້ນໍ້າຢຸດເໝືອນຢ່າງທີ່ພຣະອົງໄດ້ແຍກນໍ້າທະເລແດງ 40 ປີຜ່ານມານັ້ນ. ພລັງຢ່າງນີ້ຈະເຮັດໃຫ້ພວກການາອານຢ້ານແລະພ່າຍໜີອອກໄປ ແລະຍອມມອບແຜ່ນດິນໃຫ້ພວກອິສຣາເອນຄອບຄອງ.

ຄໍາເວົ້າເຖິງພຣະເຈົ້າໃນບົດ 3:13 ໂຢຊວຍໄດ້ເຕືອນວ່າພຣະອົງເປັນພຣະເຈົ້າຂອງໂລກຈັກກະວານ ເມື່ອພວກອິສຣາເອນອ່ານພຣະຄັມພີຍາມໃດຮອດຄໍາເວົ້າວ່າ "ພຣະເຢໂຮວາ" ພວກເຂົາໄດ້ສັບປ່ຽນເປັນ "ພຣະອົງເຈົ້າ" (ອາໂດນາຍ) ເພາະເຫັນແກ່ພຣະນາມນັ້ນ. ແລະພວກແປພຣະຄັມພີກໍຖືເອົາທໍານຽມນັ້ນເໝືອນກັນ.

ຄໍາເວົ້າຂອງພຣະອົງທີ່ໃຊ້ເປັນໜັງສືໂຕໃຫຍ່ ໄດ້ຖືກສັບປ່ຽນຈາກຄໍາເວົ້າພຣະເຢໂຮວາໃນພຣະຄັມພີເດີມເປັນພາສາອັງກິດ. ສ່ວນຄໍາເວົ້າຂອງພຣະອົງທີ່ຂຽນເປັນໂຕໜັງສືໂຕນ້ອຍອາດໝາຍເຖິງຜູ້ປົກຄອງຫລືເປັນເຈົ້າຂອງ ເພາະແຜ່ນດິນການາອານເປັນຂອງພຣະເຈົ້າ ບໍ່ແມ່ນພວກຢູ່ກ່ອນນັ້ນ ແຕ່ແມ່ນຂອງພຣະເຈົ້າປະທານໃຫ້ພວກອິສຣາເອນເປັນເຈົ້າຂອງ.

## 2. ຂ້າມນໍ້າໄປຢ່າງອັສຈັນ: (ໂຢຊວຍ 3:14-17)

ເປັນໜ້າສົນໃຈນໍາຄວາມຄິດຂອງພວກປະໂຣຫິດເວລາຍ່າງຂ້າມນໍ້າຢໍດາເນໄປ ພວກເຂົາອາດຄິດຢ້ານວ່າຈະພະລາດລົ້ມຖິ້ມຫີບແຫ່ງພຣະສັນຍາຊຶ່ງບັນທຸກພຣະບັດຍັດ (ອພຍ 40:20), ເຕົ້າຄໍາໃສ່ມານາ ແລະໄມ້ເທົ້າຂອງອາໂຣນ (ຮຣ 9:4). ໃນຜ້າເຕັນເປັນບ່ອນພຣະເຈົ້າສະຖິດຢູ່ເທິງຝາປົກຫີບພຣະສັນຍາ ພຣະເຈົ້າໄດ້ສັ່ງໄວ້ກັບໂມເຊລະຫວ່າງເຊຣູບິມທັງສອງ (ຈບຊ 7:89, 1 ຊມອ 4:4). ຫີບພຣະສັນຍາໝາຍເຖິງການສະຖິດຂອງພຣະເຈົ້າຕໍ່ພວກອິສຣເອນ ຊຶ່ງເຮັດໃຫ້ພວກເຂົາມີຄວາມຫວັງ. ການຫາມຫີບພຣະສັນຍາ

ມີຄວາມຮັບຜິດຊອບຫລາຍ ເຖິງແມ່ນພວກປະໂຣຫິດມີຄວາມຢ້ານໃນໃຈແຕ່ເມື່ອພວກເຂົາໄດ້ຍ່າງໄປເຖິງແຄມນໍ້າ ພວກເຂົາໄດ້ເຫັນນໍ້າແຍກອອກແລະກໍແຫ້ງລົງຕໍ່ໜ້າພວກເຂົາຢ່າງປລາດ ພ້ອມທັງເຕັມໄປດ້ວຍຄວາມປິຕິຍິນດີຫລາຍ.

## 3. <u>ວັນແຫ່ງຄວາມຊົງຈຳ</u>: (ໂຢຊວຍ 4:14-24)

ອັສຈັນທີ່ພຣະເຈົ້າຊົງເຮັດທີ່ແມ່ນໍ້າຢໍດາເນມີຄວາມໝາຍຫລາຍໆຢ່າງ. ນຶ່ງ, ພຣະອົງໄດ້ແຕ່ງຕັ້ງໃຫ້ໂຢຊວຍເປັນຜູ້ນຳຢ່າງເດັດດ່ຽວ (4:4). ພຣະເຈົ້າໄດ້ເປີດເຜີຍແຜນການຂອງພຣະອົງຕໍ່ໂຢຊວຍເພື່ອຊ່ອຍປະເທດຊາດ. ພຣະເຈົ້າໄດ້ກ່າວຕໍ່ໂຢຊວຍເພື່ອໄປບອກພວກອິສຣາເອນໃຫ້ພວກເຂົາເຊື່ອຟັງ. ປະຊາຊົນໄດ້ເຫັນຢ່າງແຈ່ມແຈ້ງວ່າພຣະເຈົ້າເລືອກເອົາໂຢຊວຍເປັນຜູ້ນຳແທນໂມເຊ. ຕລອດຊີວິດຂອງໂຢຊວຍປະຊາຊົນໄດ້ໃຫ້ກຽດເໝືອນດັ່ງໄດ້ໃຫ້ກຽດແກ່ໂມເຊ.

ພຣະເຈົ້າໄດ້ມີພລັງເໜືອສິ່ງຊົງສ້າງດ້ວຍການແຍກນໍ້າທະເລແດງອອກ ພວກປະຊາຊົນໄດ້ຍ່າງຂ້າມໄປໝົດແລ້ວພຣະອົງກໍເຮັດໃຫ້ນໍ້າກັບຄືນຫາກັນອີກ (ອພຍ 14:21-29). ໂຢຊວຍປະກາດຕໍ່ປະຊາຊົນເວລາຂ້າມນໍ້າ ໂດຍໃຊ້ຄຳເວົ້າພຣະເຢໂຮວາ ໝາຍເຖິງພຣະເຈົ້າອົງດຽວກັນ ຜູ້ທີ່ເຄີຍຊ່ວຍພວກເຂົາມາກ່ອນນັ້ນຄື ຜູ້ຊ່ອຍພໍ່ແມ່ພວກເຂົາອອກຈາກປະເທດເອຢິບ. (ຢຊ 4:23).

ເຫດຜົນອັນຕໍ່ໄປທີ່ພຣະເຈົ້າໄດ້ກະທຳອັສຈັນໃນແມ່ນໍ້າຢໍດາເນຄືເພື່ອຄົນທັງໂລກຈະໄດ້ຮູ້ຈັກວ່າພຣະອົງມີພລັງອຳນາດອັນຍິ່ງໃຫຍ່ (4:24). ຕົວຢ່າງ ຣາຮັບໄດ້ເຫັນເຖິງພລັງອັນຍິ່ງໃຫຍ່ແລະກໍຍອມຮັບວ່າເປັນຜູ້ສັກສິດ(2:11), ຄົນຕ່າງດ້າວອື່ນໆ ກໍຮັບຮູ້ພຣະເຈົ້າຂອງພວກອິສຣາເອນ (ລະບຽບພວກເລວີ 18:26, ຈົດບັນຊີ 15: 26; ພຣະບັດຍັດທີ ສອງ 10:19). ອັສຈັນທີ່ແມ່ນໍ້າຢໍດາເນເຮັດໃຫ້ຄົນຢູ່ເມືອງການາອານ ຍອມຕໍ່ອົງພຣະຜູ້ເປັນເຈົ້າ.

ພຣະເຈົ້າສັນຍາວ່າຈະອວຍພຣະພອນແກ່ເຊື້ອສາຍຂອງອັບຣາຮາມ (ປຖກ 12:3, 28:14). ຕໍ່ມາຜູ້ປະກາດພຣະທັມເອຊາຢາໄດ້ຂຽນວ່າ ພຣະເຢໂຮວາໄດ້ເຮັດໃຫ້ພວກອີຢິບຮູ້ຈັກພຣະອົງ ແລະວັນນັ້ນພວກເຂົາໄດ້ຍອມຮັບພຣະເຢໂຮວາ. ພວກອີຢິບກັບພວກອັສຊີເຣັຽໄດ້ນະມັສການຮ່ວມກັນ ແລະພຣະເຈົ້າກໍໄດ້ອວຍພອນແກ່ເຂົາ. ສ່ວນພວກການາອານມີຄວາມຢ້ານຕໍ່ພຣະເຈົ້າ (ໂຢຊວຍ 5:1) ແທນທີ່ຈະຍອມຕໍ່ພຣະອົງພວກເຂົາເລີຍຕໍ່ຕ້ານກາຍເປັນສັດຕຣູ.

ອີກອັນນຶ່ງສິ່ງດີໄດ້ເກີດຂຶ້ນກັບພວກອິສຣາເອນຈາກອັສຈັນທີ່ແມ່ນໍ້າຢໍດາເນຄື ໂຢຊວຍໄດ້ສັ່ງໃຫ້ຄົນແຕ່ລະເຜົ່ານຳເອົາກ້ອນຫີນໃຫຍ່ຂຶ້ນມາຈາກນໍ້າ ຕອນພວກປະໂຣຫິດກຳລັງຫາມຫີບພຣະສັນຍາຂ້າມເພາະນໍ້າຢຸດແລະແຫ້ງ ເພື່ອເອົາມາກອງກັນຂຶ້ນເຮັດເປັນທີ່ລະນຶກແກ່ຄົນລຸ້ນຫລັງ (4:7).

ສິ່ງນີ້ໄດ້ກໍ່ສ້າງຂຶ້ນທີ່ ກິນການ ເປັນເຄື່ອງໝາຍວ່າພວກອິສຣາເອນໄດ້ຂ້າມນໍ້າໄປເຖິງແຜ່ນດິນແຫ່ງພຣະສັນຍາ ເໝືອນກັບສມັຍກ່ອນພຣະເຈົ້າຊ່ອຍຜູ້ເປັນພໍ່ແມ່ພວກເຂົາອອກຈາກການເປັນທາດໃນປະເທດອີຢິບເຣື່ອງນີ້ຈຳເປັນຕ້ອງບອກຕໍ່ໄປໃຫ້ຄົນລຸ້ນຫລັງຮູ້ນຳ.

ຕາມປະວັດສາດແລ້ວ ພວກອິສຣາເອນໄດ້ພົບກັບບັນຫານາໆປະການເພື່ອບໍ່ໃຫ້ພວກເຂົາປະສົບຄວາມສຳເຣັດຕາມທີ່ພຣະເຈົ້າສັນຍາຕໍ່ພວກເຂົາ. ແມ່ນແທ້ບາງຄັ້ງຄວາມເຊື່ອຂອງພວກເຂົາກໍລຸດນ້ອຍຖອຍລົງແຕ່ພຣະເຈົ້າໄດ້ນຳພວກເຂົາກັບຄືນມາຫາພຣະອົງອີກ. ພຣະເຈົ້າໄດ້ຮັກສາຄຳສັນຍາຂອງພຣະອົງຕໍ່ພວກ

ອິສຣາເອນ. ການຂ້າມແມ່ນ້ຳຢໍດາເນໝາຍເຖິງຄວາມເມດຕາ ພຣະຄຸນ ແລະຄວາມຮັກຂອງພຣະເຈົ້າມີຕໍ່ພວກເຂົາ. ພຣະອົງເຈົ້າອວຍພຣະພອນຕໍ່ໂຢຊວຍແລະຊາດອິສຣາເອນທີ່ພວກເຂົາໄດ້ໄວ້ວາງໃຈເຊື່ອໃນພຣະອົງ.

## ເຣື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ຊີວິດຄົນເຮົາບໍ່ທ່ຽງໝັ້ນຕົວຢ່າງຄົນແຕ່ງງານໃໝ່ກໍເປັນຫ່ວງວ່າຈະຢູ່ນຳກັນໄປເຖິງໃສ. ພໍ່ແມ່ຫາກໍໄດ້ລູກໃໝ່ເປັນຫ່ວງນຳຄວາມປອດພັຍແລະອະນາຄົດຂອງລູກ. ເຮັດການບ່ອນໃໝ່ກໍໃຊ້ເວລາຮູ້ຈັກຄົນງານນຳກັນເພື່ອສ້າງຄວາມສຳຄັນ. ເມື່ອພຣະເຈົ້ານຳພາພວກເຮົາໃຫ້ປ່ຽນແປງອັນໃດໃນຊີວິດ ໃຫ້ພວກເຮົາເຂົ້າໃຈວ່າພຣະອົງມີແຜນການທີ່ດີຕໍ່ຊີວິດຂອງພວກເຮົາ.

ເມື່ອຮູ້ສຶກວ່າພຣະເຈົ້ານຳທາງໄປໃນບ່ອນທີ່ເຮົາບໍ່ເຂົ້າໃຈ ໃຫ້ພວກເຮົາໄວ້ວາງໃຈເຖີດວ່າພຣະເຈົ້າມີຄວາມຮັກອັນໃຫຍ່ຕໍ່ເຮົາແລະມີແຜນການທີ່ດີຕໍ່ເຮົາສເມີ. ພຣະເຈົ້າຈະໃຫ້ພລັງເພື່ອເຮົາຈະເຮັດສິ່ງຖືກຕ້ອງຖ້າເຮົາເຊື່ອຟັງພຣະອົງ.

<u>**ຄຳຖາມ**</u>

1. ພວກອິສຣາເອນມີຄວາມສົງສັຍອັນໃດ ເມື່ອພວກເຂົາຍ່າງຂ້າມນ້ຳຢໍດາເນໄປ?
2. ເປັນຫຍັງພວກອິສຣາເອນຕ້ອງເຂົ້າໃຈວ່າຄົນສມັຍປັດຈຸບັນຂ້າມນ້ຳຢໍດາເນແລະຄົນສມັຍພໍ່ແມ່ຂ້າມທະເລແດງກໍແມ່ນພຣະເຈົ້າອົງດຽວກັນ?
3. ທຸກວັນນີ້ພຣະເຈົ້າໄດ້ສະແດງພລັງແນວໃດໃນຊີວິດຂອງພວກເຮົາ?

*ສບ. ບຸນຈັນ ວົງສຸຣິດທ໌*

# ບົດຮຽນທີ 4
# <u>ເພິ່ງຕົນເອງ ແລະຄວາມບາບທີ່ບັງລັບໄວ້</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ໂຢຊວຍ 7

**<u>ພູມຫລັງຂອງພຣະຄັມພີ:</u>** ໂຢຊວຍ 6-7

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ການເພິ່ງຕົນເອງແລະເຮັດຄວາມບາບລັບໆນຳໄປເຖິງຄວາມພ່າຍແພ້ແລະຈິບຫາຍ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ການຕັດສິນໃຈເພິ່ງພຣະເຈົ້າເພື່ອຂ້າພະເຈົ້າຈະມີຊີວິດດີແລະເຮັດໃຫ້ຄົນອື່ນນັບຖືນັ້ນເປັນສິ່ງດີແລະຄວນເຮັດບໍ່?

**<u>ຈຸດປະສົງຂອງບົດຮຽນ:</u>** ບົດຮຽນນີ້ຈະຊ່ອຍໃຫ້ຂ້າພະເຈົ້າເພິ່ງພຣະເຈົ້າຫລາຍຂຶ້ນເພື່ອຈະເອົາຊະນະຕໍ່ຄວາມບາບ?

**<u>ເພື່ອຄວາມເຂົ້າໃຈ:</u>** ຫລັງຈາກຍຶດເອົາເມືອງເຢຣີໂກໄດ້ແລ້ວ ພວກທະຫານອິສຣາເອນຄ້າງຢູ່ເມືອງ ອາອີ ເພາະພວກເຂົາບໍ່ໄດ້ເຊື່ອຟັງຄຳສັ່ງຂອງພຣະເຈົ້າ. ຄວາມຜິດບາບຂອງຄົນຜູ້ດຽວໄດ້ເປັນຜົນສະທ້ອນອັນບໍ່ດີໄປເຖິງຄົນໝົດປະເທດ.

## ບົດນຳ

ຖ້າທ່ານເຄີຍໄປໂບດແຕ່ຍັງເປັນເດັກ ທ່ານອາດເຄີຍຮ້ອງເພງເຣື່ອງໂຢຊວຍທຳສົງຄາມທີ່ເມືອງເຢຣີໂກເນື້ອຮ້ອງແລະທຳນອງງ່າຍໆ ແຕ່ເປັນໜ້າຕື່ນເຕັ້ນຫລາຍ. ເມືອງເຢຣີໂກເປັນເມືອງສຳຄັນໃນການເຂົ້າຍຶດເອົາໃນແຜ່ນດິນພຣະສັນຍາ. ພຣະເຈົ້າເປັນຜູ້ບົງການແລະນຳພວກອິສຣາເອນຂ້າມແມ່ນ້ຳຢໍດາເນໄປຢ່າງອັສຈັນ.

ສິ່ງທີ່ພວກອິສຣາເອນເຮັດນັ້ນງ່າຍເພື່ອເອົາຊະນະເມືອງເຢຣີໂກ ພວກເຂົາມີແຕ່ຍ່າງອ້ອມ, ເປົ່າແກ, ແລະຕິດຕາມແຜນການຂອງພຣະເຈົ້າ ໃນທີ່ສຸດກໍລໍເບິ່ງສິ່ງພຣະເຈົ້າເຮັດຄືເຮັດໃຫ້ກຳແພງເມືອງເຢຣີໂກເພລົງຢ່າງແປກປລາດ. ເມື່ອກຳແພງເພລົງພວກທະຫານອິສຣາເອນກໍເຂົ້າໄປຍຶດເອົາໂດຍງ່າຍ. ບົດ 6 ໃນຕອນສຸດທ້າຍໄດ້ກ່າວເຖິງການສລອງຂອງໂຢຊວຍ: ເພາະພຣະເຈົ້າສະຖິດນຳໂຢຊວຍແລະຊື່ສຽງຂອງເພິ່ນກໍໄດ້ໂດ່ງດັງອອກໄປທົ່ວທຸກບ່ອນ. (ໂຢຊວຍ 6:27). ແຕ່ໃນບົດ 7 ໄດ້ເລີ້ມຕົ້ນດ້ວຍຄຳເວົ້າວ່າ "ແຕ່ວ່າ" ໝາຍເຖິງມີບາງຢ່າງຜິດພາດໄປ. ປະວັດເຣື່ອງນີ້ເຕືອນພວກເຮົາວ່າການເລືອກທາງຜິດມີຜົນຕອບແທນທີ່ເປັນທາງລົບ ແລະນຳໄປເຖິງຄວາມພ່າຍແພ້.

## 1. <u>ເມື່ອການເພິ່ງຕົນເອງຜິດພາດໄປ:</u> (ໂຢຊວຍ 7:1-5)

ຄຳເວົ້າວ່າ ແຕ່ວ່າ ບອກເຖິງຫລາຍທາງ ບາງເທື່ອດີ ແລະບໍ່ດີ. ແຕ່ໃນເຣື່ອງນີ້ເຫັນວ່າເປັນສິ່ງບໍ່ດີ. ຕາມແຜນການຂອງພຣະເຈົ້າສຳລັບເມືອງເຢຣິໂກ ພຣະອົງໄດ້ອອກຄຳສັ່ງວ່າ ທຸກສິ່ງໃນເມືອງຕ້ອງຖວາຍຕໍ່ພຣະເຈົ້າບໍ່ໃຫ້ຄົນນຶ່ງຄົນໃດເອົາໄປໃຊ້ສ່ວນຕົວ (ໂຢຊວຍ 6:17). ຄຳເຕືອນນີ້ເປັນການດີເພາະຖ້າໂລບເອົາສິ່ງຂອງທີ່ຖວາຍຕໍ່ພຣະເຈົ້າ ຄົນນັ້ນໄດ້ຮັບພັຍວິບັດໃຫຍ່ໃນຊີວິດ. ຖ້າບໍ່ດັ່ງນັ້ນຄົນດຽວເຮັດຜິດກໍນຳເອົາພັຍອັນຕະລາຍມາສູ່ທຸກຄົນ (ໂຢຊວຍ 6:18). ຄົນທີ່ໄປຢຶດເອົາເມືອງເຢຣິໂກໄດ້ສັດຊື່ຕໍ່ຄຳສັ່ງແລະຄຳສັນຍາ ພວກເຂົາໄດ້ປົກປ້ອງຮັກສານາງ ຣາຮັບ ພ້ອມຄອບຄົວຂອງນາງ, ແຕ່ໃນທີ່ສຸດເຫັນວ່າມີສິ່ງຜິດພາດເພາະເຣື່ອງ "ສິ່ງຖວາຍຕໍ່ພຣະເຈົ້າ."

ມີຊາຍຄົນນຶ່ງຊື່ວ່າ ອາຄານໄດ້ເຮັດຜິດຄືໄດ້ໂລບເຊື່ອງຂອງທີ່ຖວາຍຕໍ່ພຣະເຈົ້າຈຶ່ງເປັນເຫດໃຫ້ຄົນທັງຊາດໄດ້ຖືກລົງໂທດ. (7:1). ຄົນດຽວເຮັດຜິດເປັນເຫດໃຫ້ພຣະເຈົ້າໂກດຮ້າຍເພາະຄົນນັ້ນບໍ່ເຊື່ອຟັງແລະຮັກສາພຣະສັນຍາທີ່ພຣະອົງມີຕໍ່ພວກອິສຣາເອນ. ຄວາມຜິດສ່ວນຕົວລາມໄປເຖິງຄົນອື່ນຢ່າງບໍ່ຕັ້ງໃຈ ຄືເຮັດໃຫ້ທະຫານຂອງພວກອິສຣາເອນ 36 ຄົນເສັຽຊີວິດ ແລະເຮັດໃຫ້ຄວາມສັມພັນຂອງພຣະເຈົ້າຂາດໄປ.

ເປັນສິ່ງສຳຄັນຫລາຍໃນແຜ່ນດິນໃໝ່ພວກອິສຣາເອັນຈຳເປັນຕ້ອງຮ່ວມກັນຕັ້ງໝັ້ນໃນພຣະເຈົ້າ. ເຖິງແມ່ນວ່າຄົນດຽວໄດ້ໂລບເອົາສິ່ງທີ່ຖວາຍຕໍ່ພຣະເຈົ້າເພື່ອເອົາໄປໃຊ້ສ່ວນຕົວ ເປັນເຫດໃຫ້ຄົນທັງຊາດຂາດຄວາມສັມພັນຕໍ່ພຣະເຈົ້າ. ຄວາມອວດໂຕຂອງອິສຣາເອັນໄປຕີເມືອງອາອີ ໂດຍບໍ່ໃຫ້ພຣະເຈົ້ານຳພາ ພວກເຂົາຄິດວ່າເມືອງນ້ອຍໆ ຕີເອົາຄົນດຽວກໍໄດ້. ໂມເຊໄດ້ເຕືອນພວກເຂົາມາກ່ອນແລ້ວວ່ານິສັຍຂີ້ໂມ້ຢ່າງນີ້ຈະນຳເຖິງຄວາມປະຣາຊັຍ. (ພຣະບັນຍັດທີ 2 8:17).

ຫລັງຈາກເອົາຊະນະເມືອງເຢຣິໂກແລ້ວ ພວກອິສຣາເອນວາງແຜນໄປຢຶດເອົາເມືອງອາອີ ຊຶ່ງເປັນເມືອງນ້ອຍໆໂດຍສົ່ງພວກນັກສືບໄປເໝືອນກັບເຢຣິໂກ ສອດແນມວ່າຈະເອົາຊະນະໄດ້ຫລືບໍ່? ພວກນັກສືບກັບມາລາຍງານຕໍ່ໂຢຊວຍວ່າເມືອງນີ້ເອົາຊະນະໄດ້ງ່າຍໂດຍບໍ່ຈຳເປັນເອົາຈຳນວນພົນທະຫານຫລາຍໄປໂຈມຕີ ພວກເຂົາໄດ້ນຳທະຫານຈຳນວນ 3000 ຄົນໄປສູ້ຮົບ ແຕ່ເຫັນວ່າພວກສັດຕຣູໄດ້ຂ້າທະຫານອິສຣາເອນ 36 ຄົນຕາຍ ພວກເຂົາໝົດກຳລັງໃຈເພາະເປັນຄົນເພິ່ງຕົນເອງແລະເຊື່ອໝັ້ນໃນຕົນເອງຫລາຍເພາະເຄີຍຊະນະມາແລ້ວ. ການບໍ່ໃຫ້ພຣະເຈົ້ານຳພາ ແລະບໍ່ເຊື່ອຟັງບໍ່ແມ່ນເຣື່ອງນ້ອຍໃນດ້ານຈິດວິນຍານ.

## 2. <u>ເມື່ອຄວາມບາບລັບໄດ້ຖືກເປີດເຜີຍ:</u> (ໂຢຊວຍ 7:6-21)

ຫລັງຈາກປະຣາຊັຍຈາກຕີເອົາເມືອງອາອີ ໂຢຊວຍແລະພວກຜູ້ນຳອິສຣາເອນໄດ້ຈົ່ມຕໍ່ພຣະເຈົ້າ (ອພຍ 14:11-12). ໃນຂໍ້ 7-9 ເຫັນວ່າໂຢຊວຍຄິດວ່າພຣະເຈົ້າປະຖິ້ມຈຶ່ງໄດ້ປະສົບກັບຄວາມເສັຽຊັຍ ແລະຈະນຳຄວາມພິນາດມາສູ່ຊາດອິສຣາເອນ. ລາວຍັງກ່າວເພີ້ມອີກວ່າການເສັຽຊັຍນີ້ຈະເຮັດໃຫ້ພຣະເຈົ້າເສັຽຊື່ສຽງລາວເວົ້າຢ່າງນີ້ບາງທີອາດເພາະລາວເປັນຫ່ວງນຳຊີວິດທີ່ລາວຫາກໍເປັນຜູ້ນຳຄົນໃໝ່ເພາະລາວຮູ້ດີວ່າຊື່ສຽງຂອງລາວໄດ້ໂດ່ງດັງໄປທົ່ວທຸກບ່ອນມາແລ້ວ (ໂຢຊວຍ 6:27).

ພຣະເຈົ້າບໍ່ປະໃຫ້ໂຢຊວຍຈົ່ມແລະເປັນຄົນສົງສານຕົນເອງ ພຣະອົງໄດ້ສັ່ງໃຫ້ໂຢຊວຍລຸກຂຶ້ນຊຳຣະຕົນເອງ ພຣະອົງບອກວ່າພວກອິສຣາເອນໄດ້ເຮັດຜິດໂດຍລັກເອົາຂອງຖວາຍໄວ້ (ໂຢຊວຍ 7:11). ຖ້າພວກເຂົາບໍ່ທຳລາຍສິ່ງເຫລົ່ານັ້ນໃນທ່າມກາງພວກເຂົາ ພຣະເຈົ້າຈະບໍ່ສະຖິດຢູ່ນຳ. ໝາຍເຫດເຮັດຜິດຄົນດຽວເປັນເຫດໃຫ້ຄົນທັງຊາດໄດ້ຮັບໂທດ ຈົນໃຫ້ພວກເຂົາພ່າຍແພ້ໃນສົງຄາມທີ່ເມືອງອາອີ. ພຣະເຈົ້າບອກວ່າ

ຄົນທີ່ລະເມີດຄຳສັ່ງໂດຍໂລບເອົາສິ່ງຂອງນັ້ນຄວນໄດ້ຮັບໂທດໜັກຈົນເຖິງຕາຍ. ປະຊາຊົນອິສຣາເອນຈຳເປັນຕ້ອງຊຳຣະຕົນເອງຕໍ່ພຣະເຈົ້າກ່ອນພຣະອົງຈະນຳພາໄປເຖິງບ້ານໃໝ່ແຜ່ນດິນດີ.

ວິທີຂອງພຣະເຈົ້າເພື່ອຢາກຮູ້ວ່າແມ່ນໃຜເປັນຄົນລັກເອົາຂອງຖວາຍນັ້ນລະອຽດດີ ສິ່ງທີ່ຄົນເຮັດລັບໆຈະຖືກເປີດເຜີຍ. ພຣະເຈົ້າສັ່ງໂຢຊວຍໃຫ້ເອົາແຕ່ແລະເຜົ່າ, ຄອບຄົວ, ແລະແຕ່ລະຄົນອອກມາສເນີ ບອກວ່າຖ້າຄົນໃນເຮັດຜິດໂດຍລັກເອົາຂອງຕ້ອງຫ້າມຈະໄດ້ຮັບໂທດເຖິງຕາຍທັງໂຄດ. ໃນທີ່ສຸດໄດ້ເຫັນວ່າມີຊາຍຄົນນຶ່ງຊື່ອາຄານໄດ້ຍອມຮັບວ່າຕົນເອງເປັນຄົນລັກ.

ໂຢຊວຍໄດ້ປະເຊີນໜ້າກັບອາຄານ ໃຫ້ບອກມາວ່າຕົນເອງເປັນຄົນລັກແທ້ແລະເອົາສິ່ງຂອງໄປເຊື່ອໄວ້ໃສ. ອານຄານສາຣະພາບວ່າຕົນເອງອົດກັ້ນຈິດໃຈບໍ່ໄດ້ໃນເມື່ອເຫັນຂອງງາມແລະມີຣາຄາ ລາວຍອມວ່າຕົນເອງເຮັດຜິດຕໍ່ພຣະເຈົ້າໂດຍບໍ່ຮູ້ວ່າມັນຈະເປັນໂທດແກ່ຄົນອື່ນໆ .

ເຫັນວ່າບາງຄັ້ງການເຮັດຜິດບາບນັ້ນບໍ່ເປັນຄວາມຜິດເທົ່ານັ້ນ ແຕ່ເປັນຄວາມໂງ່ຂອງເຮົາເອງ ມີຫລາຍຄຳຖາມເກີດຂຶ້ນເຊັ່ນ: ອາຄານຄິດແນວໃດວ່າຄົນອື່ນອາດບໍ່ຮູ້ສິ່ງທີ່ຕົນເຮັດ? ຕາມປະວັດສາດແລ້ວພຣະເຈົ້າບໍ່ປະລະໃຫ້ຄົນເຮັດບາບພົ້ນໄປຢ່າງບໍ່ໄດ້ລົງໂທດ ເປັນຫຍັງອາຄານຈຶ່ງຄິດວ່າພຣະເຈົ້າອາດເບິ່ງຂ້າມຄວາມຜິດຂອງຕົນ?

## 3. <u>ໃນເມື່ອຄົນນຶ່ງເຮັດບາບກໍເປັນຜົນຮ້າຍຕໍ່ຄົນອື່ນໆ:</u> (ໂຢຊວຍ 7:22-26)

ຖ້າພວກເຮົາເປັນນັກຂຽນພວກເຮົາເຫັນວ່າ ອາຄານເຮັດຖືກແລ້ວເພາະໄດ້ສາຣະພາບ ແລະກໍໄດ້ເອົາຂອງທີ່ລັກໄປນັ້ນຄືນມາໃຫ້ເຈົ້າຂອງ ພວກເຮົາອາດບອກກັບໂຢຊວຍວ່າພຣະເຈົ້າໄດ້ອະພັຍໃຫ້ແລ້ວ ອາຄານກັບໄປບ້ານໄປຫາຄອບຄົວໄດ້. ແຕ່ເຫັນວ່າບໍ່ເປັນຕາມຄວາມຄິດແລະເຂົ້າໃຈຂອງພວກເຮົາ. ເຣື່ອງມີຢູ່ວ່າພຣະເຈົ້າໄດ້ປະກາດລົງໂທດແລ້ວແກ່ຜູ້ທີ່ຝ່າຝືນຄຳສັນຍາ ການສາຣະພາບຂອງອາຄານນັ້ນບໍ່ໄດ້ປ່ຽນອັນໃດຕໍ່ຄຳສັ່ງອັນເດັດຂາດວ່າບໍ່ໃຫ້ລັກເອົາຂອງຖວາຍຕໍ່ພຣະເຈົ້າ. ຄ□າສາລະພາບບໍ່ເຮັດໃຫ້ທະຫານ 36 ຄົນຕາຍໄປນັ້ນຄືນມາໄດ້.

ໂຢຊວຍໄດ້ສົ່ງຄົນໄປໃນຜ້າເຕັນຂອງອາຄານ ນຳເອົາຂອງທີ່ລັກໄປນັ້ນຄືນມາໃຫ້ທຸກຄົນໄດ້ເຫັນ ໃນພູອາໂຄ ພວກອິສຣາເອນໄດ້ຄວ່າງກ້ອນຫີນໃສ່ອາຄານແລະຄອບຄົວ ສັດແລະສິ່ງຂອງລາວໃຫ້ຕາຍ ສິ່ງທີ່ເຫລືອກໍເອົາໄປໄຟເຜົາ. ກ້ອນຫີນເປັນກອງໃຫຍ່ໄດ້ຖົມສືບແລະປະເອົາໄວ້ເປັນທີ່ເຕືອນໃຈເຖິງຄວາມຜິດບາບຂອງອາຄານ. ຫລັງຈາກນີ້ແລ້ວຄວາມໂກດຮ້າຍຂອງພຣະເຈົ້າກໍຢຸດລົງ (ໂຢຊວຍ 7:26).

ຄວາມບາບຂອງຄົນດຽວເຮັດໃຫ້ຄົນທັງຊາດໄດ້ຮັບໂທດຈົນໄດ້ເສັຽຊັຍໃນເມືອງອາອີ. ທຸກວັນນີ້ຄວາມບາບຂອງຄົນດຽວອາດເຮັດໃຫ້ຄົນທັງໂບດໄດ້ຮັບໂທດຄືເປັນພະຍານບໍ່ດີຕໍ່ຄົນບໍ່ຮູ້ຈັກກັບພຣະເຈົ້າ ອາຈານໂປໂລໄດ້ຂຽນໄປບອກຄຣິສຕະຈັກເມືອງໂກຣິນໂທໃຫ້ເບິ່ງຕົວຢ່າງອັນບໍ່ດີໃນພຣະຄັມພີເດີມ ເພື່ອຜູ້ທີ່ເຊື່ອຈະບໍ່ເຮັດຄວາມຜິດ. ຕະກູນຂອງອາຄານໄດ້ສິ້ນສຸດລົງທີ່ພູເຂົາອາໂຄເພາະຄວາມຕັນຫາຂີ້ໂລບຢາກໄດ້ສິ່ງພຣະເຈົ້າຕ້ອງຫ້າມ.

ເຣື່ອງນີ້ໄດ້ເວົ້າຕໍ່ໃນບົດ 8. ພຣະເຈົ້າໄດ້ສັ່ງໂຢຊວຍບໍ່ໃຫ້ຢ້ານ ແຕ່ຕ້ອງຮວມທະຫານຈະໄປໂຈມຕີເມືອງອາອີອີກ ເພາະພຣະເຈົ້າກ່າວວ່າພຣະອົງໄດ້ມອບເມືອງນັ້ນໃຫ້ແລ້ວ (ໂຢຊວຍ 8:1). ການຈະເຂົ້າໄປໃນແຜ່ນດິນພຣະສັນຍານັ້ນຍັງມີຢູ່ໃນແຜນການຂອງພຣະເຈົ້າ ເຖິງແມ່ນມີສິ່ງລົບກວນຍ້ອນພວກອິສຣາເອນ

ເຮັດບາບແລະບໍ່ເຊື່ອຟັງ.

## ເລື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ພວກເຮົາສາມາດຮຽນນຳຕົວຢ່າງບໍ່ດີ ແລະສິ່ງທີ່ດີ. ບົດຮຽນນີ້ໄດ້ເວົ້າເຖິງຄວາມຜິດບາບຂອງຄົນດຽວເປັນເຫດໃຫ້ຄົນອື່ນໆ: ຄອບຄົວຕົນເອງ ແລະທັງໂບດຫລືປະເທດໄດ້ຮັບໂທດນຳ. ເລື່ອງຂອງອາຄານນີ້ເປັນບົດຮຽນເຕືອນພວກເຂົາໃນສມັຍນັ້ນ ແລະພວກເຮົາໃນທຸກວັນນີ້ເຊັ່ນກັນ. ຖ້າພວກເຮົາຄຶດຢາກເພິ່ງຕົນເອງເຮັດຕາມໃຈປາສຈາກພຣະເຈົ້າ ພວກເຮົາກໍຕົກໃນຄວາມບາບຢ່າງຫລີກບໍ່ໄດ້.

**<u>ຄຳຖາມ</u>**

4. ເປັນຫຍັງພວກເຮົາມີບັນຫາກັບສິ່ງທີ່ພຣະເຈົ້າຫ້າມ?
5. ໂມເຊໄດ້ເຕືອນພວກອິສຣາເອນເຖິງນິສັຍບໍ່ດີໃນແຜ່ນດິນແຫ່ງພຣະສັນຍາວ່າ ຄວາມຜິດບາບຈະນຳມາເຖິງທ່ານ. (ຈົດບັນຊີ 32:23)
6. ທ່ານສາມາດມອງເຫັນຄວາມແຕກຕ່າງເຖິງການໝັ້ນໃຈໃນຄວາມເຊື່ອ ກັບການມັກອວດເຖິງຄວາມສາມາດຂອງຕົນເອງຫລືບໍ່?
7. ສົມມຸດວ່າຄົນອື່ນສາມາດມອງເຫັນທ່ານຄືພຣະເຈົ້າເຫັນ ທ່ານຈະມີຊີວິດແນວໃດ?

*ສບ. ບຸນຈັນ ວົງສຸຣິດທ໌*

# ບົດຮຽນທີ 5
# ຄວາມໂງ່ຈ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຊວຍ 9

**ພູມຫລັງຂອງພຣະຄັມພີ:** ໂຢຊວຍ 9

**ຈຸດສຳຄັນຂອງບົດຮຽນນີ້:** ການສແວງຫາປັນຍາຂອງພຣະເຈົ້າຊ່ວຍພວກເຮົາບໍ່ໃຫ້ຖືກຫລອກ.

**ຄຳຖາມເພື່ອການຄົ້ນຄວ້າ:** ເປັນຫຍັງຈຶ່ງຖືວ່າເປັນການໂງ່ຈ້າ ເມື່ອອາສັຍຄວາມຮູ້ສຶກຫລືຄວາມຄຶດວ່າມັນຖືກຕ້ອງ?

**ຈຸດປະສົງຂອງບົດຮຽນ:** ເພື່ອບໍ່ຢາກອາສັຍຄວາມຮູ້ສຶກຫລືຄວາມຄຶດວ່າມັນຖືກຕ້ອງ ຂ້າພະເຈົ້າຕັດສິນໃຈສແວງຫາພຣະປັນຍາຈາກພຣະເຈົ້າ.

**ເພື່ອຄວາມເຂົ້າໃຈ:** ເພາະວ່າພວກອິສຣາເອນບໍ່ສແວງຫາພຣະປັນຍາຂອງພຣະເຈົ້າ ພວກເຂົາໄດ້ຖືກຫລອກ. ທຸກວັນນີ້ກໍຄືກັນພວກເຮົາອາດຖືກຫລອກ ຖ້າບໍ່ເພິ່ງພຣະເຈົ້າ.

## ບົດນຳ

ມີສິດຍາພິບານຄົນນຶ່ງໄດ້ກ່າວວ່າ "ຂ້າພະເຈົ້າຢາກອ່ານພຣະຄຳຂອງພຣະເຈົ້າໝົດບົດ ແຕ່ເຫັນວ່າມັນຍາວຈະເຮັດໃຫ້ຜູ້ຟັງເບື່ອ" ແຕ່ລາວໄດ້ກ່າວເຖິງຫລາຍໆຢ່າງເປັນເຄິ່ງຊົ່ວໂມງ. ວັນຕໍ່ມາສິດຍາພິບານຄົນນັ້ນຄຶດໄດ້ແລະຖາມຕົວເອງວ່າ "ຂ້າພະເຈົ້າເຮັດແນວນັ້ນເປັນເໝືອນຄຳເວົ້າຂອງຕົນເອງດີໄປ ແລະສຳຄັນກວ່າການອ່ານພຣະທັມຂອງພຣະເຈົ້າແມ່ນບໍ່?'

ພວກເຮົາອາດມີຄວາມຜິດເໝືອນສິດຍາພິບານຄົນນັ້ນ. ພວກເຮົາບໍ່ຢາກໃຊ້ເວລາຮູ້ຈັກກັບພຣະເຈົ້າ ໃນທີ່ສຸດພວກເຮົາກໍບໍ່ໄດ້ເປັນຄົນທີ່ພຣະເຈົ້າມີພຣະປະສົງເອົາໄວ້. ພວກເຮົາບໍ່ໄດ້ສແວງຫາທິດທາງຂອງ ພຣະເຈົ້າຈຶ່ງເປັນເຫດໃຫ້ພວກເຮົາຕົກໄປ. ໃນບົດຮຽນນີ້ ໂຢຊວຍແລະຜູ້ນຳຫລາຍຄົນໄດ້ຕັດສິນໃຈເດັດຂາດ, ແຕ່ພຣະຄັມພີຈົດໄວ້ວ່າ, "ພວກເຂົາບໍ່ໄດ້ສອບຖາມພຣະເຈົ້າ" (ໂຢຊວຍ 9:14). ທ່ານເດເຄີຍຜິດເໝືອນກັນບໍ່ ເພາະບໍ່ໄດ້ຖາມພຣະເຈົ້າໃຫ້ບອກເສັ້ນທາງທີ່ຈະເຮັດ?

### 1. **ຕຽມທຳສົງຄາມໃນແຜ່ນດິນແຫ່ງພຣະສັນຍາ:** (ໂຢຊວຍ 9:1-2)

ມີຂ່າວຊ່າລືໄປເຣື່ອງອິສຣາເອນເອົາຊະນະເມືອງເຢຣິໂກ ແລະເມືອງອາອີ. ພວກເຈົ້າຊີວິດທັງຫລາຍທີ່ຢູ່ຟາກຕາເວັນຕົກຂອງແມ່ນ້ຳຢໍດາເນມີຄວາມຢ້ານຕໍ່ພວກອິສຣາເອນ ພວກເຂົາໄດ້ຮ່ວມພລັງເພື່ອຈະທຳສົງຄາມກັບໂຢຊວຍແລະພວກອິສຣາເອນ.

## 2. ຄົນກິເບໂອນວາງແຜນຫລອກລວງ: (ໂຢຊວຍ 9:3-15)

ມີກະສັດຫລາຍອົງຕຽມທໍາສົງຄາມ ແຕ່ຄົນກິເບໂອນໄດ້ຢູ່ໃກ້ຊາຍແດນດິນແຫ່ງພຣະສັນຍາ ພວກເຂົາອາດບໍ່ຮູ້ຈັກແຜນການຂອງພວກອິສຣາເອນ ພວກເຂົາຢ້ານເພາະຖ້າຖືກຈັບເປັນຊະເລີຍພວກເຂົາຈະເສັຽທຸກຢ່າງ. ດັ່ງນັ້ນ, ພວກເຂົາຊອກຫາທາງຫລອກລວງ ຖ້າສໍາເຣັດພວກເຂົາອາດຈະຍັງມີຊາດຢູ່ຕໍ່ໄປ. ພວກເຂົາເລີຍນຸ່ງເຄື່ອງຂາດ ເໝືອນເປັນຄົນທຸກຍາກເຂົ້າໄປຄ້າຍຂອງພວກອິສຣາເອນ ທີ່ຕັ້ງຢູ່ເມືອງກິນການ ພວກເຂົາຂໍພົບກັບໂຢຊວຍແລະພວກຜູ້ນໍາເພື່ອຈະເຊັນສັນຍາສງົບສຸກ. ພວກເຂົາໄດ້ບອກກັບໂຢຊວຍວ່າພວກເຂົາໄດ້ຍິນເຖິງຣິດອໍານາດຂອງພຣະເຈົ້າຂອງພວກອິສຣາເອນແລະກໍາລັງໃຫຍ່ຂອງທະຫານອີກ ພວກເຂົາຍອມເປັນທາດຮັບໃຊ້ພວກອິສຣາເອນ. ພວກຜູ້ນໍາອິສຣາເອນສົງສັຍໃນໃຈເຖິງການມາຂອງຄົນກິເບໂອນ ເພາະໃນກົດບັນຍັດໄດ້ບອກໄວ້ຢ່າງດີເຖິງເຄາະກັມຂອງຜູ້ຢູ່ໃກ້ຄົນຢ່າງນີ້. ພວກກິເບໂອນໄດ້ໃຊ້ກົນອຸບາຍຢ່າງນີ້ສືບຕໍ່ໄປເພື່ອຫລອກລວງ.

ແຕ່ເລື່ອງສ□າຄັນໃນຂໍ້ 14 ແມ່ນພວກອິສຣາເອນເຮັດຕໍ່ພວກກິເບໂອນ: "ຄົນເຫລົ່ານັ້ນໄດ້ຮັບຂອງທີ່ພວກເຂົານໍາມາ ແຕ່ບໍ່ໄດ້ຂໍຄໍາແນະນໍາຈາກພຣະຜູ້ເປັນເຈົ້າ." ເຫັນວ່າຕອນນີ້ແຜນການຫລອກລວງຂອງພວກກິເບໂອນໄດ້ຮັບຜົນສໍາເຣັດ. ໂຢຊວຍແລະຜູ້ນໍາອິສຣາເອນເຫັນວ່າຄົນພວກນີ້ໃຊ້ໄດ້ ພວກເຂົາກໍຈຶ່ງຕົກລົງ ສ້າງສັນຍາບໍ່ເຮັດສົງຄາມຕໍ່ກັນ.

ແຕ່ເຫັນວ່າພວກອິສຣາເອນໄດ້ເຮັດຄວາມຜິດຊໍ້າຮອຍເໝືອນກັບເມືອງອາອີ ພວກເຮົາເຮັດຕາມຄວາມຮູ້ຂອງພວກເຮົາໂດຍບໍ່ໄດ້ປຶກສາກັບພຣະເຈົ້າ ຜູ້ທີ່ໃຊ້ເວລາຕລອດມາສອນພວກເຂົາໃຫ້ເພິ່ງພຣະອົງໃນທຸກດ້ານ. ພວກເຂົາອາດຈໍາໄດ້ທີ່ພຣະອົງນໍາພາພໍ່ແມ່ພວກເຂົາອອກຈາກການເປັນທາດຂອງປະເທດເອຢິບ, ໄດ້ກິນມານາ ແລະນົກຄຸ້ມໃນປ່າດິນຊາຍ. ແຕ່ພວກເຂົາຍັງລືມສແວງຫາພຣະເຈົ້າກ່ອນ.

## 3. ເຫັນວ່າຜົນສລຸບເປັນການດີ: (ໂຢຊວຍ 9:16-27)

ສາມວັນຕໍ່ມາພວກອິສຣາເອນໄດ້ຮູ້ວ່າພວກເຂົາຖືກຫລອກລວງ ຄົນໃນຄ້າຍໄດ້ແລ່ນຈົ່ມໄປຫາຜູ້ນໍາແລະບອກວ່າຈໍາເປັນຕ້ອງແກ້ບັນຫາພາຍໃນເລື່ອງກິເບໂອນ ໂຢຊວຍຈຶ່ງພາພວກທະຫານອອກໄປສໍາຣວດເມືອງກິເບໂອນແລະເຫັນວ່າພວກເຂົາໄດ້ຢູ່ໃກ້ໆ ແລະສັ່ງທະຫານບໍ່ໃຫ້ໂຈມຕີເພາະໄດ້ສັນຍາໃນພຣະນາມຂອງພຣະເຈົ້າແລ້ວ (9:19) ເພາະໄດ້ຕົກລົງດ້ວຍຄໍາເວົ້າຊຶ່ງປ່ຽນບໍ່ໄດ້ ເຖິງແມ່ນຈະແມ່ນແຜນການຫລອກລວງ. ດັ່ງນັ້ນ, ຜູ້ນໍາອິສຣາເອນໄດ້ໄປພົບໂຢຊວຍແລະພວກກິເບໂອນແລະໄດ້ກ່າວວ່າ ເປັນຫຍັງພວກເຈົ້າຈຶ່ງຫລອກພວກເຮົາວ່າພວກເຈົ້າຢູ່ໄກ? ຄວາມຈິງແມ່ນຢູ່ໃກ້ພຽງນີ້? (ໂຢຊວຍ 9:22) ພວກຜູ້ນໍາກິເບໂອນໄດ້ສາຣະພາບວ່າພວກເຂົາຢ້ານຈຶ່ງຊອກຫາທາງເພື່ອເອົາຕົວລອດ ແລະຍອມຮັບເອົາການລົງໂທດຕາມພວກອິສຣາເອນເຫັນສົມຄວນ. (ໂຢຊວຍ 9:25).

ໂຢຊວຍແລະພວກກິເບໂອນໄດ້ຮູ້ຈັກກົດຂອງໂມເຊເຖິງຜູ້ທີ່ຢູ່ໃກ້ດິນແດນແຫ່ງພຣະສັນຍາຄື:ຈະຖືກໂທດຢ່າງບໍ່ປານີ ແລະບໍ່ໃຫ້ສັນຍາອັນໃດ (2 ພບຍ 7:2). ແຕ່ເຫັນວ່າໂຢຊວຍຍັງຖືຄໍາເວົ້າຂອງຕົນສໍາຄັນກວ່າເພາະໄດ້ຕົກລົງສັນຍາສ້າງສັນຕິສຸກແລ້ວ. ໃນທີ່ສຸດພວກກິເບໂອນບໍ່ໄດ້ຖືກຂ້າ ແຕ່ປະຊາຊົນກາຍເປັນຜູ້ຮັບໃຊ້ ເປັນຄົນຕັດໄມ້, ຕັກນໍ້າ, ແລະເປັນຜູ້ຮັບໃຊ້ພວກອິສຣາເອນຊຶ່ງເປັນການລົງໂທດ.

ກະສັດ 5 ອົງບໍ່ດີໃຈທີ່ພວກກິເບໂອນຍອມຮັບໃຊ້ພວກອິສຣາເອນເລີຍຍົກທັບມາໂຈມຕີ ຈຶ່ງເປັນເຫດໃຫ້ພວກອິສຣາເອນຊ່ອຍໂດຍເອົາຊະນະຈາກກະສັດທັງໝົດ (ໂຢຊວຍ 10). ແຕ່ເຫັນວ່າມີຜົນຮ້າຍຕາມມາທີຫລັງເພາະໂຢຊວຍບໍ່ໄດ້ປຶກສາກັບພຣະເຈົ້າກ່ອນ ຄືພວກອິສຣາເອນບາງຄົນໄດ້ປະຖິ້ມພຣະເຈົ້າໄປເພາະພວກກິເບໂອນນໍາພານັບຖືພຣະອື່ນ. ໃນປຶ້ມໂຢຊວຍໄດ້ສລູບວ່າພວກອິສຣາເອນໄດ້ຕັ້ງໝັ້ນຢູ່ໃນພຣະເຈົ້າ (24:16-28), ໃນປຶ້ມຜູ້ປົກຄອງພວກເຮົາຈະເຫັນວ່າຄວາມເຊື່ອຂອງພວກອິສຣາເອນໄດ້ຄ່ອຍເຢັນລົງ.

## ເບິ່ງອີກຄັ້ງນຶ່ງເຖິງການຫລອກລວງຂອງພວກກິເບໂອນ

ພຣະເຈົ້າບໍ່ໄດ້ປະນາມຄົນກິເບໂອນທີ່ພວກເຂົາໃຊ້ກົນອຸບາຍ ເພາະພວກເຂົາກໍຢາກໃຫ້ຄົນພວກເຂົາມີຊີວິດສືບຕໍ່ໄປ. ພວກເຂົາເຫັນວ່າວັນໃໝ່ຈະເຂົ້າມາ ເຖິງແມ່ນວ່າພວກເຂົາເຂັ້ມແຂງແຕ່ພວກເຂົາຢ້ານພຣະເຈົ້າຂອງພວກອິສຣາເອນແລະປະຊາຊົນ ພວກເຂົາຢາກມີເສຣີພາບຈຶ່ງໃຊ້ແຜນການຫລອກລວງ ແຕ່ມັນກໍຍັງດີກວ່າບອກຄວາມຈິງແລະເສັຽຊີວິດ. ການຢາກມີຊີວິດຢູ່ນັ້ນບໍ່ແມ່ນການງ່າຍ ຕ້ອງເຂົ້າໃຈວ່າຫລອກລວງແລະຂີ້ຕົວະເຖິງແມ່ນວ່າໄດ້ຜົນແຕ່ບໍ່ມີຄ່າສໍາລັບຊີວິດ ການເຮັດຊົ່ວແລະຫວັງວ່າຈະໄດ້ດີກໍເປັນເໝືອນກັບຕົກຈາກພູຊັນແລະສູງ.

## ເຣື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ບັນຫາຂອງພວກອິສຣາເອັນບໍ່ແມ່ນການຫລອກລວງຂອງພວກກິເບໂອນ ແຕ່ແມ່ນການເພິ່ງຕົນເອງຂອງຜູ້ນໍາແລະຄົນທົ່ວໄປ. ຕອນນີ້ພວກເຂົາຫາກໍຖວາຍຕົວເອງຕໍ່ພຣະເຈົ້າ ແລະຄໍາສອນຂອງໂມເຊ. ແຕ່ອີກບໍ່ນານການຕິດຕາມເຊື່ອຟັງພຣະເຈົ້າກໍຄ່ອຍເຢັນລົງ.

ໃນເມື່ອຕັດສິນໃຈເຮັດອັນໃດທີ່ບໍ່ສແວງຫາພຣະເຈົ້າ ພວກເຮົາເປັນຄົນເຮັດຜິດຢ່າງນັ້ນທຸກຄົນຄືກັບຄົນອິສຣາເອັນສມັຍບູຮານ. ແມ່ນແທ້ພວກເຮົາອາດຄຶດວ່າຕົນເອງມີການສຶກສາດີຮູ້ຈັກພຣະຄັມພີ ແຕ່ໃນທີ່ສຸດພວກເຮົາອາດກາຍເປັນຄົນເພິ່ງຕົນເອງ ແລະຕັດສິນໃຈເຮັດອັນໃດໂດຍທີ່ບໍ່ຍອມຊອກສແວງຫາພຣະເຈົ້າ ພວກເຮົາກາຍເປັນຄົນມີນິສັຍຜິດຕໍ່ພຣະປະສົງຂອງພຣະເຈົ້າ.

ເຖິງແມ່ນຜູ້ນໍາຄົນໃໝ່ຄືໂຢຊວຍຂອງພວກອິສຣາເອັນໄດ້ຕັດສິນໃຈສ້າງສັນຕິສຸກກັບພວກກິເບໂອນໄປແລ້ວ ແລະຄຶດເຫັນພຣະເຈົ້າທີຫລັງ (ໂຢຊວຍ 9:27). ພວກເຮົາຕ້ອງສແວງຫາພຣະເຈົ້າກ່ອນ (ມທ 6:33), ພວກເຮົາຕ້ອງເອົາພຣະເຈົ້າກ່ອນການຕັດສິນໃຈເຮັດທຸກຢ່າງໃນຊີວິດ. ຄວາມຮູ້ສຶກຖືກເປັນສິ່ງດີ ເມື່ອເອົາພຣະເຈົ້າເຂົ້າມາຊ່ອຍໃນຊີວິດ.

## ຄໍາຖາມ

8. ພວກກະສັດທີ່ຢູ່ຟາກຕາເວັນອອກຄຶດຢ່າງໃດ ເມື່ອພວກອິສຣາເອັນເອົາຊັຍຊະນະເມືອງເຢຣິໂກ ແລະເມືອງອາອີ?

9. ໃນບົດ 9:14 ກ່າວວ່າພວກອິສຣາເອັນຖືກຫລອກລວງ ແຕ່ພວກເຂົາບໍ່ໄດ້ສແວງຫາພຣະເຈົ້າ. ສິ່ງນີ້ໄດ້ສອນພວກເຮົາຢ່າງໃດ?

10. ທ່ານໄດ້ຕັດສິນໃຈໃນຊີວິດຂອງທ່ານແນວໃດ? ທ່ານໄດ້ເອົາພຣະເຈົ້າເຂົ້າມາຊ່ວຍຕັດສິນໃຈບໍ່?

11. ທ່ານໄດ້ເຮັດແນວໃດຕໍ່ຄົນທີ່ຫລອກລວງທ່ານ?

12. ທ່ານເຄີຍຖືກຫລອກໃຫ້ຫລົງໄປບໍ່ເພາະທ່ານໄດ້ເພິ່ງຄວາມຮູ້ສຶກຂອງຕົນເອງ?

*ສບ. ບຸນຈັນ ວົງສຸຣິດທ໌*

# ບົດຮຽນທີ 6
# ຖວາຍຕົວຢ່າງແທ້ຈິງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢຊວຍ 23; 24:14-15

**ພູມຫລັງຂອງພຣະຄັມພີ:** ໂຢຊວຍ 23-24

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາຖືກເອີ້ນໃຫ້ຖວາຍຕົວຮັບໃຊ້ພຣະເຈົ້າຕລອດຊີວິດ.

**ຄຳຖາມເພື່ອການຄົ້ນຄວ້າ:** ຂ້າພະເຈົ້າໄດ້ບອກໃຫ້ຄົນອື່ນຮູ້ບໍ່ວ່າໃນຊີວິດນີ້ໄດ້ມອບຖວາຍເພື່ອຮັບໃຊ້?

**ຈຸດປະສົງຂອງບົດຮຽນ:** ເພື່ອປະເມີນຜົນແລະເນັ້ນເຖິງການຖວາຍຕົວຮັບໃຊ້ພຣະເຈົ້າຕລອດຊີວິດຂອງຂ້າພະເຈົ້າເປັນໄປຮອດໃສ.

**ເພື່ອຄວາມເຂົ້າໃຈ:** ໂຢຊວຍໄດ້ກ່າວສັ່ງລາເປັນການທ້າທາຍໃຫ້ປະຊາຊົນຖວາຍຕົວເອງຢ່າງສຸດຍອດແລະຮັບໃຊ້ພຣະອົງຢ່າງສັດຊື່.

## ບົດນຳ

ພວກຊາວໜຸ່ມໃນຄຣິສຕະຈັກຂອງຂ້າພະເຈົ້າໄດ້ໄປຮ່ວມຊຸມນຸມປະຈຳປີ. ຂ້າພະເຈົ້າໄດ້ນັ່ງທາງຫລັງຂອງນັກເທດທີ່ເວທີ ແລະເຫັນວ່າຕັ່ງທາງຫລັງຄົນມັກນັ່ງກ່ອນໝູ່. ຕອນແລງວັນນັ້ນປະທານຜູ້ອຳນວຍການປະກາດຕ່າງປະເທດເປັນຄົນແບ່ງປັນ ຫລາຍຄັ້ງເພິ່ນໄດ້ຫລຽວໜ້າໄປທາງຫລັງ ຂ້າພະເຈົ້າຄຶດວ່າເພິ່ນເບິ່ງຂ້າພະເຈົ້າ. ຄຳເທສນາຂອງເພິ່ນເປັນຕາຟັງແລະກໍຊຸກຊວນໃຈຢາກເຮັດຕາມເພິ່ນແນະນຳເພື່ອຮັບໃຊ້ພຣະເຈົ້າ. ໃນກອງປະຊຸມອີກບ່ອນນຶ່ງຂ້າພະເຈົ້າມີຄວາມຮູ້ສຶກຢ່າງນັ້ນເໝືອນກັນ ແລະເວລານັ້ນຂ້າພະເຈົ້າໄດ້ຖວາຍຕົວເພື່ອຮັບໃຊ້. ຂ້າພະເຈົ້າຮູ້ສຶກເປັນໜີ້ບຸນຄຸນຜູ້ທີ່ສິດສອນແລະທ້າທາຍໃຫ້ຂ້າພະເຈົ້າຮັບເອົາຄຳຮຽກເອີ້ນຈາກພຣະເຈົ້າເພື່ອຮັບໃຊ້ຕລອດຊີວິດດ້ວຍຄວາມພູມໃຈ.

ໃນບົດຮຽນນີ້ໄດ້ເຫັນວ່າໂຢຊວຍໄດ້ທ້າທາຍໃຫ້ປະຊາຊົນອິສຣາເອນຖວາຍຕົວເພື່ອຮັບໃຊ້ພຣະເຈົ້າຢ່າງສັດຊື່ແລະຕລອດຊີວິດ.

## 1. ຈົ່ງດຳລົງຊີວິດໃນຄວາມສັດຊື່ຂອງພຣະເຈົ້າ: (ໂຢຊວຍ 23:1-5)

ໃນເມື່ອພຣະເຈົ້າໄດ້ມອບມໍຣະດົກດິນແຫ່ງພຣະສັນຍາໃຫ້ອັບຣາຮາມ ພຣະອົງໄດ້ກ່າວວ່າອັບຣາຮາມຈະເປັນຄົນມີຊື່ສຽງ ແລະເປັນພຣະພອນໄປຫານາໆຊາດ (ປຖກ 12:1-3). ການທີ່ໄປເອົາແຜ່ນດິນພຣະສັນຍານັ້ນບໍ່ແມ່ນການງ່າຍເພາະພວກການາອານຕໍ່ສູ້ຢ່າງແຂງແຮງເພາະພວກເຂົາໄດ້ຢູ່ຫັ້ນກ່ອນ. ພຣະເຈົ້າບອກວ່າອັບຣາຮາມຈະເປັນຊາດໃຫຍ່ ແຕ່ເຫັນວ່າມີອາຍຸຫລາຍແລ້ວຍັງບໍ່ມີລູກສືບເຊື້ອສາຍ ແລະຍັງປະສົບກັບຄວາມອຶດຢາກແລະບັນຫາອື່ນໆອີກ. ໃນທີ່ສຸດພວກອິສຣາເອນໄດ້ກາຍເປັນທາດຂອງປະເທດອີຢິບ

ຈຶ່ງເປັນເຫດໃຫ້ພຣະເຈົ້າສັ່ງໂມເຊແລະໂຢຊວຍເປັນຜູ້ນຳພວກເຂົາອອກຈາກການເປັນທາດ ເພື່ອຈະໄດ້ເຂົ້າໄປໃນແຜ່ນດິນແຫ່ງພຣະສັນຍາ ຕ້ອງໄດ້ຜ່ານບັນຫາແລະສົງຄາມເປັນປະຈຳແຕ່ລະວັນ.

ໃນທີ່ສຸດພຣະເຈົ້າໄດ້ປົດປ່ອຍປະຊາກອນຂອງພຣະອົງ ໃຫ້ພວກເຂົາໄດ້ພັກຜ່ອນຈາກພວກສັດຕຣູ (ໂຢຊວຍ 23:1). ໂຢຊວຍມີສິດທິຫລາຍທີ່ຈະເປັນຜູ້ນຳເພາະລາວໄດ້ຮັບປະສົບການເລື່ອງການເປັນທາດໃນປະເທດອີຢິບ, ພົບການລຳບາກອຶດຫິວ ແລະເຫັນການອັສຈັນທີ່ພຣະເຈົ້າໄດ້ເຮັດໃນແມ່ນ້ຳທະເລແດງ ແລະລາວເປັນຜູ້ຊ່ອຍໂມເຊ ລາວຖືກສົ່ງອອກໄປສອດແນມດິນແຫ່ງພຣະສັນຍາ. ໂຢຊວຍເປັນຜູ້ນຳແທນໂມເຊ ລາວໄດ້ນຳພາພວກອິສຣາເອນເຂົ້າໄປໃນແຜ່ນດິນແຫ່ງພຣະສັນຍາ ເມື່ອລາວມີອາຍຸ 110 ປີ ແລະຮູ້ວ່າຈຳເປັນຕ້ອງຈາກໂລກນີ້ໄປເໝືອນກັບບັນພະບຸຣຸດ: ຢາໂຄບ, ໂຢເຊັບ, ແລະໂມເຊ ມີເຣື່ອງຕ້ອງເວົ້າກັບປະຊາກອນຂອງພຣະເຈົ້າໃຫ້ເຂົ້າໃຈໃນຄວາມເຊື່ອ.

ໂຢຊວຍໄດ້ເຕືອນພວກອິສຣາເອນວ່າເຖິງເຣື່ອງທີ່ພວກເຂົາໄດ້ຮັບດິນແຫ່ງພຣະສັນຍາເປັນມໍຣະດົກເພາະພຣະເຈົ້າເອງເປັນຜູ້ຕໍ່ສູ້ສັດຕຣູແທນ (ໂຢຊວຍ 23:3). ໃນຄຳສັ່ງຕອນສຸດທ້າຍຂອງໂຢຊວຍ ເພິ່ນໄດ້ບອກໃຫ້ປະຊາກອນເຂົ້າໃຈດີວ່າແມ່ນໃຜເປັນຄົນບັງຄັບບັນຊາ. (ໂຢຊວຍ 23:5). ພຣະເຈົ້າໄດ້ຮັກສາຄຳໝັ້ນສັນຍາສເມີ. ຖ້າພຣະອົງສັນຍາວ່າຈະອວຍພຣະພອນ ພຣະອົງຍ່ອມເຮັດຕາມສັນຍາ ແລະຖ້າພຣະອົງບອກເຖິງຜົນຮ້າຍຈະໄດ້ຮັບເພາະເຮັດຜິດ ພຣະອົງກໍເຮັດຢ່າງນັ້ນເໝືອນກັນ.

## 2. <u>ຈົ່ງດຳລົງຊີວິດຕາມແຜນການຂອງພຣະເຈົ້າ:</u> (ໂຢຊວຍ 23:6-13)

ເມື່ອໂຢຊວຍໄດ້ນຳພາພວກອິສຣາເອນເຂົ້າໄປໃນແຜ່ນດິນແຫ່ງພຣະສັນຍາ ພຣະເຈົ້າໄດ້ບອກເພິ່ນສາມເທື່ອ, “ຈົ່ງເຂັ້ມແຂງແລະກ້າຫານເທີ້ນ” (ໂຢຊວຍ 1:6-9). ດັ່ງນັ້ນ, ໂຢຊວຍໄດ້ສັ່ງພວກອິສຣາເອນຄັ້ງສຸດທ້າຍຈຶ່ງມີຄຳເວົ້າຢ່າງນີ້ “ຈົ່ງເຂັ້ມແຂງ” (23:6). ໝາຍຄວາມວ່າສິ່ງທີ່ເພິ່ນໄດ້ຮັບຈາກພຣະເຈົ້າເພິ່ນໄດ້ຖ່າຍທອດໃຫ້ຄົນອື່ນ. ການມີຄວາມກ້າຫານແລະເຂັ້ມແຂງນີ້ໄດ້ຊ່ອຍນຳຜົນສຳເຣັດມາສູ່ຊີວິດ.

ນຶ່ງ, ພວກອິສຣາເອນຈຳເປັນຕ້ອງເຊື່ອຟັງທຸກສິ່ງທີ່ຂຽນໄວ້ໃນພຣະບັດຍັດຂອງໂມເຊ, ບໍ່ໃຫ້ຫັນໄປທາງຂວາ ຫລືທາງຊ້າຍ. (23:6). ພວກເຂົາຈຳເປັນຕ້ອງແຍກຕົນເອງອອກຈາກຄົນນັບຖືພຣະເຈົ້າອື່ນໆ. ສອງ, ພວກເຂົາຈຳເປັນຕ້ອງຍຶດໝັ້ນຄວາມເຊື່ອໃນພຣະເຈົ້າ (23:8). ພຣະເຈົ້າຕ້ອງການໃຫ້ພວກອິສຣາເອນຖວາຍຈິດໃຈທັງໝົດໄວ້ກັບພຣະອົງ. ສາມ, ພວກອິສຣາເອນຕ້ອງລະວັງໃນການຮັກຕໍ່ອົງພຣະຜູ້ເປັນເຈົ້າ (23:11). ພວກເຂົາສະແດງຄວາມບໍຣິສຸດ ແລະສແວງຫາຄວາມຮັກຂອງພຣະເຈົ້າໃນຊີວິດປະຈຳວັນ.

ໂຢຊວຍໄດ້ກ່າວຢ່າງແຈ່ມແຈ້ງວ່າພວກອິສຣາເອນຕ້ອງສັດຊື່ຕໍ່ພຣະເຈົ້າ ເພາະພຣະອົງມີຄວາມສັດຊື່ຕໍ່ພວກເຂົາຕລອດມາ ຄຳແນະນຳສາມຢ່າງທີ່ໂຢຊວຍໄດ້ກ່າວຕໍ່ພວກອິສຣາເອນໃນສມັຍນັ້ນສາມາດສອນພວກເຮົາໃນທຸກວັນນີ້ໄດ້ຄືກັນ:ເຮັດຕາມຄຳສອນຂອງພຣະເຈົ້າ, ຖວາຍຕົວຈົນໝົດໃຈຕໍ່ພຣະເຈົ້າ, ຮັກພຣະເຈົ້າດ້ວຍຄຳເວົ້າແລະການກະທຳ.

ໂຢຊວຍຍັງເຕືອນພວກອິສຣາເອນວ່າຖ້າພວກເຂົາບໍ່ສັດຊື່ຕໍ່ພຣະອົງ ການບໍ່ເຊື່ອຟັງນີ້ຈະນຳພວກເຂົາໄປສູ່ຄວາມພິນາດ ຄືຈະໄດ້ຖືກລົງໂທດຈາກພຣະເຈົ້າ (23:13). ພວກອິສຣາເອນໄດ້ຮູ້ຈັກຄວາມຍິ່ງໃຫຍ່ແລະພຣະຄຸນຂອງພຣະເຈົ້າ. ຖ້າພວກເຂົາປະຖິ້ມພຣະເຈົ້າອົງທ່ຽງແທ້ໄປນັບຖືພຣະອື່ນພວກເຂົາຈະໜີຈາກການລົງໂທດບໍ່ໄດ້ເດັດຂາດ.

## 3. ຈົ່ງດຳລົງຊີວິດຕາມພຣະສັນຍາຂອງພຣະເຈົ້າ: (ໂຢຊວຍ 23:14-16)

ເລີ້ມແຕ່ສມັຍຂອງອັບຣາຮາມເປັນຕົ້ນມາພຣະເຈົ້າໄດ້ສັນຍາຕໍ່ຄົນອິສຣາເອນ ພຣະອົງໄດ້ຮັກສາຄຳສັນຍາແລະພຣະອົງຕ້ອງການໃຫ້ພວກອິສຣາເອນເຮັດເຊັ່ນກັນ. ພຣະອົງໄດ້ນຳພາພວກເຂົາອອກຈາກການເປັນທາດຂອງປະເທດອີຢິບ ແລະນຳພວກເຂົາໄປເຖິງແຜ່ນດິນແຫ່ງພຣະສັນຍາຊຶ່ງເປັນແຜ່ນດິນໃໝ່. ພຣະອົງໄດ້ສືບຕໍ່ອວຍພຣະພອນຖ້າພວກເຂົາຕັ້ງໝັ້ນແລະສັດຊື່ຕໍ່ພຣະອົງ. ພຣະອົງໄດ້ເຕືອນເຖິງຜົນຮ້າຍທີ່ຈະຕາມມາຖ້າພວກເຂົາຫລົງລືມພຣະອົງ. ໂຢຊວຍ 23:12 ໄດ້ເລີ້ມຕົ້ນວ່າ ຖ້າພວກທ່ານຫັນໜີ ຂໍ້ 23 ເປັນຂໍ້ເຕືອນວ່າ ຖ້າພວກເຂົາຫັນໜີ ຈົ່ງຮູ້ແນ່ນອນວ່າວິບັດໃຫຍ່ຈະຕາມມາ ຄືຈະໄດ້ຮັບຄວາມຈິບຫາຍໃນແຜ່ນດິນແຫ່ງພຣະສັນຍາ (23:13,16).

ໂຢຊວຍສັ່ງສຸດທ້າຍບໍ່ໃຫ້ແຕ່ງງານຫລືຮ່ວມກັບຄົນທີ່ບໍ່ເປັນຊາດອິສຣາເນ ຖ້າເຂົາຍັງຝືນເຮັດວິບັດຈະຕາມມາ ເພາະພຣະເຈົ້າເອງຈະເປັນຜູ້ລົງໂທດ ແລະຈະຂາດພຣະພອນໃນອະນາຄົດ. ສິ່ງໃຫຍ່ທີ່ສຸດໃນຄຳສອນຂອງໂຢຊວຍແມ່ນເຣື່ອງຄວາມເຊື່ອຟັງ. ຖ້າພວກເຂົາຂາດຄວາມເຊື່ອໃນພຣະເຈົ້າແລ້ວ ພວກເຂົາກໍໄດ້ເປີດປະຕູແຫ່ງຄວາມປະຣາຊັຍດ້ານທະຫານ, ການເມືອງ, ແລະເສຖກິດ.

ໂຢຊວຍໄດ້ບອກໃຫ້ພວກອິສຣາເອນຮູ້ແຈ້ງວ່າພຣະເຈົ້າເປັນຜູ້ສັນຍາແລະຜູ້ຮັກສາຄຳສັນຍາເອົາໄວ້. ທຸກສິ່ງທີ່ພຣະເຈົ້າສັນຍາເອົາໄວ້ໄດ້ສຳເຣັດ ບໍ່ມີອັນໃດຂາດ. (23:14). ແມ່ນແທ້ຊາດອິສຣາເອນໄດ້ຮັບພຣະພອນຫລາຍ ແຕ່ໂຢຊວຍໄດ້ກ່າວວ່າຄຳສັນຍາຂອງພຣະເຈົ້າມີສອງຢ່າງ: ພຣະເຈົ້າຈະລົງໂທດ ແລະຈະອວຍພຣະພອນ. ລົງໂທດແມ່ນຖ້າປະຖິ້ມພຣະອົງ ຮັບພຣະພອນແມ່ນເມື່ອເຊື່ອຟັງພຣະອົງ.

## 4. ຕັດສິນໃຈວັນນີ້ວ່າທ່ານຈະຮັບໃຊ້ຜູ້ໃດ: (ໂຢຊວຍ 24:14-16)

ໂຢຊວຍໄດ້ນຳພາພວກອິສຣາເອນສັນຍາໃໝ່ກັບພຣະເຈົ້າໃນເມືອງເຊເຄັມ (ໂຢຊວຍ 24:1-27). ທີ່ນັ້ນໂຢຊວຍໄດ້ເຕືອນພວກອິສຣາເອນເຖິງພຣະພອນແລະການນຳພາຈາກພຣະເຈົ້າ. ໂຢຊວຍໄດ້ກ່າວເຖິງອັບຣາຮາມ ແລະປະສົບການທີ່ພວກເຂົາໄດ້ປະສົບໃນວັນນັ້ນວ່າ ພຣະເຈົ້າເປັນຜູ້ປະທານດິນແຫ່ງພຣະສັນຍາໃຫ້ຊຶ່ງພວກເຂົາບໍ່ໄດ້ເຮັດບໍ່ໄດ້ຫາ ແລະພວກເຂົາໄດ້ກິນຜົລປູກ. (ໂຢຊວຍ 24:13) ຍ້ອນພຣະຄຸນແລະຄວາມຮັກຂອງພຣະເຈົ້າທີ່ມີຕໍ່ພວກອິສຣາເອນ. ໂຢຊວຍບອກປະຊາຊົນໃຫ້ຍຳເກງແລະຮັບໃຊ້ພຣະອົງຢ່າງສັດຊື່. (24:14).

## ເຣື່ອງນີ້ມີຄວາມໝາຍຫຍັງໃນທຸກວັນນີ້?

ຂໍ້ນຶ່ງໃນພຣະບັດຍັດສິບປະການເວົ້າເຣື່ອງພຣະເຈົ້າອົງທ່ຽງແທ້, ຂໍ້ສອງເວົ້າເຖິງເອົາສິ່ງອື່ນມາແທນພຣະເຈົ້າ. ມີຫລາຍຢ່າງທີ່ມະນຸດເອົາມາແທນພຣະເຈົ້າເຊັ່ນ: ວຽກງານ, ເງິນຄຳ, ເພດສັມພັນ, ຄົນໃດຄົນນຶ່ງ, ອຳນາດ ແລະອື່ນໆ... ພວກເຮົາທຸກວັນນີ້ເອົາໃຈໃສ່ໃນສິ່ງຂອງຫລາຍກວ່າພຣະເຈົ້າອົງທ່ຽງແທ້. ຄຳຖາມມີຢູ່ວ່າມີພຣະອັນໃດໃນຊີວິດຂອງທ່ານທີ່ທ່ານຕ້ອງປະຖິ້ມ? ໃນສມັຍທຸກວັນນີ້ທ່ານຈະຕັດສິນໃຈຕິດຕາມພຣະ

ເຈົ້າທີ່ໂຢຊວຍເຊື່ອແລະຮັບໃຊ້. ໂຢຊວຍໄດ້ທ້າທາຍໂດຍກ່າວວ່າ, "ສ່ວນຂ້າພະເຈົ້າແລະຄອບຄົວຈະຮັບໃຊ້ອົງພຣະຜູ້ເປັນເຈົ້າ" ທ່ານເດ?

## <u>ຄຳຖາມ</u>

13. ທວນຄຶດເຖິງອະດີດວ່າໃຜເປັນຜູ້ຊັກຊວນທ່ານໃຫ້ຖວາຍຕົວຮັບໃຊ້ພຣະເຈົ້າ. ທ່ານໄດ້ປະສົບການໃນການຮັບໃຊ້ພຣະເຈົ້າໃໝ່ໃນຊີວິດບໍ່?
14. ຖ້າວ່າໃນຫ້ອງຮຽນຂອງທ່ານໄດ້ອອກສຽງທາງລັບ ໃຫ້ບອກເຖິງສາມຄົນຜູ້ມີຄວາມເຊື່ອ ແລະສາມາດນຳພາໄດ້ ທ່ານຄິດວ່າຊື່ຂອງທ່ານຈະຖືກຄົນອື່ນເລືອກເອົາບໍ່? ເປັນຫຍັງຈຶ່ງຖືກເລືອກເອົາ ແລະເປັນຫຍັງຈິ່ງບໍ່ຖືກເລືອກເອົາ?
15. ຖ້າວັນນີ້ເປັນວັນສຸດທ້າຍຂອງທ່ານ ມີຫຍັງບໍ່ທີ່ທ່ານຈະສັ່ງຄົນລຸ້ນຫລັງ?
16. ວິທີໃດທ່ານຈະຖ່າຍທອດຄວາມເຊື່ອໃຫ້ສະມາຊິກໃນຄອບຄົວຂອງທ່ານ?

*ສບ. ບຸນຈັນ ວົງສຸຣິດທ໌*

# ບົດຮຽນທີ 7
# ພັຍຂອງການຫລົງລືມຝ່າຍຈິດວິນຍານ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ພວກຜູ້ປົກຄອງ 2: 1-3, 6-22

**ພູມຫລັງຂອງພຣະຄັມພີ:** ພວກຜູ້ປົກຄອງ 1 ແລະ 2

**ຈຸດສຳຄັນສຳລັບບົດຮຽນນີ້:** ຄົນແຕ່ລະຍຸກຮັບຜິດຊອບໃນການຕິດຕາມພຣະເຈົ້າ ແລະການຖ່າຍທອດຄວາມເຊື່ອຂອງເຂົາເຈົ້າ.

**ຄຳຖາມເພື່ອຄົ້ນຄວ້າ:** ຄົນໃນຍຸກຂອງພວກເຮົາເອົາໃຈໃສ່ໃນການຖ່າຍທອດຄວາມເຊື່ອໄປເຖິງຄົນລຸ້ນຕໍ່ໄປບໍ່?

**ຈຸດປະສົງຂອງການສຶກສານີ້:** ເພື່ອສຳຣວດເບິ່ງການຖ່າຍທອດຄວາມເຊື່ອຂອງພວກເຮົາໄປເຖິງຄົນລຸ້ນຕໍ່ໄປ.

**ອ່ານລວບ:** ໃນລະຍະບໍ່ດົນຫລັງຈາກການເສັຽຊີວິດຂອງໂຢຊວຍ ແລະຜູ້ນຳໃນລຸ້ນຂອງທ່ານ, ຊາວອິສຣາເອນລຸ້ນຕໍ່ມາເລີ້ມຊຸດໂຊມໃນຄວາມເຊື່ອແລະຫັນໄປໄຫວ້ພຣະອື່ນ; ສິ່ງນັ້ນເປັນເຫດໃຫ້ພຣະເຈົ້າຕ້ອງໄດ້ຊົງລົງໂທດພວກເຂົາຄັ້ງແລ້ວຄັ້ງອີກ.

## ຄຳນຳ

ພວກເຮົາສ່ວນຫລາຍມັກອ່ານປຶ້ມທີ່ມີສີສັນ ແລະມີເຣື່ອງຫວາດສຽວ. ພຣະທັມ "ພວກຜູ້ປົກຄອງ" ກໍເປັນປຶ້ມປະເພດນັ້ນ; ໃນປຶ້ມນີ້ພວກເຮົາຈະເຫັນເຣື່ອງສົງຄາມ, ເຣື່ອງປະຊິດ, ເຣື່ອງສັ່ນຂວັນ, ແລະເຣື່ອງລັບລົມຄົມໃນ. ນອກນັ້ນຍັງມີເຣື່ອງຄວາມຮັກແລະເຣື່ອງທັກຫລັງກັນ; ຕົວປະກອບສຳຄັນແມ່ນເດໂບຣາ, ກິເດໂອນ, ແລະແຊມຊັນ. ພຣະທັມພວກຜູ້ປົກຄອງເປັນປະວັດສາດຢູ່ລະຫວ່າງຜູ້ນຳທີ່ເກັ່ງກ້າເຊັ່ນໂມເຊ/ໂຢຊວຍແລະພວກກະສັດ. ພວກເຮົາສາມາດສັງເກດເຫັນຂໍ້ຄວາມໃນປະເພດນີ້ຢູ່ຫລາຍບ່ອນ: "ໃນສມັຍນັ້ນ ຊາດອິສຣາເອນບໍ່ທັນມີກະສັດເທື່ອ ແລະຕ່າງຄົນກໍເຮັດຕາມໃຈມັກຂອງໃຜລາວ" (ພປ 17: 6, 18: 1, 21: 25). ການຂາດຜູ້ນຳພາເຮັດໃຫ້ປະຊາຊົນເລີ້ມເຮັດບາບ ແລະເລີ້ມບົວລະບັດຮັບໃຊ້ພຣະອື່ນໆ.

ພວກຜູ້ປົກຄອງໃນສມັຍນັ້ນບໍ່ໄດ້ມີອຳນາດທົ່ວປະເທດອິສຣາເອນ ແຕ່ຈະມີອຳນາດໃນເຂດທ້ອງຖິ່ນຂອງຕະກຸນນຶ່ງຫລືສອງສາມຕະກຸນ. ຫລາຍເຣື່ອງໃນພຣະທັມພວກຜູ້ປົກຄອງອາດຈະເປັນເຣື່ອງດຽວກັນແຕ່ຂຽນໄວ້ຢູ່ຄົນລະບົດ. ປຶ້ມຜູ້ປົກຄອງເລີ້ມຈາກເວລາສຳຄັນໃນປະວັດສາດຂອງຊົນຊາດອິສຣາເອນ. ຄົນລຸ້ນໃໝ່ໄດ້ນຳພາປະເທດຊາດໃນແຜ່ນດິນແຫ່ງພຣະສັນຍາ ຫລັງຈາກຝູງຊົນທີ່ໄດ້ອອກມາຈາກເອຢິບໄດ້ຕາຍໄປໝົດແລ້ວ. ຄົນລຸ້ນນີ້ມີໂອກາດທີ່ຈະລືມພຣະເຈົ້າໄດ້ງ່າຍ ເພາະພວກເຂົາບໍ່ໄດ້ມີປະສົບການເໝືອນພໍ່ແມ່ຂອງພວກຕົນທີ່ໄດ້ທຳມາຫາກິນຢູ່ໃນປ່າກັນດານ ແລະໄດ້ຮ່ວມສູ້ຮົບກັບໂຢຊວຍ.

ໃນສມັຍພຣະສັນຍາເດີມ ພຣະເຈົ້າໄດ້ຊົງເວົ້າກັບບຸກຄົນຫລືກຸ່ມບຸກຄົນຜ່ານທາງທູດສວັນ ຫລືຜ່ານທາງນິມິດ. ໃນພວກຜູ້ປົກຄອງ 2, ປະຊາຊົນໄດ້ປ່ຽນວິຖີຊີວິດຈາກການບໍ່ຢູ່ເປັນທີ່ ໄປສູ່ການຕັ້ງຖິ່ນຖານຖາວອນໃນແຜ່ນດິນແຫ່ງພຣະສັນຍາ; ໃນເວລາສຳຄັນນີ້ ທູດສວັນໄດ້ປາກົດແລະປະກາດຄຳເຕືອນຂອງພຣະເຈົ້າແລະການພິພາກສາກັບຊົນຊາດອິສຣາເອນ. ທູດສວັນ ຫລືເທວະດາອົງນີ້ໄດ້ມາຈາກເມືອງກິນການ; ກິນການເປັນບ່ອນທີ່ອິສຣາເອນໄດ້ເອົາຫີນສິບສອງກ້ອນຕັ້ງໄວ້ເປັນອະນຸສອນ ເພື່ອລະນຶກເຖິງການຊົງປະທານແລະການຊົງປົກປັກຮັກສາຂອງພຣະເຈົ້າ (ຢຊ 4). ຫລັງຈາກໄດ້ຊ່ວຍປະຊາຊົນໃຫ້ລະນຶກເຖິງການຊົງປະທານຂອງພຣະເຈົ້າແລ້ວ, ເທວະດາໄດ້ກ່າວຫາພວກເຂົາວ່າ ພວກເຂົາໄດ້ເຮັດຜິດສັນຍາທີ່ໃຫ້ໄວ້ກັບພຣະເຈົ້າ; ພວກເຂົາໄດ້ໄປເຮັດສັນຍາກັບຄົນທ້ອງຖິ່ນ ແລະບໍ່ໄດ້ທຳລາຍແທ່ນບູຊາຂອງພວກເຂົາ. ເຫດສະນັ້ນອົງພຣະຜູ້ເປັນເຈົ້າຈະບໍ່ຊ່ວຍພວກເຂົາໃນການກວາດລ້າງຄົນທ້ອງຖິ່ນອອກຈາກດິນແດນທີ່ພວກເຂົາຈະຢູ່. ການລົງໂທດອິສຣາເອນນີ້ບໍ່ແມ່ນເຣື່ອງໃໝ່ ເພາະພຣະເຈົ້າໄດ້ຊົງເຮັດກັບພວກເຂົາກ່ອນແລ້ວໃນສມັຍຂອງໂຢຊວຍ (ຢຊ 23: 12-13).

## 1. <u>**ເຊັ່ນຄົນທີ່ສັດຊື່:**</u> (ພວກຜູ້ປົກຄອງ 2: 6-9)

ປະຊາຊົນໃນສມັຍຂອງໂຢຊວຍໄດ້ສັດຊື່ຕໍ່ພຣະເຈົ້າ (2: 7); ຄົນພວກນີ້ໄດ້ເຕີບໃຫຍ່ຕອນອິສຣາເອນຢູ່ໃນປ່າກັນດານ, ພວກເຂົາໄດ້ເຫັນຄວາມສັດຊື່ຂອງພຣະເຈົ້າໃນການປະທານສະບຽງອາຫານແລະອື່ນໆ. ພວກເຂົາໄດ້ຮຽນຮູ້ຈາກພໍ່ແມ່ເຣື່ອງການອົບຍົບອອກຈາກການເປັນທາດທີ່ເອຢິບ, ການຍ່າງຂ້າມນ້ຳທະເລແດງ, ແລະການພົ້ນພັຍຈາກກຳລັງທະຫານເອຢິບ. ພໍ່ແມ່ຂອງພວກເຂົາໄດ້ບອກເຖິງເຣື່ອງພຣະເຈົ້າປ່ອຍໃຫ້ພວກເຂົາຕາຍຢູ່ໃນປ່າກັນດານ ເພາະການບໍ່ເຮັດຕາມການຊົງສັ່ງໃຫ້ເຂົ້າໄປຢຶດເອົາແຜ່ນດິນແຫ່ງພຣະສັນຍາໃນຕອນທຳອິດ.

ຄົນໃນສມັຍຂອງໂຢຊວຍໄດ້ເຫັນຊັຍຊະນະທີ່ເຢຣິໂກ ແລະທີ່ການາອານຊຶ່ງພຣະເຈົ້າໄດ້ຊົງເຮັດສິ່ງອັສຈັນຖ້າມກາງພວກເຂົາ; ພວກເຂົາໄດ້ເຫັນພຣະພອນ ແລະໄດ້ເຫັນພຣະພິໂຣດຂອງພຣະເຈົ້າເວລາພວກເຂົາບໍ່ເຊື່ອຟັງ; ພວກເຂົາຕ້ອງການຢູ່ໃນພຣະພອນຂອງພຣະເຈົ້າ.

## 2. <u>**ເຊັ່ນຄົນທີ່ບໍ່ມີຄວາມເຊື່ອ:**</u> (ພວກຜູ້ປົກຄອງ 2: 10-15)

ພຣະທັມໃນ ພວກຜູ້ປົກຄອງ 2: 10-11 ບອກວ່າ "10…ຄົນໃນເຊັ່ນຕໍ່ມາກໍໄດ້ລືມໄລອົງພຣະຜູ້ເປັນເຈົ້າ…..11 ແລ້ວຊາດອິສຣາເອນກໍໄດ້ເລີ້ມເຮັດບາບຕໍ່ສູ້ອົງພຣະຜູ້ເປັນເຈົ້າ…" ພວກເຂົາໄດ້ຫັນໄປຂາບໄຫວ້ບັນດາພຣະອື່ນ (ຜປ 2: 12). ພວກເຂົາໄດ້ເຮັດໃຫ້ອົງພຣະຜູ້ເປັນເຈົ້າໂກດຮ້າຍ.

ຄຳຖາມ: ເປັນຫຍັງຄົນເຊັ່ນນີ້ຈຶ່ງບໍ່ມີຄວາມເຊື່ອ? ຄຳຕອບ: ຄົນເຊັ່ນຂອງໂຢຊວຍໄດ້ຮັບໃຊ້ພຣະເຈົ້າຢ່າງສັດຊື່ ແຕ່ພວກເຂົາບໍ່ໄດ້ສັ່ງສອນພວກລູກໆຢ່າງເຄັ່ງຄັດ ຫລືບໍ່ໄດ້ຖ່າຍທອດຄວາມເຊື່ອໃຫ້ຄົນເຊັ່ນຕໍ່ໄປ.

ຄົນເຊັ່ນຂອງໂຢຊວຍອາດຈະເປັນແບບຢ່າງທີ່ດີເຣື່ອງການຮັບໃຊ້ ແລະເຊື່ອຟັງພຣະເຈົ້າ ແຕ່ພວກເຂົາບໍ່ໄດ້ຖ່າຍທອດປະວັດສາດ ແລະສັ່ງສອນບັດຍັດຂອງພຣະເຈົ້າໃຫ້ຄົນລຸ້ນຕໍ່ໄປຕາມທີ່ພຣະເຈົ້າໄດ້ຊົງສັ່ງໄວ້ໃນປື້ມພຣະບັນຍັດທີສອງ 6: 4-9.

ຄົນແຕ່ລະເຊັ່ນມີໜ້າທີ່ໃນການຖ່າຍທອດເຣື່ອງຕ່າງໆໃຫ້ກັບລູກຫລານບໍ່ວ່າຈະເປັນເຣື່ອງຜິດພາດຫລືເຣື່ອງຄວາມບົກພ່ອງທີ່ພຣະເຈົ້າໄດ້ຊົງໃຫ້ກຳລັງ ຫລືຊົງຊ່ວຍກູ້ຈາກພັຍອັນຕະລາຍ. ເພາະການຂາດຄວາມຮູ້ແລະຄວາມເຂົ້າໃຈເຣື່ອງພຣະເຈົ້າ, ຄົນເຊັ່ນຕໍ່ໄປຈຶ່ງບໍ່ໄດ້ຕິດຕາມພຣະເຈົ້າ. ພວກເຂົາຄົງຄິດວ່າຄວາມສຳເຣັດໃນຊີວິດແມ່ນເກີດມາຈາກຄວາມສາມາດຂອງຕົນ ຫລືອາດຈະໄປສແວງຫາພຣະທີ່ສັນຍາຈະໃຫ້ພອນໂດຍບໍ່ຕ້ອງມີເງື່ອນໄຂ. ການໄປຂາບໄຫວ້ພຣະຂອງຊາວການາອານ ເປັນເຫດໃຫ້ພຣະເຈົ້າຈຳຕ້ອງຊົງເຮັດໃຫ້ຄຳເຕືອນຂອງພຣະອົງເຣື່ອງປ່ອຍໃຫ້ອິສຣາເອນຕົກຢູ່ໃນເງື້ອມມືຂອງສັດຕຣູ ສຳເຣັດກັບຄົນເຊັ່ນນີ້.

## 3. <u>ພຣະເຈົ້າຊົງຕອບປະຊາຊົນ:</u> (ພວກຜູ້ປົກຄອງ 2: 16-22)

ເຖິງພຣະເຈົ້າຈະລົງໂທດອິສຣາເອນເພາະການບໍ່ເຊື່ອຟັງກໍຕາມ, ພຣະອົງຍັງຊົງຮັກສາຄວາມຮັກສຳລັບພວກເຂົາ. ເວລາຊົນຊາດອິສຣາເອນຮ້ອງໃຫ້ເຖິງພຣະເຈົ້າເພາະການຖືກກົດຂີ່ຂົ່ມເຫງຂອງສັດຕຣູ, ພຣະອົງໄດ້ຊົງສົ່ງຜູ້ປົກຄອງໄປປົດປ່ອຍພວກເຂົາ. ແຕ່ເມື່ອຜູ້ປົກຄອງໄດ້ຕາຍໄປ, ອິສຣາເອນກໍກັບໄປຫາພຣະອື່ນໆ ຊຶ່ງນຳໄປສູ່ການພິພາກສາຂອງພຣະເຈົ້າອີກເທື່ອໃໝ່.

ພວກຜູ້ປົກຄອງ 2: 22 ບອກວ່າພຣະເຈົ້າໄດ້ຊົງໃຊ້ປະເທດທີ່ເປັນສັດຕຣູເພື່ອທົດສອບຊົນຊາດອິສຣາເອນວ່າພວກເຂົາຈະຕິດຕາມວິທີທາງຂອງພຣະອົງຫລືບໍ່. ການທົດສອບເປັນໂອກາດເລືອກສຳລັບປະຊາຊົນວ່າພວກເຂົາຈະຍອມຮັບການລົງໂທດແລ້ວກັບຄືນຫາພຣະເຈົ້າ ຫລືພວກເຂົາຈະເຮັດໃຈແຂງກະດ້າງຕໍ່ພຣະອົງ. ທຸກຄັ້ງ ທີ່ອິສຣາເອນກັບຄືນຫາພຣະເຈົ້າກໍເປັນເວລາຊົ່ວຄາວແລະໃນທີ່ສຸດພວກເຂົາກໍປ່ຽນໃຈ. ສາມເທື່ອໃນປື້ມພວກຜູ້ປົກຄອງ ທີ່ອິສຣາເອນໄດ້ເຫັນຄວາມສງົບສຸກເປັນເວລາດົນເຖິງ 40 ປີ (3: 11; 5: 31; 8: 28). ທຸກຄັ້ງຄວາມສງົບສຸກຈະຕິດຕາມດ້ວຍການກັບຄືນໄປເຮັດບາບ.

ໃນພຣະສັນຍາເດີມ 40 ປີບອກເຖິງເຊັ່ນນຶ່ງ; ພວກເຮົາໄດ້ເຫັນຄົນຫລາຍໆເຊັ່ນທີ່ບໍ່ໄດ້ຖ່າຍທອດຄວາມເຊື່ອໃຫ້ກັບຄົນເຊັ່ນຕໍ່ໄປ. ສະນັ້ນຄົນເຊັ່ນໃໝ່ຈຶ່ງຫັນໄປຫາພຣະຫຽມ; ຫລາຍເທື່ອພວກເຂົາມັກຄິດຜິດວ່າພຣະພອນຂອງພຣະເຈົ້າຈະຊົງຢູ່ກັບອິສຣາເອນ ແລະພຣະອົງຈະປົກປັກຮັກສາລູກຫລານຂອງພວກຕົນຕລອດໄປ.

ໃນພາກຕົ້ນຂອງປື້ມພວກຜູ້ປົກຄອງ ພວກເຮົາພໍສລຸບໄດ້ວ່າຄົນແຕ່ລະເຊັ່ນຈະຕ້ອງດຳເນີນຊີວິດໃນຄວາມເຊື່ອຕໍ່ໜ້າລູກໆ; ຫລາຍກວ່ານັ້ນຈະຕ້ອງມີການບອກເລົ່າເຣື່ອງລາວທີ່ຈະຊ່ວຍໃຫ້ຄົນເຊັ່ນຕໍ່ໄປຕິດຕາມພຣະເຈົ້າ ແລະເຮັດໃຫ້ເຣື່ອງທີ່ໄດ້ຍິນຈາກພໍ່ແມ່ກາຍເປັນເຣື່ອງສ່ວນຕົວ ເພື່ອຈະໄດ້ດຳເນີນຊີວິດໃນຄວາມ

ເຊື່ອດ້ວຍຕົວເອງ. ເມື່ອເຮັດສິ່ງນີ້ ພວກເຮົາຈະສາມາດຫລີກເວັ້ນຈາກການຫລົງລືມຝ່າຍຈິດວິນຍານ ແລະ ຈະໄດ້ດຳເນີນຊີວິດທີ່ພຣະເຈົ້າຈະພໍພຣະທັຍ.

## ຄວາມໝາຍສຳລັບວັນນີ້

ຄຣິສຕະຈັກສາມາດທີ່ຈະດັບສູນໄດ້ໃນເຊັ່ນຕໍ່ໄປ. ພວກເຮົາອາດຈະຕິຕຽນຣັຖບານ ຫລືໂຮງຮຽນວ່າບໍ່ນັບຖືຢຳເກງພຣະເຈົ້າ; ແຕ່ຄວາມຜິດແມ່ນຂອງພວກເຮົາ ຖ້າເຮົາບໍ່ໄດ້ຖ່າຍທອດຄວາມເຊື່ອໃຫ້ຄົນເຊັ່ນຕໍ່ໄປ. ພວກເຮົາໃນຖານະຄຣິສຕະຈັກເປັນຜູ້ຮັກສາ ຫລືແບກຂ່າວປະເສີດ. ໜ້າທີ່ຂອງພວກເຮົາຄືການປະກາດຂ່າວປະເສີດດ້ວຍການບອກກ່າວແລະການປະພຶດ. ສາມຢ່າງທີ່ພວກເຮົາເຄີຍຜິດພາດ: 1. ພວກເຮົາບໍ່ໄດ້ເຫລົ່າເຣື່ອງກ່ຽວກັບຄວາມເຊື່ອສຳລັບຊີວິດໃຫ້ລູກແລະຫລານຟັງ; 2. ເຣື່ອງທີ່ໄດ້ເວົ້າ ພວກເຮົາບໍ່ໄດ້ເອົາພຣະເຈົ້າເປັນຈຸດສູນກາງ ຫລື ພວກເຮົາບໍ່ໄດ້ເວົ້າເຣື່ອງຊີວິດຂອງການເປັນສາວົກທີ່ແທ້; 3. ຄົນຂ້າງນອກບໍ່ໄດ້ເຫັນຂ່າວປະເສີດອັນບໍຣິສຸດໃນຊີວິດຂອງພວກເຮົາ ຫລືພວກເຂົາພຽງຮູ້ແຕ່ວ່າພວກເຮົາບໍ່ເຮັດຫຍັງແດ່ ແລະບໍ່ກິນຫຍັງແດ່. ໃຫ້ພວກເຮົາເປັນຄືຄົນອິສຣາເອນໃນສມັຍເດີມ, ໃຫ້ພວກເຂົາເຈົ້າຈົດຈຳສິ່ງທີ່ພຣະເຈົ້າໄດ້ຊົງກະທຳໃນຊີວິດ; ໃຫ້ພວກເຮົາປະຖິ້ມສິ່ງທີ່ຈະແກ່ເຮົາອອກຈາກພຣະເຈົ້າ ຫລືເປັນອຸປສັກບໍ່ໃຫ້ຄົນອື່ນມາເຖິງພຣະເຈົ້າ.

## ຄຳຖາມເພື່ອພິຈາຣະນາ

1. ທ່ານໄດ້ຖ່າຍທອດເຣື່ອງຄວາມເຊື່ອໃຫ້ກັບຄົນເຊັ່ນຕໍ່ໄປວິທີໃດ?

2. ມີ “ສິ່ງອັສຈັນແນວໃດ” ທີ່ຕັກເຕືອນທ່ານເຖິງຄວາມສັດຊື່ຂອງພຣະອົງໃນເຣື່ອງຂອງທ່ານ?

3. ທ່ານໄດ້ສະແດງຄວາມເຊື່ອໃນພຣະເຈົ້າວິທີໃດໃນຊີວິດແຕ່ລະວັນ?

4. ມີ “ແທ່ນບູຊາພຣະຕ່າງຊາດ” ແນວໃດແດ່ທີ່ກຳລັງດຶງທ່ານອອກຈາກການຕິດຕາມພຣະເຈົ້າ?

*ສຄ*

# ບົດຮຽນທີ 8
# ເດໂບຣາ: ຜູ້ຍິງທີ່ດີເດັ່ນ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້**: ພວກຜູ້ປົກຄອງ 4: 1-22

**ພູມຫລັງຂອງພຣະຄັມພີ**: ພວກຜູ້ປົກຄອງ 4 ແລະ 5

**ຈຸດສໍາຄັນສໍາລັບບົດຮຽນນີ້:** ພຣະເຈົ້າຊົງໃຊ້ຜູ້ຍິງຫລາຍຄົນເພື່ອໃຫ້ພຣະປະສົງສໍາເຣັດ.

**ຄໍາຖາມເພື່ອຄົ້ນຄວ້າ**: ຜູ້ຍິງຈະຮັບໃຊ້ພຣະເຈົ້າໄດ້ວິທີໃດ?

**ຈຸດປະສົງຂອງການສຶກສານີ້:** ເພື່ອສໍາຣວດເບິ່ງພາກສ່ວນຂອງເດໂບຣາໃນການຮັບໃຊ້ພຣະເຈົ້າ ແລະ ການປົດປ່ອຍອິສຣາເອນ ວ່າຈະສອນສິ່ງໃດແດ່ເຣື່ອງພາກສ່ວນຂອງຜູ້ຍິງໃນການຮັບໃຊ້ສມັຍນີ້.

**ອ່ານລວບ:** ເວລາບາຣັກບໍ່ຍອມອອກສູ້ຮົບຖ້າບໍ່ມີນາງ, ເດໂບຣາໄດ້ນໍາພາອິສຣາເອນໄປສູ່ຊັຍຊະນະຕໍ່ຊາວການາອານໂດຍການຊ່ວຍເຫລືອຂອງຍິງອີກຜູ້ນຶ່ງ.

## ຄໍານໍາ

ໃນຄຣິສຕະຈັກທຸກໆເຊົ້າວັນອາທິດ ພວກເຮົາສັງເກດເຫັນວ່າຄົນຈໍານວນສ່ວນຫລາຍຈະແມ່ນຜູ້ຍິງ. ຍົກເວັ້ນບາງນິກາຍ, ຜູ້ຍິງຈະເປັນກຸ່ມໃຫຍ່ໃນພວກນັກຮ້ອງ ແລະພວກຄຣູສອນໂຮງຮຽນວັນອາທິດ. ຜູ້ຍິງມີສ່ວນໃນການຈັດຕັ້ງເຣື່ອງສັງຄົມ ແລະເຣື່ອງການຊ່ວຍເຫລືອຂອງຄຣິສຕະຈັກ.

ເຣື່ອງພາກສ່ວນຂອງຜູ້ຍິງໃນການຮັບໃຊ້ເປັນເຣື່ອງໂຕ້ຖຽງກັນຢູ່ສເມີ. ຕໍາແໜ່ງຜູ້ບໍວລະບັດ ແລະສິດຍາພິບານໄດ້ຖືກສງວນໄວ້ສໍາລັບຜູ້ຊາຍໃນຫລາຍໆຄຣິສຕະຈັກ; ພຣະຄໍາໄດ້ວາງຂອບເຂດໄວ້ຫລາຍບ່ອນໃນເຣື່ອງນີ້. ແຕ່ເປັນທີ່ຮັບຮູ້ກັນວ່າພຣະເຈົ້າໄດ້ຊົງເລືອກຜູ້ຍິງຫລາຍໆຄົນເພື່ອຕໍາແໜ່ງສໍາຄັນ. ປື້ມພວກຜູ້ປົກຄອງ 4 ແລະ 5 ໄດ້ບອກເຖິງເຣື່ອງສໍາຄັນທີ່ສຸດ ຄືເຣື່ອງຂອງເດໂບຣາ, ຜູ້ຍິງຜູ້ກ້າຫານ. ເຣື່ອງນີ້ສາມາດສອນພວກເຮົາເຖິງວິທີທີ່ພຣະເຈົ້າໄດ້ຊົງໃຊ້ຜູ້ຍິງເພື່ອເຮັດໃຫ້ພຣະປະສົງສໍາເຣັດ ບໍ່ວ່າຈະຢູ່ເບື້ອງຫລັງ ຫລືອອກໜ້າອອກຕາ.

## 1. ຜູ້ຍິງທີ່ສລາດໃນອິສຣາເອນ: (ພວກຜູ້ປົກຄອງ 4: 1-5)

ເຣື່ອງຂອງເດໂບຣາເລີ້ມຕົ້ນດ້ວຍຂໍ້ຄວາມທີ່ພວກເຮົາຄຸ້ນເຄີຍດີ, ປະຊາຊົນອິສຣາເອນກໍເຮັດບາບຕໍ່ສູ້ອົງພຣະຜູ້ເປັນເຈົ້າອີກ, ພຣະເຈົ້າຈຶ່ງມອບພວກເຂົາໃຫ້ຢູ່ໃຕ້ອໍານາດຂອງປະເທດສັດຕຣູ; ສັດຕຣູຜູ້ນີ້ແມ່ນເຈົ້າຢາບິນ ກະສັດຂອງຊາວການາອານຜູ້ທີ່ປົກຄອງຢູ່ນະຄອນຮາໂຊ. ຊິເຊຣາຊຶ່ງເປັນແມ່ທັບຂອງຢາບິນ ມີຣົດຮົບເຫລັກເກົ້າຮ້ອຍຄັນ (4: 3). ຊີຊາເຣມີກໍາລັງແລະອາວຸດທັນສມັຍກວ່າຊົນຊາດອິສຣາເອນ.

ໃນຕອນນີ້ ນາງເດໂບຣາເປັນຜູ້ທຳນວາຍ ແລະເປັນຜູ້ປົກຄອງຂອງຊາວອິສຣາເອນ. ຜູ້ທຳນວາຍເປັນບຸກຄົນທີ່ພຣະເຈົ້າຊົງເອີ້ນ ແລະພຣະອົງໄດ້ປະທານຈິດວິນຍານຮູ້ສັງເກດດີຊົ່ວ ແລະສາມາດເຂົ້າໃຈເຖິງນໍ້າພຣະທັຍແລະພຣະປະສົງ. ເດໂບຣາໃຊ້ຂອງພຣະຣາຊທານເຫລົ່ານັ້ນເພື່ອພິພາກສາເຣື່ອງໃຫ້ກັບປະຊາຊົນ.

ພວກເຮົາບໍ່ຮູ້ວ່ານາງໄດ້ຢູ່ໃນຕຳແໜ່ງດົນເທົ່າໃດ ແຕ່ເດໂບຣາເປັນຜູ້ມີຊື່ສຽງດີເພາະສະຕິປັນຍາ ແລະມີຄວາມເຂັ້ມແຂງໃນການນຳພາຂອງນາງ. ພຣະຄຳບອກວ່າ, “ປະຊາຊົນອິສຣາເອນໄດ້ມາຫານາງເດໂບຣາທີ່ກ້ອງຕົ້ນຕານລະຫວ່າງເມືອງຣາມາແລະເມືອງເບັດເອນໃນແຖບພູດອຍເອຟຣາອິມ ບ່ອນທີ່ນາງນັ່ງເພື່ອໃຫ້ຄຳປຶກສາຫາລື” (4: 5).

## 2. <u>ການເອີ້ນໃຫ້ເຮັດຖືກປະຕິເສດ:</u> (ພວກຜູ້ປົກຄອງ 4: 6-10)

ປຶ້ມພວກຜູ້ປົກຄອງ 4: 6-10 ເນັ້ນເຣື່ອງຄວາມເຂັ້ມແຂງໃນການນຳພາວ່າເປັນຊື່ສຽງຂອງນາງເດໂບຣາ. ໂດຍການນຳພາຂອງພຣະເຈົ້າ, ເດໂບຣາໄດ້ສົ່ງຄົນໄປເອີ້ນບາຣັກຜູ້ເປັນແມ່ທັບທີ່ເມືອງກາເດັດ; ແລະບາຣັກກໍໄດ້ມາພົບນາງເດໂບຣາ. ເດໂບຣາໄດ້ສັ່ງໃຫ້ບາຣັກຈັດຕຽມກຳລັງທະຫານໄປທີ່ພູເຂົາຕາໂບເຣ ເພື່ອຕໍ່ສູ້ກັບກອງທັບຂອງຊີເຊຣາ; ນາງໄດ້ບອກບາຣັກວ່າພຣະເຈົ້າ “ຈະໃຫ້ເຈົ້າຮັບຊະນະລາວ” (4: 7).

ເຖິງຈະມີການຄໍ້າປະກັນໄຊຊະນະກໍຕາມ, ບາຣັກປະຕິເສດທີ່ຈະເຮັດຕາມພຣະບັນຊາຂອງພຣະເຈົ້າຖ້າເດໂບຣາບໍ່ໄປກັບກອງທັບອິສຣາເອນ (4: 8). ບາງຄົນຖາມວ່າ, ເປັນຫຍັງແມ່ທັບຂອງຊົນຊາດອິສຣາເອນຈຶ່ງຢາກໄດ້ຜູ້ປົກຄອງຜູ້ຍິງໄປຮັບນຳ? ລາວຕ້ອງການກຳລັງໃຈບໍ ຫລືຕ້ອງການຈະຫລີກການຕ້ອງຕິຫາກມີການເສັຽໄຊ. ຄວາມຈິງກໍຄືວ່ານາງເດໂບຣາເປັນຜູ້ນຳທີ່ເຂັ້ມແຂງ ແລະບາຣັກຕ້ອງການເພິ່ງໃນຄວາມສາມາດຂອງນາງ.

ເດໂບຣາຕ້ອງການໃຫ້ອິສຣາເອນມີໄຊຊະນະຕໍ່ປະເທດສັດຕູ; ສະນັ້ນນາງຈຶ່ງຍິນດີໄປສນາມຮົບກັບກອງທັບຂອງບາຣັກ. ນາງໄດ້ບອກບາຣັກໃນທຳນອງນີ້ວ່າ ເພາະເຈົ້າຂາດຄວາມເຊື່ອພຣະເຈົ້າຈະບໍ່ໃຫ້ເຈົ້າໄດ້ຊື່ສຽງຈາກການຮົບຄັ້ງນີ້ ແຕ່ໃຫ້ເຈົ້າມີໄຊຊະນະຕໍ່ກອງທັບຂອງຊີເຊຣາໂດຍຈະມອບລາວ “ໄວ້ຢູ່ໃນເງື້ອມມືຂອງຍິງຄົນນຶ່ງ” (4: 9). ເພາະເດໂບຣາໄປກັບລາວ, ບາຣັກສາມາດຮວມກຳລັງທະຫານໄດ້ 10, 000 ຄົນ.

## 3. <u>ພຣະເຈົ້າປະທານໄຊຊະນະ:</u> (ພວກຜູ້ປົກຄອງ 4: 11-16)

ພຣະຄຳຂໍ້ 4: 11 ແນະນຳຍິງຄົນນຶ່ງຊື່ເຮເບ ຊາວເກນິດ; ລາວບໍ່ໄດ້ຢູ່ຮ່ວມກັບຄົນອື່ນໆ ແຕ່ໄດ້ຕັ້ງຜ້າເຕັນເປັນທີ່ພັກຢູ່ກ້ອງຕົ້ນໂອກໃຫຍ່ທີ່ຊານັນນິມ, ທາງພາກເໜືອຂອງເກນິດ, ໃກ້ກັບເມືອງກາເດັດ. ພຣະຄຳບໍ່ໄດ້ບອກເຫດຜົນໂດຍລະອຽດເຣື່ອງການຍົກຍ້າຍຂອງນາງເຮເບ.

ກັບມາເຖິງເຣື່ອງການສູ້ຮົບລະຫວ່າງອິສຣາເອນ ແລະກອງທັບລົດຮົບຂອງຊີເຊຣາໃນ 4: 12-16; ເດໂບຣາໄດ້ສັ່ງບາຣັກໃຫ້ນຳກຳລັງລົງຈາກພູຕາໂບເຣໄປໂຈມຕີຊີເຊຣາ. ໃນຂະນະທີ່ສູ້ຮົບຢູ່ນັ້ນພຣະເຈົ້າໄດ້ຊົງເຮັດ

ໃຫ້ຊີເຊຣາເກີດຄວາມສັບສົນວຸ້ນວາຍ;ລາວໄດ້ໂດດອອກຈາກລົດຮົບແລ້ວແລ່ນໜີ; ບາຣັກຈຶ່ງໄລ່ "ຕາມລົດຮົບແລະກອງທະຫານໄປ ຈົດຮອດເມືອງຮາໂຣເຊັດຂອງຄົນຕ່າງຊາດ" (4: 16). ທະຫານຂອງຊີເຊຣາຖືກຂ້າຈົນບໍ່ເຫລືອ; ສ່ວນຊີເຊຣາກໍໜີປົບໄປລີ້ໃນຜ້າເຕັນຂອງນາງຢາເອນ ເມັຽຂອງເຮເບຊາວເກນິດ (4: 17).

## 4. <u>ຍິງຜູ້ນຶ່ງສັງຫານນາຍພົນ:</u> (ພວກຜູ້ປົກຄອງ 4: 17-22)

ຊີເຊຣາໄດ້ໜີປົບໄປລີ້ໃນຜ້າເຕັນຂອງນາງຢາເອນ; ເມື່ອນາງຢາເອນໄດ້ເຫັນນາຍພົນຊີເຊຣາແລ່ນເຂົ້າມາທາງເຕັນ, ນາງຈຶ່ງເຊີນໃຫ້ເພິ່ນພັກເຊົາ. ຊີຊາຣາຈຶ່ງຂໍນໍ້າດື່ມ ແລະຂໍໃຫ້ນາງຢາເອນໄປຢືນຢູ່ໜ້າເຕັ້ນ ແລະໃຫ້ຕົວະຜູ້ທີ່ມາຊອກຫາຄົນວ່າ ບໍ່ມີໃຜລີ້ຢູ່ໃນເຕັນ. ນາງຢາເອນໄດ້ເອົານໍ້ານົມໃຫ້ຊີເຊຣາດື່ມແລະໄດ້ໃຊ້ຜ້າປົກເພິ່ນໄວ້.

ຍ້ອນຄວາມອິດເມື່ອຍນາຍພົນຊີເຊຣາກໍນອນຫລັບ;ນາງຢາເອນກໍເອົາຄ້ອນຕີແລະຫລັກສຽບຜ້າເຕັນ "ຕອກໃສ່ທີ່ຂະໝັບຂອງຊີເຊຣາຈົນຊອດຮອດພື້ນດິນ" (ຂໍ້ 21). ແລ້ວນາງກໍອອກໄປຢືນຢູ່ໜ້າເຕັນ; "ເມື່ອບາຣັກມາຊອກຫາຊີເຊຣາ ນາງຢາເອນຈຶ່ງອອກໄປພົບ" ແລ້ວເຊີນເພິ່ນມາຫາຄົນທີ່ເພິ່ນກຳລັງຊອກຫາ. ບາຣັກໄດ້ພົບຊີເຊຣາ "ນອນຕາຍຢູ່ຄາພື້ນດິນ ໂດຍມີຫລັກໄມ້ສຽບຢູ່ຂະໝັບ" (ຂໍ້ 22). ພຣະຄຳ ຂໍ້ 23 ບອກວ່າ "ໃນວັນນັ້ນ ພຣະເຈົ້າຊົງກະທຳໃຫ້ເຈົ້າຊີວິດຢາບິນທີ່ປົກຄອງພວກການາອານເສັຽຊັຍໃຫ້ພວກອິສຣາເອນ."

ພຣະເຈົ້າໄດ້ຊົງໃຊ້ຜູ້ຍິງຄົນນຶ່ງທີ່ບໍ່ມີໃຜຮູ້ມາກ່ອນ ເພື່ອປົດປ່ອຍຊາວອິສຣາເອນຈາກອຳນາດຂອງການາອານ ພວກເຮົາສັງເກດເຫັນວ່າພຣະເຈົ້າຊົງໃຊ້ຄວາມສາມາດຂອງແຕ່ລະຄົນ ເວລາພວກເຮົາຍອມໃຫ້ພຣະອົງໃຊ້. ພຣະເຈົ້າຊົງໃຊ້ ນາງເດໂບຣາຜູ້ທີ່ຄົນຮູ້ກັນດີ ຫລືຊົງໃຫ້ນາງຢາເອນຜູ້ທີ່ຄົນບໍ່ຮູ້ເພື່ອໃຫ້ພັນທະກິດອັນຍິ່ງໃຫຍ່ຂອງພຣະອົງສຳເຣັດ.

## <u>ຄວາມໝາຍສຳລັບສມັຍນີ້</u>

ແນ່ນອນເຣື່ອງການຮັບໃຊ້ຂອງຜູ້ຍິງຈະເປັນຫົວຂໍ້ທີ່ຈະຕ້ອງສົນທະນາກັນຕໍ່ໄປ. ຜູ້ຍິງທັງຫລາຍທີ່ຮູ້ສຶກວ່າພຣະເຈົ້າໄດ້ຊົງເອີ້ນໃຫ້ຮັບໃຊ້ໃນຕຳແໜ່ງຜູ້ນຳຊຶ່ງຕາມປົກຕິແລ້ວແມ່ນວຽກຜູ້ຊາຍ ຄົງຈະຕ້ອງພົບກັບການຕໍ່ຕ້ານໄປອີກນານ.

ພຣະເຈົ້າຊົງປະທານຂອງພຣະຣາຊທານໃຫ້ຜູ້ເຊື່ອທັງຫລາຍ, ທັງຊາຍແລະຍິງ, ເພື່ອເສີມສ້າງພຣະກາຍຂອງພຣະອົງ (ຄາລາເຕັຽ 3: 28). ພວກເຮົາຍັງຮູ້ວ່າພັນທະກິດການຮັບໃຊ້ຫລາຍໆຢ່າງໄດ້ຖືກເລີ້ມແລະນຳພາໂດຍຜູ້ຍິງ. ແທນທີ່ຈະຫ້າມຫລືຕໍ່ຕ້ານ, ຄຣິສຕະຈັກຄວນສິ່ງເສີມທຸກຄົນທີ່ພຍາຍາມເຮັດໃຫ້ນໍ້າພຣະທັຍຂອງພຣະເຈົ້າສຳເຣັດໃນຊີວິດຂອງພວກເຂົາເຈົ້າ. ພວກເຮົາຄວນຊົມຊື່ນຍິນດີເພາະໄດ້ຮັບໃຊ້ອົງພຣະຜູ້ເປັນເຈົ້າຜູ້ຊົງເອີ້ນ, ຈັດຕຽມ, ແລະໃຊ້ບາງຄົນເພື່ອເຮັດພັນທະກິດຂອງພຣະອົງໃຫ້ສຳເຣັດຢູ່ໃນໂລກນີ້.

## <u>ຄຳຖາມເພື່ອພິຈາຣະນາ</u>

1. ທ່ານຄິດວ່າຜູ້ຍິງຄວນຮັບໃຊ້ແນວໃດແດ່ ໃນພັນທະກິດຂອງພຣະເຈົ້າ?

2. ທ່ານຈະໜູນໃຈຜູ້ຍິງໃນຄຣິສຕະຈັກຂອງທ່ານທີ່ຮັບໃຊ້ໃນຕຳແໜ່ງຜູ້ນຳວິທີໃດແດ່?

3. ຜູ້ຍິງ (ຫລືຜູ້ຊາຍ) ຈະນຳພາການຮັບໃຊ້ໃນຄຣິສຕະຈັກ  ແບບຢູ່ເບື້ອງຫລັງໄດ້ວິທີໃດ?

4. ທ່ານມີຂໍ້ແກ້ຕົວຢ່າງໃດ ຈຶ່ງບໍ່ຍອມເຮັດຕາມການຊົງເອີ້ນຂອງພຣະເຈົ້າ?

*ສຄ*

# ບົດຮຽນທີ 9
## ກີເດໂອນ: ຕໍ່ສູ້ຄວາມສົງສັຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ພວກຜູ້ປົກຄອງ 6: 1-2, 11-28, 36-40

**ພູມຫລັງຂອງພຣະຄັມພີ**: ພວກຜູ້ປົກຄອງ 6

**ຈຸດສຳຄັນສຳລັບບົດຮຽນນີ້:** ພຣະເຈົ້າຊົງເຂົ້າໃຈຄວາມສົງສັຍຂອງພວກເຮົາ, ແຕ່ໃນທີ່ສຸດພວກເຮົາຈຳຕ້ອງຕິດຕາມການນຳພາຂອງພຣະອົງ.

**ຄຳຖາມເພື່ອຄົ້ນຄ້ວາ**: ການມີຄວາມສົງສັຍໃນແຜນການຂອງພຣະເຈົ້າຜິດບໍ່?

**ຈຸດປະສົງຂອງການສຶກສານີ້:** ເພື່ອເອົາຊະນະຄວາມສົງສັຍດ້ວຍການກ້າວຕໍ່ໄປໂດຍການເຊື່ອຟັງໃນການດຳເນີນຊີວິດໃນພຣະເຈົ້າ.

**ອ່ານລວບ:** ຫລັງຈາກໄດ້ຮັບການຊົງເອີ້ນໃຫ້ປົດປ່ອຍຊົນຊາດອິສຣາເອນຈາກພວກມີດີອານ, ກີເດໂອນສະແດງຄວາມສົງສັຍກ່ຽວກັບແຜນການຂອງພຣະເຈົ້າ ແລະລາວໄດ້ທົດສອບພຣະເຈົ້າເພື່ອຄວາມໝັ້ນໃຈໃນການຊົງເອີ້ນ.

### ຄຳນຳ

ພວກເຮົາມັກເຣື່ອງຊຸບເປີຮີໂຣ (Superheroes) ຫລືວິຣະຊົນ ເພາະພວກເຮົາຢາກມີຄວາມສາມາດເໝືອນພວກເພິ່ນ; ຊຸບເປີຮີໂຣຮູ້ຈັກແກ້ໄຂບັນຫາຕ່າງໆຢ່າງວ່ອງໄວ. ພວກເຮົາຫລາຍຄົນບໍ່ໝັ້ນໃຈໃນຄວາມສາມາດຂອງຕົວເອງ; ຫລາຍຄັ້ງພວກເຮົາກໍບໍ່ໝັ້ນໃຈວ່າພຣະເຈົ້າຈະສາມາດໃຊ້ພວກເຮົາໃນວຽກນັ້ນໆບໍ່ ທັງທີ່ພຣະອົງໄດ້ຊົງສັນຍາວ່າຈະຊົງໃຫ້ກຳລັງແລະຊົງໃຫ້ການນຳພາ. ເວລາພົບຄວາມລຳບາກໃນການຮັບໃຊ້, ພວກເຮົາກໍຄິດວ່າການຖາມພຣະເຈົ້າເຣື່ອງການຊົງນຳພາເປັນສິ່ງທີ່ຜິດ; ສິ່ງນັ້ນບອກເຖິງຄວາມບໍ່ໝັ້ນໃຈໃນພຣະອົງ; ໃນທີ່ສຸດຄວາມສົງສັຍກໍຫາຍໄປ ແລະພວກເຮົາກໍສາມາດກ້າວຕໍ່ໄປ.

ຫລາຍຄົນໃນພຣະຄັມພີ, ຮວມທັງວິຣະຊົນຜູ້ຍິ່ງໃຫຍ່, ເຄີຍຕໍ່ສູ້ກັບຄວາມສົງສັຍ.ຈາກເຣື່ອງຂອງກີເດໂອນ, ພວກເຮົາຮຽນຮູ້ວ່າພຣະເຈົ້າບໍ່ໄດ້ຊົງພິພາກສາຄວາມສົງສັຍ; ແຕ່ພຣະອົງຊົງຊ່ວຍຕອບຄຳຂ້ອງໃຈດ້ວຍຄຳຕອບທີ່ໃຫ້ອຳນາດແກ່ພວກເຮົາໃນການເຮັດສິ່ງທີ່ພຣະອົງໄດ້ຊົງເອີ້ນໃຫ້ເຮັດ.

### 1. ຜູ້ຂົ່ມເຫງຄົນໃໝ່: (ພວກຜູ້ປົກຄອງ 6: 1-2)

ບົດຮຽນນີ້ເລີ່ມເໝືອນກັບບົດທີ່ຜ່ານມາ; ຊົນຊາດອິສຣາເອນໄດ້ເຮັດບາບຕໍ່ສູ້ພຣະເຈົ້າ; ພຣະເຈົ້າໄດ້ຊົງລົງໂທດພວກເຂົາໂດຍໃຫ້ພວກມີດີອານມາປົກຄອງພວກເຂົາເປັນເວລາເຈັດປີ. ພວກມີດີອານບໍ່ເໝືອນສັດຕຣູພວກອື່ນໆທີ່ພຣະເຈົ້າຊົງເຄີຍໃຊ້; ພວກມີດີອານເປັນເຊື້ອສາຍຂອງອັບຣາຮາມ ໂດຍນາງເກຕູຣາ, ພັລຍາ

ຄົນທີສອງຂອງທ່ານ. ອັບຣາຮາມມອບສົມບັດທີ່ມີໃຫ້ອີຊາກ ແລະສິ່ງເກຕູລາແລະລູກໆທັງຫລາຍໃຫ້ອອກໄປຢູ່ດິນແດນທາງຕາເວັນອອກ ຫ່າງໄກຈາກແຜ່ນດິນແຫ່ງພຣະສັນຍາ (ປຖກ 25: 1-6).

ເວລາໂມເຊປົບໜີຟາໂຣແຫ່ງເອຢິບ ທ່ານໄດ້ໄປຢູ່ຮ່ວມກັບພວກມີດີອານ; ເວລາໂມເຊນຳພາຊົນຊາດອິສຣາເອນຈະເຂົ້າແຜ່ນດິນແຫ່ງພຣະສັນຍາ, ພວກມີດີອານກໍບໍ່ຍອມໄປດ້ວຍ.ພວກມີດີອານເປັນພວກທຳອິດທີ່ນຳຊົນຊາດອິສຣາເອນໄປໄຫວ້ພຣະບາອານ (ຈົດບັນຊີ 25); ໃນຈົດບັນຊີ 31, ພຣະເຈົ້າຊົງສັ່ງໂມເຊໃຫ້ທຳລາຍພວກມີດີອານ.

ໃນພຣະຄຳພວກຜູ້ປົກຄອງ 6 ນີ້ປາກົດວ່າພວກມີດີອານມີກຳລັງເໜືອກວ່າຊາວອິສຣາເອນ; ພວກອິສຣາເອນບໍ່ສາມາດທີ່ຈະຢູ່ບ້ານເຮືອນຂອງຕົນເປັນປົກຕິ. ຂໍ້ 2 ບອກວ່າ “ພວກອິສຣາເອນຈຶ່ງໜີໄປລີ້ຢູ່ໃນຖ້ຳແລະຢູ່ໃນບ່ອນປອດພັຍຕາມເທິງພູ.” ພວກມີດີອານໄດ້ທຳລາຍຜົລປູກ ແລະຍຶດສັດທັງໝົດຂອງຊາວອິສຣາເອນ; ອິສຣາເອນຢູ່ໃນສະພາບເຊັ່ນນັ້ນເປັນເວລາ 7 ປີ.

## 2. <u>**ການເອີ້ນໃຫ້ລຸກຂຶ້ນ:**</u> (ພວກຜູ້ປົກຄອງ 6: 11-16)

ເວລາປະຊາຊົນອິສຣາເອນຮ້ອງໄຫ້ຫາພຣະເຈົ້າເພື່ອປົດປ່ອຍຈາກມືຂອງພວກມີດີອານ, ພຣະເຈົ້າໄດ້ຊົງສົ່ງທູດສວັນມາແຕ່ງຕັ້ງຊາຍຊື່ກີເດໂອນໃຫ້ເປັນຜູ້ປົດປ່ອຍ. ການພົບກັນຄັ້ງທຳອິດນີ້ກໍມີເຣື່ອງໜ້າຫົວຢູ່ສອງຢ່າງ: 1. ກີເດໂອນກຳລັງລີ້ຟາດເຂົ້າຢູ່ໃນບ່ອນບີບນ້ຳໝາກອະງຸ່ນ; ຕາມປົກຕິແລ້ວການຟາດເຂົ້າຈະຕ້ອງເຮັດຢູ່ກາງເດີ່ນ ເພື່ອລົມຈະໄດ້ພັດຂີ້ແກບອອກໄປຈາກເຂົ້າ. 2. ເທວະດາເອີ້ນກີເດໂອນວ່າ “ຊາຍຜູ້ອົງອາດກ້າຫານເອີຍ;” ຖ້າເປັນຄົນກ້າຫານເປັນຫຍັງຕ້ອງລີ້ພວກມີດີອານແລະຟາດເຂົ້າຢູ່ໃນອ່າງບີບໝາກອະງຸ່ນ.

ເທວະດາໄດ້ບອກກີເດໂອວ່າ “ອົງພຣະຜູ້ເປັນເຈົ້າສະຖິດຢູ່ກັບເຈົ້າ” (6: 13). ກີເດໂອນບໍ່ຢາກເຊື່ອຄຳເວົ້ານັ້ນ ເພາະພວກຕົນເປັນຜູ້ປົບລີ້ສັດຕຣູຢູ່ສເມີ; ແລະຖ້າພຣະເຈົ້າຊົງສະຖິດຢູ່ນຳເປັນຫຍັງເຫດຮ້າຍຈຶ່ງເກີດຂຶ້ນ. ຄົນໃນເຊັ່ນຂອງກີເດໂອນເຄີຍໄດ້ຍິນສິ່ງຍິ່ງໃຫຍ່ທີ່ພຣະເຈົ້າໄດ້ຊົງກະທຳເພື່ອຊົນຊາດອິສຣາເອນ; ແລະພວກເຂົາເຊື່ອວ່າພຣະເຈົ້າໄດ້ປະຖິ້ມພວກເຂົາແລ້ວ.

ພຣະເຈົ້າບໍ່ຟັງຄຳຈົ່ມຂອງກີເດໂອນ ແຕ່ໄດ້ສັ່ງເຂົາໃຫ້ໄປກູ້ເອົາຊາດອິສຣາເອນ (6: 14). ກີເດໂອນຍັງສົງສັຍການຊົງເອີ້ນຂອງພຣະເຈົ້າ ເພາະລາວຢູ່ໃນຕະກຸນທີ່ອ່ອນແອທີ່ສຸດໃນເຜົ່າມານາເຊ; ນອກນັ້ນກີເດໂອນຍັງບອກພຣະເຈົ້າວ່າ ລາວເອງເປັນຜູ້ສຳຄັນໜ້ອຍກວ່າໝູ່ໃນຄອບຄົວ (6: 15). ແນ່ນອນກີເດໂອນສົງສັຍຄວາມສາມາດຂອງຕົວເອງທີ່ຈະໄປເຮັດພັນທະກິດອັນສຳຄັນທີ່ພຣະເຈົ້າໄດ້ຊົງສັ່ງ. ເທວະດາໄດ້ບອກກັບກີເດໂອນອີກວ່າ “ເຈົ້າເຮັດສິ່ງນີ້ໄດ້ ເພາະເຮົາຈະຊ່ວຍເຈົ້າ. ເຈົ້າຈະທຳລາຍພວກມີດີອານໄດ້ຢ່າງງ່າຍດາຍຄ້າຍກັບວ່າພວກເຂົາມີພຽງແຕ່ຄົນດຽວເທົ່ານັ້ນ” (6: 16).

## 3. <u>**ຂໍ້ໝາຍສຳຄັນ:**</u> (ພວກຜູ້ປົກຄອງ 6: 17-24)

ກິເດໂອນຂໍເບິ່ງໝາຍສຳຄັນເພື່ອຈະຮູ້ວ່າພຣະເຈົ້າຊົງເອີ້ນລາວໃຫ້ເຮັດສິ່ງນັ້ນແທ້. ຫລັງຈາກນັ້ນກິເດໂອນກໍໄປຕຽມອາຫານເພື່ອແຂກຂອງລາວ; ເວລາກັບມາເທວະດາກໍສັ່ງໃຫ້ກິເດໂອນເອົາອາຫານໄປວາງໄວ້ທີ່ເທິງໂງ່ນຫີນ ແລະໃຫ້ຖອກນ້ຳແກງໃສ່; ແລ້ວເທວະດາກໍເອົາປາຍໄມ້ເທົ້າແຕະຊີ້ນແລະເຂົ້າຈີ່, "ໃນທັນໃດ ໄຟກໍລຸກຂຶ້ນຈາກໂງ່ນຫີນ ແລະໄໝ້ຊີ້ນກັບເຂົ້າຈີ່ນັ້ນໝົດກ້ຽງ" (6: 21). ຈາກນັ້ນເທວະດາກໍຫາຍໄປ; ກິເດໂອນຮູ້ທັນທີວ່າລາວໄດ້ຢູ່ຕໍ່ໜ້າທູດສວັນຂອງພຣະເຈົ້າ.

ກິເດໂອເກີດຄວາມຢ້ານຢ່າງແຮງ ເພາະຕາມທັມນຽມແລ້ວ ຜູ້ໃດທີ່ໄດ້ເຫັນພຣະເຈົ້າຕໍ່ໜ້າຕໍ່ຕາຈະຕ້ອງຕາຍເປັນແນ່; ອົງພຣະຜູ້ເປັນເຈົ້າຮູ້ໃຈກິເດໂອນ ແລະພຣະອົງຊົງບອກລາວວ່າ "ຈົ່ງມີສັນຕິສຸກ ຢ່າຢ້ານເລີຍ ເຈົ້າຈະບໍ່ຕາຍດອກ" (6: 23). ກິເດໂອນຈຶ່ງສ້າງແທ່ນບູຊາ ເມື່ອປັກໝາຍບ່ອນທີ່ພຣະເຈົ້າໄດ້ຊົງເວົ້າກັບລາວ ແລະໄດ້ໃສ່ຊື່ທີ່ນັ້ນວ່າ "ອົງພຣະຜູ້ເປັນເຈົ້າອົງແຫ່ງສັນຕິສຸກ" (6: 24).

## 4. <u>ການກະທຳທີ່ເຊື່ອຟັງ:</u> (ພວກຜູ້ປົກຄອງ 6: 25-28)

ກ່ອນທີ່ພຣະເຈົ້າຈະສົ່ງກິເດໂອນໄປທຳລາຍພວກມີດີອານ, ພຣະອົງໄດ້ສັ່ງລາວໃຫ້ໄປທຳລາຍແທ່ນບູຊາທີ່ພໍ່ລາວໄດ້ສ້າງເພື່ອພຣະຂອງຄົນຕ່າງຊາດ; ພຣະບາອານ ແລະເຈົ້າແມ່ອາເຊຣາ ເປັນພຣະຂອງຊາວການາອານ ສຳລັບການປູກຝັງໃຫ້ເກີດຜົນດີ. ພຣະເຈົ້າຊົງສັ່ງກິເດໂອນໃຫ້ສ້າງແທ່ນບູຊາສຳລັງອົງພຣະຜູ້ເປັນເຈົ້າແທນບ່ອນໄວ້ ແລ້ວໃຫ້ເຜົາງົວເຖິກຢູ່ທີ່ນັ້ນໂດຍໃຊ້ເສົາສັກສິດທີ່ໄດ້ຕັດລົງນັ້ນເປັນຟືນ.

ຄວາມສຳເຣັດຂອງກິເດໂອນໃນວຽກເລັກນ້ອຍຊ່ວຍລາວໃຫ້ມີຄວາມໝັ້ນໃຈວ່າ ລາວຈະສາມາດເຮັດວຽກໃຫຍ່ທີ່ພຣະເຈົ້າຊົງສັ່ງ. ການທຳລາຍແທ່ນບູຊາ ແລະເສົາສັດສິດ ແລ້ວສ້າງແທ່ນບູຊາສຳລັບພຣະເຈົ້າໄວ້ແທນທີ່ກ່ອນການເອົາຊະນະພວກມີດີອານ ບອກໃຫ້ຮູ້ວ່າພຣະເຈົ້າຊົງຫ່ວງໃຍການໄຫວ້ພຣະທຽມຂອງຊາວອິສຣາເອນຫລາຍກວ່າສິ່ງອື່ນໆ.

ພຣະຄຳບອກໃຫ້ຮູ້ວ່າກິເດໂອນໄດ້ເຮັດທຸກຢ່າງທີ່ພຣະເຈົ້າຊົງສັ່ງສຳເຣັດລົງຢ່າງວ່ອງໄວ ໂດຍການຊ່ວຍເຫລືອຂອງຄົນຮັບໃຊ້ສິບຄົນ. ແຕ່ພຣະຄຳໃນ ຜປ 6: 27 ສະແດງໃຫ້ເຫັນວ່າກິເດໂອນຍັງມີຄວາມສົງສັຍຢູ່ເພາະລາວຍັງຢ້ານຄອບຄົວແລະປະຊາຊົນໃນເມືອງ; ເພາະຄວາມຢ້ານລາວຈຶ່ງເຮັດໃນຕອນກາງຄືນ.

## 5. <u>ຂໍໝາຍສຳຄັນອີກ:</u> (ພວກຜູ້ປົກຄອງ 6: 36-40)

ຫລັງຈາກໄດ້ທຳລາຍແທ່ນບູຊາຂອງພຣະບາອານແລ້ວ, ກິເດໂອນກໍໄດ້ເກນກຳລັງຈາກຫລາຍໆເຜົ່າ ເພື່ອຕຽມຕົວອອກໄປຕໍ່ສູ້ພວກມີດີອານ (ຜປ 6: 34-35). ແຕ່ວ່າ ກິເດໂອນຍັງສົງສັຍການຊົງເອີ້ນຂອງພຣະເຈົ້າຢູ່, ລາວຈຶ່ງຂໍພຣະອົງສະແດງໝາຍສຳຄັນວ່າພຣະອົງຈະຊົງຢູ່ດ້ວຍໃນການອອກຮົບ. ຄວາມສົງສັຍຍັງມີຢູ່ເຖິງວ່າພຣະວິນຍານຂອງພຣະເຈົ້າໄດ້ຊົງລົງມາຄວບຄຸມກິເດໂອນແລ້ວ; ກິເດໂອນໄດ້ຂໍໃຫ້ພຣະເຈົ້າສະແດງການຊົງຢູ່ນຳໂດຍການວາງຂົນແກະໄວ້ໃນໜ້າດິນທີ່ລາວຟາດເຂົ້າ; ເທື່ອທີນຶ່ງ ລາວຂໍໃຫ້ພຣະເຈົ້າຊົງ

ເຮັດໃຫ້ຂົນແກະປຽກດ້ວຍນ້ຳໝອກ ແຕ່ໃຫ້ດິນແຫ້ງ ແລະເທື່ອທີສອງ ລາວຂໍໃຫ້ພຣະເຈົ້າຊົງເຮັດໃຫ້ຂົນແກະແຫ້ງ ແຕ່ໃຫ້ດິນປຽກ. ພຣະເຈົ້າໄດ້ເຮັດຕາມທີ່ກີເດໂອນຂໍຮ້ອງທັງສອງເທື່ອ.

ເຣື່ອງນີ້ສອນພວກເຮົາໃຫ້ຮູ້ວ່າເວລາພຣະເຈົ້າຊົງເອີ້ນບຸກຄົນໃຫ້ໄປຮັບໃຊ້, ພຣະອົງຍັງປ່ອຍໃຫ້ເຂົາເປັນຄົນຢູ່. ພຣະເຈົ້າຊົງເອີ້ນ ແລະໃຊ້ບຸກຄົນທີ່ມີກຳລັງ, ຄວາມອ່ອນແອ, ຄວາມຢ້ານ ແລະຄວາມສົງສັຍ ຕິດຕາມຢູ່ໃນຕົວ. ຫລັງຈາກນັ້ນພຣະເຈົ້າຈະຊົງໃຊ້ຣິດເດດຂອງພຣະອົງເພື່ອເຮັດພັນທະກິດໃຫ້ສຳເຣັດຜ່າຍເຂົາ.

ພຣະເຈົ້າບໍ່ໄດ້ຊົງຕຳໜິກີເດໂອນ ແຕ່ໄດ້ຕອບສນອງສິ່ງທີ່ລາວໄດ້ຂໍຮ້ອງຈາກພຣະອົງ; ພຣະເຈົ້າຊົງຮູ້ແລະເຂົ້າໃຈຄວາມບໍ່ແນ່ໃຈຂອງກີເດໂອນ ແລະຊົງເຮັດໃນສິ່ງທີ່ຈະຊ່ວຍລາວ. ພຣະເຈົ້າຊົງຮູ້ລ່ວງໜ້າວ່າກຳລັງສັດຕຣູຈະມີຫລາຍກວ່າກຳລັງທັບຂອງກີເດໂອນ ແລະລາວຕ້ອງການຄວາມໝັ້ນໃຈວ່າພຣະອົງຈະສູ້ຣົບໃຫ້ພວກເຂົາເຈົ້າແທ້. ເມື່ອມີຄວາມໝັ້ນໃຈແລ້ວ ກີເດໂອນຈຶ່ງເຊື່ອຟັງການຊົງເອີ້ນຂອງພຣະເຈົ້າ ແລະນຳພາຊາວອິສຣາເອນເອົາຊະນະສັດຕຣູຂອງພວກເຂົາ. ຈາກເຣື່ອງຂອງກີເດໂອນ ພວກເຮົາໄດ້ຮຽນຮູ້ວ່າພຣະເຈົ້າຊົງຣິດເດດ ແລະຊົງອົດທົນດົນນານເວລາພຣະອົງຊົງເຮັດວຽກກັບຄົນທີ່ມີຄວາມສົງສັຍຢູ່.

## ຄວາມໝາຍສຳລັບປັດຈຸບັນ

ພວກເຮົາກຳລັງຢູ່ໃນຍຸກທີ່ມີຄວາມສົງສັຍຫລາຍ; ແຕ່ຄວາມກ້າວໜ້າທາງຄະນິດສາດແລະວິທະຍາສາດເຮັດໃຫ້ພວກເຮົາສາມາດຄົ້ນພົບຄວາມຈິງຫລາຍໆຢ່າງ. ຈ່າສານໃຊ້ຂໍ້ມູນທັງເຊື້ອພັນເພື່ອຄວາມແນ່ໃຈໃນຕົວຜູ້ຕ້ອງຫາ; ກັມມະການກິລາໃຊ້ຮູບພາບທີ່ຖ່າຍໄວ້ເພື່ອຕັດສິນເມື່ອເກີດຄວາມສົງສັຍ. ໜ້າເສັຍດາຍທີ່ຄວາມກ້າວໜ້າຕ່າງໆບໍ່ໄດ້ຊ່ວຍມະນຸດໃຫ້ມີຄວາມໝັ້ນໃຈຫລາຍຂຶ້ນໃນຊີວິດ; ຄຣິສຕຽນບາງຄົນບໍ່ຍອມເຮັດຕາມການຊົງນຳຂອງພຣະເຈົ້າ ຖ້າເຂົາບໍ່ໝັ້ນໃຈວ່າຈະສຳເຣັດແລະເກີດຜົນ.

ສ່ວນຫລາຍແລ້ວ ພຣະເຈົ້າຊົງສອນໃຫ້ພວກເຮົາມີຄວາມເຊື່ອ ແທນທີ່ຈະຊົງໃຫ້ຄວາມໝັ້ນໃຈກ່ອນ; ພຣະເຈົ້າຊົງສະແດງການຊົງຢູ່ແລະຣິດເດດໃຫ້ກີເດໂອນເພື່ອໃຫ້ລາວໝັ້ນໃຈ ແຕ່ພຣະອົງບໍ່ໄດ້ຊົງເປີດເຜີຍລາຍລະອຽດລ່ວງໜ້າ. ພຣະເຈົ້າຍັງຊົງເຮັດເຊັ່ນນັ້ນຢູ່ໃນສມັຍນີ້; ພຣະອົງຊົງເອີ້ນໃຫ້ພວກເຮົາສະແດງຄວາມເຊື່ອ ໂດຍບໍ່ຮູ້ວ່າຂ້າງໜ້າຈະເປັນຢ່າງໃດ; ເວລາພວກເຮົາເຮັດຕາມຄວາມເຊື່ອ, ພຣະອົງຈະຊົງຢູ່ທີ່ນັ້ນ.

## ຄຳຖາມເພື່ອພິຈາຣະນາ

1. ທ່ານເຄີຍມີຄວາມສົງສັຍບໍ່ ເວລາພຣະເຈົ້າໄດ້ຊົງເອີ້ນໃຫ້ເຮັດບາງຢ່າງ ຈົນທ່ານບໍ່ໄດ້ເຮັດຕາມ?
2. ທ່ານຍັງມີຄວາມສົງສັຍ ຫລືມີຄຳຖາມຢູ່ບໍ ໃນສິ່ງທີ່ພຣະເຈົ້າຊົງເອີ້ນໃຫ້ເຮັດ?
3. ທ່ານເຄີຍຂໍໝາຍສຳຄັນຈາກພຣະເຈົ້າບໍ່? ມີຫຍັງແດ່ເກີດຂຶ້ນ?
4. ທ່ານເຄີຍເຮັດຕາມການຊົງເອີ້ນ ເຖິງຈະມີຄວາມສົງສັຍບໍ່? ພຣະເຈົ້າໄດ້ຊົງເຮັດຫຍັງແດ່ ເພາະຄວາມເຊື່ອຂອງທ່ານ?

*ສຄ*

# ບົດຮຽນທີ 10
## ກີເດໂອນ: ຊະນະຕາມວິທີຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້**: ພວກຜູ້ປົກຄອງ 7: 2-8, 15-22

**ພູມຫລັງຂອງພຣະຄັມພີ**: ພວກຜູ້ປົກຄອງ 7

**ຈຸດສໍາຄັນສໍາລັບບົດຮຽນນີ້:** ພວກເຮົາສາມາດທີ່ຈະເຊື່ອພຣະເຈົ້າວ່າພຣະອົງຊົງສາມາດປະທານທຸກສິ່ງສໍາລັບຊັຍຊະນະໃນຊີວິດ.

**ຄໍາຖາມເພື່ອຄົ້ນຄວ້າ**: ເປັນຫຍັງພວກເຮົາຈຶ່ງເຊື່ອວ່າພຣະເຈົ້າຊົງສາມາດປະທານທຸກສິ່ງສໍາລັບຊັຍຊະນະໃນຊີວິດ?

**ຈຸດປະສົງຂອງການສຶກສານີ້:** ເພື່ອຈະເຊື່ອວ່າພຣະເຈົ້າສາມາດປະທານທຸກສິ່ງເພື່ອຊັຍຊະນະໃນຊີວິດ.

**ອ່ານລວບ:** ບາງຄັ້ງພວກເຮົາອາດຈະເຫັນວ່າຊັຍຊະນະເປັນໄປບໍ່ໄດ້, ແຕ່ພຣະເຈົ້າຈະຊົງສະແດງຫົນທາງສູ່ຄວາມສໍາເຣັດ.

### ຄໍານໍາ

ບົດຮຽນຂອງມື້ນີ້ຈະຄົ້ນຫາວິທີທີ່ພຣະເຈົ້າໄດ້ປະທານທຸກສິ່ງໃຫ້ກັບກີເດໂອນ ເພື່ອຈະເອົາຊະນະພວກມີດີອານ ແລະບົດຮຽນນີ້ຍັງຈະເຕືອນພວກເຮົາໃຫ້ເຊື່ອວາງໃຈອົງພຣະຜູ້ເປັນເຈົ້າ ເວລາພຣະອົງຊົງເອີ້ນພວກເຮົາໃຫ້ຮັບໃຊ້ພຣະອົງ.

### 1. ຕຽມພ້ອມ, ຕັ້ງທ່າ, ຢ່າຟ້າວເຫື່ອ: (ພວກຜູ້ປົກຄອງ 7: 2-8)

ກີເດໂອນແລະກໍາລັງທະຫານ 32,000 ຄົນໄດ້ຕັ້ງທັບຢູ່ທາງໃຕ້ຂອງພວກມີດີອານ, ພ້ອມທີ່ຈະບຸກທໍາລາຍສັດຕຣູຜູ້ຂົ່ມເຫງຊາວອິສຣາເອນມາເປັນເວລາເຈັດປີ. ແຕ່ພຣະເຈົ້າໄດ້ຊົງບອກ**ກີ**ເດໂອ**ນ**ວ່າ, "ຄົນທີ່ມາກັບເຈົ້ານັ້ນມີຫລາຍໂພດ ເຮົາບໍ່ຢາກໃຫ້ມີຫລາຍຄົນປານນັ້ນເພື່ອຊະນະພວກມີດີອານ" (7: 2). ພຣະເຈົ້າຊົງປະສົງຈະເປັນຜູ້ໃຫ້ຊັຍຊະນະ, ເພື່ອບໍ່ໃຫ້ອິສຣາເອນປະກາດວ່າພວກເຂົາໄດ້ຊະນະດ້ວຍຕົນເອງ. ນີ້ແມ່ນສິ່ງທີ່ພວກເຮົາເຫັນຢູ່ສເມີໃນພຣະສັນຍາເດີມ.

ທຸກຄັ້ງຫລັງຈາກທີ່ໄດ້ຊັຍຊະນະ ອິສຣາເອນມັກລືມພຣະເຈົ້າ, ແມ່ນແຕ່ການອອກຈາກການເປັນຂ້າທາດໃນປະເທດເອຢິບ; ພວກເຂົາທໍຣະຍົດຕໍ່ພຣະເຈົ້າ ແລະຫັນໄປສແວງຫາພຣະອື່ນໆ. ໃນຄວາມນີ້, ພຣະເຈົ້າຊົງປະສົງໃຫ້ພວກເຂົາເຂົ້າໃຈວ່າພຣະອົງຈະໄດ້ຮັບກຽດຈາກຄວາມຊະນະ ແລະບໍ່ແມ່ນຊາວອິສຣາເອນ. ພຣະເຈົ້າຊົງສັ່ງກີເດໂອນໃຫ້ຜ່ອນຈໍານວນລົງ; ພຣະອົງໃຫ້ກີເດໂອນປະກາດກັບພວກທະຫານວ່າ, "ຖ້າຜູ້ໃດຢ້ານ

ໃຫ້ກັບເມືອສາ ສ່ວນພວກເຮົາຈະຢູ່ທີ່ພູກິເລອາດນີ້” (7: 3). ໃນຕອນນີ້ມີຄົນ 22, 000 ກັບເມືອ ແລະກອງທັບຂອງອິສຣາເອນກໍເຫລືອພຽງແຕ່ 10, 000 ຄົນ.

ແຕ່ພຣະເຈົ້າບໍ່ໄດ້ຊົງຢຸດຢູ່ເທົ່ານັ້ນ, ພຣະອົງຊົງບອກກີເດໂອນວ່າ ຄົນທີ່ຢູ່ກັບເຂົາຍັງຫລາຍໂພດ; ພຣະອົງຊົງສັ່ງໃຫ້ກີເດໂອນພາພວກທະຫານລົງໄປແຄມນ້ຳ ເພື່ອພຣະອົງຈະຄັດເລືອກຄົນໃຫ້. ກີເດໂອນໄດ້ເຮັດຕາມພຣະບັນຊາ ໂດຍພວກທະຫານໄປແຄມນ້ຳ ແລະດື່ມນ້ຳນັ້ນ; 300 ຄົນໃນພວກເຂົາກໍດື່ມນ້ຳໂດຍໃຊ້ມືກອບນ້ຳຂຶ້ນແລ້ວເລັຽກິນຄືໝາ ແລະນອກນັ້ນໄດ້ຄຸເຂົ່າລົງດື່ມ. ພຣະເຈົ້າຊົງສັ່ງກີເດໂອນວ່າ, “ເຮົາຈະຊ່ວຍກູ້ເອົາເຈົ້າ ແລະໃຫ້ເຈົ້າຮົບຊະນະຊາວມີດີອານດ້ວຍຈຳນວນສາມຮ້ອຍຄົນທີ່ກອບນ້ຳຂຶ້ນມາເລັຽກິນ ແລ້ວຈົ່ງບອກທີ່ເຫລືອນັ້ນໃຫ້ກັບຄືນເມືອໝົດ” (7: 7). ກີເດໂອນກໍໄດ້ເຮັດຕາມພຣະບັນຊາໂດຍສົ່ງຄົນທັງໝົດກັບບ້ານ ຍົກເວັ້ນແຕ່ສາມຮ້ອຍຄົນ. ແນ່ນອນເມື່ອມາເຖິງຕອນນີ້ຫລາຍຄົນກໍຕ້ອງຄິດວ່າບໍ່ມີທາງທີ່ກີເດໂອນຈະສາມາດເອົາຊະນະພວກມີດີອານໄດ້ດ້ວຍກຳລັງຂອງຕົນເອງ ເພາະທະຫານຂອງມີດີອານມີປະມານ 130, 000 ຄົນ ແຕ່ຂອງກີເດໂອນມີພຽງ 300 ຄົນ (400 **ຕໍ່** 1). ຖ້າໄດ້ຊັຍຊະນະຈະຕ້ອງແມ່ນເຣື່ອງອັສຈັນຂອງພຣະເຈົ້າ.

## 2. <u>ແກ, ໄຫ, ແລະຊັຍຊະນະ:</u> (ພວກຜູ້ປົກຄອງ 7: 15-22)

ພຣະເຈົ້າຊົງໄດ້ໃຫ້ໝາຍສຳຄັນວ່າຈະມີຊັຍຊະນະກັບກີເດໂອນ ໂດຍທີ່ລາວບໍ່ໄດ້ຂໍ. ໃນ ຜປ 7: 10, ພຣະເຈົ້າຊົງສັ່ງກເດໂອນວ່າ, “ຖ້າເຈົ້າບໍ່ກ້າລົງໄປບຸກໂຈມຕີ ໃຫ້ເຈົ້າກັບປູຣາຄົນຮັບໃຊ້ຂອງເຈົ້າລົງໄປສືບເບິ່ງກ່ອນ.” ເວລາກີເດໂອນແລະປູຣາໄດ້ລົງໄປແຄມຄ້າຍຂອງສັດຕຣູ, ກີເດໂອນ “ກໍໄດ້ຍິນຊາຍຜູ້ນຶ່ງເລົ່າຄວາມຝັນຂອງຕົນສູ່ຫມູ່ຟັງວ່າ, “13…ຂ້າພະເຈົ້າໄດ້ຝັນວ່າມີເຂົ້າຈີ່ກ້ອນນຶ່ງທີ່ເຮັດດ້ວຍເຂົ້າເດືອຍກິ້ງເຂົ້າມາໃນຄ້າຍພັກຂອງເຮົາ ເຂົາຈີ່ກ້ອນນີ້ຕຳຜ້າເຕັນຂວ້ຳເພພັງລົງຫມົດ” 14 ຫມູ່ຂອງເຂົາຈຶ່ງຕອບວ່າ, “ອັນນີ້ຕ້ອງຫມາຍເຖິງດາບຂອງກີເດໂອນຊາວອິສຣາເອນ ຊຶ່ງເປັນບຸດຂອງໂຢອັສ ຄົງບໍ່ຫມາຍເຖິງສິ່ງອື່ນໄປໄດ້ ພຣະເຈົ້າໄດ້ຊົງໂຜດໃຫ້ທ່ານຊະນະກອງທັບທັງຫມົດຂອງພວກເຮົາແລ້ວ” (ຜປ 7: 13-14).

ກີເດໂອນໄດ້ຍິນເຣື່ອງນັ້ນລາວກໍເກີດຄວາມໝັ້ນໃຈ ແລະລາວຈຳຕ້ອງເຮັດຕາມແຜນການສູ້ຮົບຂອງພຣະເຈົ້າ; ກີເດໂອນ “ຄຸເຂົ່າລົງນ້ອມນະມັສການພຣະເຈົ້າ ແລ້ວກໍກັບຂຶ້ນເມືອຍັງທີ່ໝັ້ນຂອງຊາວອິສຣາເອນ” (7: 15). **ກີເດ**ໂອນສັ່ງກຳລັງ 300 ຄົນໃຫ້ເຂົ້າຮົບຈົນຕີຄ້າຍຂອງພວກມີດີອານ. ກີເດໂອນໄດ້ແບ່ງກຳລັງອອກເປັນສາມໝວດ ແລະໝວດລະ 100 ຄົນ; ກີເດໂອນສັ່ງໃຫ້ທຸກຄົນເຮັດຕາມທີ່ລາວເຮັດ: 18 ຖ້າວ່າຂ້າພະເຈົ້າແລະຄນະຂອງຂ້າພະເຈົ້າພາກັນເປົ່າແກຂຶ້ນ ໃຫ້ພວກເຈົ້າເປົ່າແກຂອງພວກເຈົ້າຕອບໂລດ ແລ້ວໃຫ້ທຸກຄົນທີ່ຢູ່ອ້ອມຄ້າຍທັງຫມົດ ຮ້ອງຂຶ້ນວ່າ “ ເພື່ອພຣະຜູ້ເປັນເຈົ້າ ແລະເພື່ອກີເດໂອນ” (7: 18).

ພໍເຖິງເວລາທີ່ພວກມີດີອານປ່ຽນຍາມໃໝ່, ຊາວອິສຣາເອນພາກັນເປົ່າແກ, ທຸບໄຫ, ຖືກະບອງ, ແລະເລີ້ມຮ້ອງຂຶ້ນວ່າ, “ດາບເພື່ອອົງພຣະຜູ້ເປັນເຈົ້າ ແລະເພື່ອກີເດໂອນ!” (7: 20). ພຣະເຈົ້າຊົງເຮັດໃຫ້ພວກມີດີອານທີ່ຢູ່ໃນຄ້າຍເກີດຄວາມແຕກຕື່ນແລະສັບສົນ ແລ້ວພວກເຂົາໄດ້ຈັບດາບແລະຕໍ່ສູ້ກັນເອງ; ການຫລອນ

ໂຈມຕີໃນຍາມມືດ, ສຽງແກ, ແລະສຽງໄຫແຕກ ເຮັດໃຫ້ພວກສັດຕູຢ້ານແລະໄດ້ພາກັນແລ່ນໜີຈາກຄ້າຍພັກ (7: 21) ພຣະເຈົ້າໄດ້ຊົງໃຫ້ຊັຍຊະນະກັບຊາວອິສຣາເອນຕາມທີ່ພຣະອົງໄດ້ຊົງສັນຍາ (ຜປ 7:2; 7:7,7:9).

ຫລັງຈາກຂ່າວການຊະນະຂອງກຳລັງ 300 ຄົນທີ່ນຳໂດຍ**ກີເດ**ໂອນຕໍ່ພວກມີເດອານໄປເຖິງຊົນຊາດອິສຣາເອນ, ປະຊາຊົນຈາກຫລາຍໆເຜົ່າກໍມີຄວາມກ້າຫານ ແລະເຂົ້າຮ່ວມສູ້ຮົບພວກມີດີອານ. ພຣະເຈົ້າໄດ້ຊົງໃຫ້ຊັຍຊະນະກັບ**ກີ**ເດໂອນ ເພາະລາວໄດ້ເຊື່ອວາງໃຈໃນວິທີທາງຂອງພຣະອົງ.

## <u>ນຳບົດຮຽນມາໃຊ້ໃນຊີວິດ</u>

ພຣະເຈົ້າຊົງປະທານທຸກສິ່ງທີ່ກີເດໂອນຂາດເຂີນເພື່ອຈະໄດ້ຊັຍຊະນະ. ບາງທີທ່ານເອງອາດຈະພຍາຍາມດຳເນີນຊີວິດໃນທາງຂອງພຣະເຈົ້າ ແຕ່ທ່ານຍັງມີຄວາມກັງວົນ ຫລືຖືກຸງດຢູ່. ບາງທີທ່ານອາດຈະມີເຈົ້ານາຍທີ່ເຮັດໃຫ້ຊີວິດຂອງທ່ານຕ້ອງພົບກັບຄວາມລຳບາກ; ບາງທີພຣະເຈົ້າອາດຈະຊົງເອີ້ນທ່ານໃຫ້ເຮັດໃນສິ່ງທີ່ບໍ່ຄຸ້ນເຄີຍ ເຊັ່ນການສ້າງທຸຣະກິດໃໝ່, ເປີດບ້ານພັກໃຫ້ເດັກກຳພ້າ, ຫລືນຳພາພັນທະກິດສຳຄັນໃນໂບດ. ພຣະຄຳສອນວ່າ ພວກເຮົາສາມາດເຊື່ອວ່າອົງພຣະຜູ້ເປັນເຈົ້າຈະຊົງປະທານສິ່ງທີ່ຈະໃຫ້ໄດ້ຊັຍຊະນະໃນຊີວິດ. ພຣະເຈົ້າສາມາດເຮັດສິ່ງໃຫຍ່ໆ ຈາກສິ່ງນ້ອຍໆທີ່ທ່ານມີຢູ່ (ເອເຟໂຊ 3: 20-21). ຊັຍຊະນະເປັນສິ່ງທີ່ແນ່ນອນ ຖ້າພຣະເຈົ້າຊົງຢູ່ໃນແຜນການ; ຈົ່ງຢ່າຢ້າ**ນ.**

## <u>ຄຳຖາມເພື່ອພິຈາຣະນາ</u>

1. ທ່ານເຄີຍພົບຄວາມຈຳເປັນທີ່ຕ້ອງເພິ່ງພຣະເຈົ້າສຳລັບຊັຍຊະນະບໍ່? ເຣື່ອງຫຍັງ? ຜົນປາກົດເປັນຢ່າງໃດ?

2. ເປັນຫຍັງມັນເປັນເຣື່ອງຍາກແທ້ ທີ່ຈະເຊື່ອພຣະເຈົ້າສຳລັບຊັຍຊະນະ?

3. ພຣະເຈົ້າຍັງຊົງ "ຕໍ່ສູ້" ເພື່ອພວກເຮົາຢູ່ບໍ ໃນສມັຍນີ້? ເປັນຫຍັງ?

4. ແມ່ນຫຍັງຄືອຸປສັກໃນການເຊື່ອພຣະເຈົ້າກ່ຽວກັບຊັຍຊະນະ?

5. ແມ່ນຫຍັງຄືບັນຫາໃຫຍ່ສຳລັບທ່ານໃນຕອນນີ້? ທ່ານພ້ອມແລ້ວບໍທີ່ຈະເຊື່ອຟັງຄຳສັ່ງຂອງພຣະເຈົ້າ, ເຖິງວ່າທ່ານເອງອາດຈະບໍ່ເຫັນພ້ອມ?

*ສຄ*

# ບົດຮຽນທີ 11
# ເຢັບທາຜູ້ພິຊິດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ພວກຜູ້ປົກຄອງ 11:1-6, 28-40
**ພູມຫລັງຂອງພຣະຄັມພີ:** ພວກຜູ້ປົກຄອງ 11
**ຈຸດສຳຄັນຂອງບົດຮຽນນີ້:** ການສັນຍາກັບພຣະເຈົ້າແບບໂງ່ເປັນອັນຕະລາຍ
**ຄຳຖາມເພື່ອການຄົ້ນຄວ້າ:** ເພື່ອຊອກຄົ້ນຫາຄຳສັນຍາອັນດີ
**ຈຸດປະສົງຂອງບົດຮຽນ:** ເພື່ອຫລີກເວັ້ນຄຳສັນຍາທີ່ເປັນອັນຕະລາຍແກ່ຕົນ

## ບົດນຳ

ແທນທີ່ເຂົາຈະຈົດຈຳຄຸນງາມຄວາມດີຜູ້ຊ່ອຍໃຫ້ພົ້ນຈາກພວກອຳໂມນ ແຕ່ກັບໄປໃຫ້ຄຳໝັ້ນສັນຍາກັບພຣະເຈົ້າແນວພຣະເຈົ້າບໍ່ຫວັງໄວ້. ເຮົາກໍເຊັ່ນດຽວກັນຫລາຍເທື່ອເຮົາໄດ້ອ້ອນວອນແລະສັນຍາກັບພຣະເຈົ້າ ຫາກພຣະອົງເຮັດສິ່ງນີ້ແກ່ຂ້ານ້ອຍແລ້ວ ຂ້ານ້ອຍຈະ...... ແຕ່ບໍ່ໄດ້ເຮັດຕາມຄຳສັນຍານັ້ນນັບວ່າເປັນອັນຕະລາຍແກ່ເຮົາເອງ.

## 1. ມະນຸດບໍ່ຮັບ ແຕ່ພຣະເຈົ້າເລືອກ: (ພວກຜູ້ປົກຄອງ 11:1-28).

ເຮົາມັກໄດ້ຍິນຄຳວ່າ "ຄົນເຮົາເລືອກເກີດບໍ່ໄດ້ ແຕ່ເລືອກທີ່ຈະເປັນອັນໃດອັນນຶ່ງໄດ້" ນັ້ນເປັນຄວາມຈິງ, ທ່ານເຢັບທາເກີດຈາກແມ່ທີ່ມີອາຊີບເປັນຍິງໂສເພນີ ດັ່ງນັ້ນຊື່ສຽງແລະຊີວິການເປັນຢູ່ຂອງລາວຈຶ່ງບໍ່ລາບລື້ນຄືຜູ້ອື່ນ. ຂໍ້ 1 ພວກຜູ້ປົກຄອງບອກວ່າ ເຢັບທາເປັນທະຫານເກັ່ງກ້າແລະເປັນລູກຂອງຍິງໂສເພນີ (ໂສເພນີເປັນເມັຍນ້ອຍຂອງທ່ານກີເລອາດ ຜູ້ເປັນພໍ່ຂອງເຢັບທາ). ຂໍ້ 2 ບອກອີກວ່າທ່ານກີເລອາດຍັງມີລູກຊາຍອີກຫລາຍຄົນຊຶ່ງເກີດຈາກເມັຽແທ້ ຫລືເມັຽກົກເມັຽເຄົ້າຂອງເພິ່ນ, ພວກທີ່ເກີດຈາກເມັຽແທ້ໄດ້ໄລ່ເຢັບທາ ໃຫ້ອອກຈາກບ້ານເຮືອນເພາະຍ້ານວ່າລາວຈະມາແບ່ງຊັບສົມບັດຂອງພໍ່ (ເຣື່ອງນີ້ເປັນເຣື່ອງຂອງຄົນທົ່ວໄປມັກຈະຄິດເຫັນເງິນຄຳ, ຊັບສົມບັດຫລາຍກວ່າຄວາມເປັນພີ່, ເປັນນ້ອງ). ຂໍ້ 3 ບອກວ່າເຢັບທາບໍ່ສາມາດທົນຕໍ່ຄວາມດ່າວ່າຂອງເຂົາໄດ້ຈຶ່ງຊັດເຊພະເນຈອນອອກຈາກບ້ານໄປອາສັຍຢູ່ເມືອງໂຕເບໂດຍໃຊ້ຊີວິດເປັນນັກເລງຈົນກາຍເປັນຫົວໜ້າຂອງພວກນັກເລງ.

ເຢັບທາບໍ່ໄດ້ເປັນນັກເລງໂດຍບັງເອີນ ແຕ່ເປັນນັກເລງເພື່ອຄວາມຢູ່ລອດຂອງຊີວິດ, ການເປັນນັກເລງຂອງລາວເຮັດໃຫ້ລາວມີຊື່ສຽງໃນສັງຄົມນັກເລງ. ຕໍ່ມາໄດ້ເກີດມີສົງຄາມໃນຣະຫວ່າງອຳໂມນແລະອິສຣາເອນ

ຊຶ່ງໃນເວລານັ້ນອິສຣາເອນຂາດຜູ້ບັນຊາທີ່ມີຄວາມເກ່ງແລະກ້າຫານ ດ້ວຍເຫດນີ້ພວກຜູ້ນຳຊາວຊາວກີເລອາດທີ່ເປັນກຸ່ມນຶ່ງໃນອິສຣາເອນໄດ້ສົ່ງທູດໄປເຊີນໃຫ້ເຢັບທາຫົວໜ້ານັກເລງທີ່ເມືອງໂຕເບມາ ໃຫ້ມາເປັນ ຜູ້ບັງຄັບບັນຊາທະຫານເພື່ອຕໍ່ສູ້ກັບອຳໂມນ (ຂໍ້ 5). ແຕ່ເຢັບທາບໍ່ໄດ້ຮັບຄຳເຊີນທັນທີ ແຕ່ກ່າວກັບເຂົາວ່າ "*ພວກເຈົ້າຊັງຂ້ອຍຫລາຍທີ່ສຸດ ຈົນໄລ່ຂ້ອຍໜີຈາກເຮືອນພໍ່ຂອງຂ້ອຍ ບໍ່ແມ່ນບໍ່? ບັດນີ້ເປັນຫຍັງຈຶ່ງມາຫາຂ້ອຍ ຕອນທີ່ພວກເຈົ້າຢູ່ໃນຄວາມເດືອດຮ້ອນເຊັ່ນນີ້?*" (ຂໍ້ 7). ເບິ່ງເໝືອນວ່າເຢັບທາບໍ່ຮັບຄຳເຊື້ອເຊີນເພາະລາວຄຶດເຫັນຕອນລາວຖືກປະຕິເສດຈາກພວກອ້າຍຂອງລາວ ທີ່ໄດ້ຂັບໄລ່ລາວໜີຈາກບ້ານໂດຍບໍ່ຮູ້ວ່າຈະໄປຢູ່ໃສ. ການທີ່ລາວກ່າວຕໍ່ວ່າຂ້າງເທິງນັ້ນແມ່ນຄວາມຄຶດຄຽດແຄ້ນພວກອ້າຍ, ແຕ່ພວກທູດກໍອອນຂໍໃຫ້ໄປຊ່ອຍໃນຄັ້ງນີ້, ເມື່ອເປັນດັ່ງນັ້ນເຢັບທາຈຶ່ງສເນີວ່າ "*ເມື່ອພວກເຈົ້າມາຂໍຮ້ອງຂ້ອຍ ໃຫ້ກັບໄປສູ້ຮົບກັບພວກອຳໂມນເຊັ່ນນີ້ ແລະຖ້າພຣະຜູ້ເປັນເຈົ້າໃຫ້ຂ້ອຍຮົບຊະນະເຂົາ ຂ້ອຍກໍຈະເປັນນາຍຂອງພວກເຈົ້າ*" (ຂໍ້ 9). ເຢັບທາໄດ້ເວົ້າອ້າງອອກພຣະນາມຂອງພຣະເຈົ້າ "*ຖ້າພຣະຜູ້ເປັນເຈົ້າໃຫ້ຂ້ອຍຮົບຊະນະເຂົາ*" ລາວບໍ່ໄດ້ເວົ້າວ່າ(ຖ້າຂ້ອຍຊະນະເຂົາ) ແປວ່າຖ້າວ່າພຣະເຈົ້າໃຫ້ເຢັບທາຊະນະລາວຈະຕ້ອງເປັນນາຍພວກເຂົາ. ເຂົາໄດ້ຕົກລົງຕາມຄຳສເນີຂອງເຢັບທາ (ຂໍ້ 10). ແລ້ວເຢັບທາຈຶ່ງກັບຄືນໄປກັບພວກຜູ້ນຳຊາວ ກີເລອາດ ເພື່ອໄປເປັນນາຍບັງຄັບບັນຊາທະຫານຂອງພວກເຂົາ. ເມື່ອຮັບຕຳແໜ່ງເປັນນາຍແລ້ວເຢັບທາໄດ້ສົ່ງຄະນະທູດໄປເຈຣະຈາກັບກະສັດອຳໂມນຜູ້ເປັນສັດຕູ ໂດຍເລົ່າເຖິງປະຫວັດສາດຈາກຂໍ້ 12-28 ແຕ່ກະສັດອຳໂມນບໍ່ເອົາໃຈໃສ່ຖ້ອຍຄຳຂອງເຢັບທາ.

## 2. **<u>ຕື່ນເຕັ້ນທີ່ຊະນະ ແລະຄຳສັນຍາທີ່ໜ້າສລົດໃຈ:</u>** ( ພວກຜູ້ປົກຄອງ 11:29-40).

"*ແລ້ວພຣະວິນຍານຂອງພຣະຜູ້ເປັນເຈົ້າກໍມາສະຖິດຢູ່ກັບເຢັບທາ*" (ຂໍ້ 29). ແປວ່າພຣະຜູ້ເປັນເຈົ້າຊົງເລືອກເອົາເຢັບທາຜູ່ທີ່ເຂົາໂຍນຖິ້ມໃຫ້ກາຍເປັນນາຍພວກເຂົາ. ພຣະເຢຊູຊົງກ່າວວ່າ "*ຫີນທີ່ນາຍຊ່າງກໍໄດ້ໂຍນຖິ້ມແລ້ວ ເພາະຖືວ່າໄຮ້ຄ່າ ກໍກາຍເປັນຫີນເສົາເອກ ສຳຄັນແທ້ກວ່າໝູ່*" (ມັດທາຍ 21:42). ເຣື່ອງນີ້ເປັນບົດຮຽນວ່າ ບໍ່ໃຫ້ເຮົາດູຖູກຄົນຊົ່ວ ຫລືຄົນຕ່ຳຕ້ອຍ ດ້ວຍວ່າຫາກພຣະເຈົ້າພໍພຣະທັຍພຣະອົງກໍຈະຊົງເລືອກລາວມາເປັນນາຍເຮົາມື້ໃດມື້ນຶ່ງກໍໄດ້, ອີກຢ່າງນຶ່ງເຮົາໄດ້ຍິນຜູ້ຮັບໃຊ້ພຣະເຈົ້າຫລາຍຄົນກ່າວຄຳພະຍານວ່າເພິ່ນເປັນຄົນບໍ່ດີມາກ່ອນ, ເປັນນັກເລງໃນສມັຍຍັງເຍົາວັຍ ແຕ່ເມື່ອພຣະເຈົ້າຊົງເອີ້ນເພິ່ນມາເປັນຜູ້ຮັບໃຊ້ແລ້ວພຣະອົງກໍຊຳຣະລ້າງໃຫ້ເພິ່ນເປັນຜູ້ຂາວສະອາດຈາກຄວາມຜິດບາບ ແລະກໍເປັນຜູ້ນຳທີ່ເກ່ງກ້າດັ່ງທີ່ທ່ານໄດ້ເຫັນໃນເວລານີ້. ທ່ານເຢັບທາ, ເປັນລູກຂອງຍິງໂສເພນີຖືກພວກອ້າຍໄລ່ໜີແລ້ວກາຍເປັນນັກເລງທີ່ໃຜໆກໍເຫັນວ່າເປັນຄົນຊົ່ວສອງຕໍ່ຄື 1. ເປັນລູກຊາຍຂອງຍິງໂສເພນີ ແລະ 2. ເປັນນັກເລງ ແຖມຍັງເປັນຫົວໜ້ານັກເລງທີ່ໃຜໆກໍຢ້ານແລະບໍ່ຢາກພົບປະເປັນເພື່ອນຝູງ ແຕ່ພຣະເຈົ້າກໍໄດ້ປ່ຽນແປງລາວ ໃຫ້ຊີວິດໃໝ່ແກ່ລາວໃຫ້ມາເປັນນາຍຂອງພວກທີ່ກຽດຊັງລາວ. ເມື່ອພຣະເຈົ້າຊົງປ່ຽນແປງຄົນຄືເຢັບທາໄດ້ພຣະເຈົ້າກໍຈະຊົງປ່ຽນແປງຄົນທີ່ຍອມຮັບວ່າຕົນເອງເປັນຄົນຊົ່ວຊ້າບາບໜາໄດ້ ຫາກພຣະເຈົ້າພໍພຣະທັຍຫລືຫາກຜູ້ນັ້ນສາຣະພາບບາບຂອງລາວ.

ກ່ອນໜ້າໄປສົງຄາມນັ້ນເຢັບທາອ້ອນວອນແລະສັນຍາກັບພຣະເຈົ້າວ່າ " *ຖ້າພຣະອົງຊົງມອບຄົນອັມໂມນໄວ້ໃນມືຂອງຂ້າພຣະອົງແລ້ວ ຜູ້ໃດທີ່ອອກມາຈາກປະຕູເຮືອນຂອງຂ້າພຣະອົງເພື່ອຕ້ອນຮັບຂ້າພຣະອົງ*

*ເມື່ອຂ້າພຣະອົງມີຊັຍກັບມາຈາກຄົນອັມໂມນນັ້ນ ຜູ້ນັ້ນຈະຕ້ອງເປັນຂອງພຣະຜູ້ເປັນເຈົ້າ ແລະຂ້າພຣະອົງຈະຖວາຍຜູ້ນັ້ນເປັນເຄື່ອງເຜົາບູຊາ"* ແປວ່າລາວສັນຍາວ່າຫາກພຣະເຈົ້າໃຫ້ລາວຊະນະສົງຄາມຄັ້ງນີ້ ເມື່ອລາວກັບມາຍັງດິນແດນຂອງຕົນ ຜູ້ໃດກໍຕາມທີ່ອອກໄປຮັບລາວຈາກປະຕູເຮືອນຂອງລາວໆຈະຂ້າຜູ້ນັ້ນເປັນເຄື່ອງເຜົາບູຊາເພື່ອເປັນການຂອບພຣະຄຸນພຣະເຈົ້າທີ່ໃຫ້ລາວຊະນະສົງຄາມ. ຄຳອ້ອນວອນສັນຍາເຊັ່ນນີ້ຍັງລາມມາເຖິງສມັຍນີ້ຄື ຄຣິສຕຽນຫລາຍຄົນສັນຍາກັບພຣະເຈົ້າຕ່າງໆນາໆ.

<u>ມີເຣື່ອງເລົ່າຢູ່ວ່າ</u> ອາຈານຜູ້ນຶ່ງໄດ້ເຊີນຫລັງຈາກເທສນາ ໄດ້ມີຜູ້ນຶ່ງໄດ້ອອກໄປຂ້າງໜ້າເພື່ອຂໍໃຫ້ອາຈານອ້ອນວອນເພື່ອເພາະຕົນເອງເປັນຄົນວ່າງງານຈຶ່ງຂໍໃຫ້ອາຈານອ້ອນວອນໃຫ້ໄດ້ງານແລ້ວຈະຖວາຍນຶ່ງສ່ວນສິບ, ຕໍ່ມາລາວກໍໄດ້ງານທີ່ໂຮງງານສົມກັບຄຳອ້ອນວອນຂອງລາວ ແລະລາວກໍຖວາຍສິບລົດຕາມຄຳສັນຍາ, ລາວເປັນຄົນງານດີຂະຫຍັນດຸໝັ່ນຈຶ່ງຖືກຂຶ້ນເງິນຊົ່ວໂມງທຸກທີກເດືອນ ພຣະເຈົ້າກໍອວຍພອນລາວເພາະລາວເປັນຄົນສັດຊື່ຕໍ່ການຖວາຍຕາມຄຳສັນຍາຂອງລາວ, ສາມປີຕໍ່ມາລາວໄດ້ເລື່ອນຊັ້ນຂຶ້ນເປັນຜູ້ກຳກັບຄົນງານທັງໝົດໂຮງງານ ລາວໄດ້ຮັບທີ່ເງິນເດືອນສູງເປັນສິບເທົ່າເມື່ອທຽບໃສ່ຕອນເຂົ້າການຄັ້ງແຣກລາວຈຶ່ງບໍ່ກ້າຖວາຍຕາມທີ່ລາວສັນຍາໄວ້ກ່ອນໜ້າຈະໄດ້ງານ. ລາວຄຶດທຸກໃຈຈຶ່ງເຂົ້າໄປປຶກສານຳອາຈານແລະໃນທີ່ສຸດອາຈານຈຶ່ງບອກວ່າ ເພື່ອບໍ່ເປັນການຜິດບາບອາຈານຈະອ້ອນວອນໃຫ້ພຣະເຈົ້າໃຫ້ລາວກັບຄືນໄປເປັນຄົນງານແລະໄດ້ເງິນເດືອນແບບເລີ້ມຕົ້ນໃໝ່ພຸ້ນ ເພາະວ່າຕອນນັ້ນລາວເຮັດໄດ້ຕາມຄຳສັນຍາ.

ກັບຄືນໄປຍັງເຣື່ອງຂອງເຢັບທາທີ່ສັນຍາກັບພຣະເຈົ້າຈະຖວາຍຄົນຜູ້ໃດກໍຕາມຫາກອອກຈາກປະຕູເຮືອນຂອງລາວອອກມາຕ້ອນຮັບລາວເມື່ອກັບມາແຕ່ຊະນະສົງຄາມ. ພຣະເຈົ້າໄດ້ໃຫ້ລາວຊະນະສົງຄາມ (ຂໍ້ 33) ທຸກຄົນກໍພາກັນຕື່ນເຕັ້ນດີໃຈໃນການມີຊັຍຄັ້ງນີ້, ແລະເມື່ອຊະນະສົງຄາມແລ້ວກໍກັບໄປຍັງບ້ານເຮືອນຂອງຕົນ. ແຕ່ກ່ອນໜ້າຈະຮອດຍັງເຮືອນລູກສາວຂອງລາວດີໃຈຫລາຍ ທີ່ເຫັນພໍ່ກັບຄືນບ້ານດ້ວຍຊັຍຊະນະອັນຍິ່ງໃຫຍ່ນາງຈຶ່ງຟ້າວແລ່ນອອກໄປທັງເຕັ້ນລຳໄປຫາພໍ່ດ້ວຍຄວາມປິ້ມປີຕິຍິນດີ ຕາມທັມມະດາຂອງລູກທີ່ເຫັນພໍ່ກັບບ້ານ " *ລູກສາວຂອງລາວກໍອອກມາພົບ ພ້ອມທັງຟ້ອນໄປຕາມຈັງວະສຽງກອງ ນາງເປັນລູກຄົນດຽວຂອງລາວ* " (ຂໍ້ 34). ແຕ່ເມື່ອເຢັບທາເຫັນລູກສາວອອກມາຕ້ອນຮັບແທນທີ່ລາວຈະດີໃຈ ແຕ່ລາວກັບເປັນທຸກໂສກເສົ້າເສັຍໃຈຢ່າງແສນສາຫັດ ແລ້ວຈົ່ມວ່າ " *ໂທລູກເອີຍ! ຫົວໃຈພໍ່ແທບຈະແຕກຕາຍເສັຽແລ້ວ! ເປັນຫຍັງຈຶ່ງແມ່ນລູກທີ່ເຮັດໃຫ້ພໍ່ໄດ້ຮັບຄວາມເຈັບປວດເຊັ່ນນີ້? ພໍ່ໄດ້ສັນຍາຢ່າງໜັກແໜ້ນກັບພຣະຜູ້ເປັນເຈົ້າແລ້ວ ແລະພໍ່ເອງຖອນຄຳສັນຍານີ້ຄືນບໍ່ໄດ້* "( ຂໍ້ 35). ຄຳສັນຍາຂອງເຢັບທາໜ້າເຊື່ອຖືທີ່ຄຣິສຕຽນທີ່ອ້ອນວອນສັນຍາກັບພຣະເຈົ້າແລ້ວຈະຕ້ອງເຮັດຕາມຄຳສັນຍານັ້ນ ແຕ່ຫາກຄຶດວ່າຕົນເອງບໍ່ກ້າເຮັດກໍຢ່າສັນຍາກັບພຣະອົງເລີຍ ເພາະມັນຈະນຳຄວາມຜິດບາບມາສູ່ຕົນເອງຊື່ໆ.

ຝ່າຍລູກສາວຂອງເຢັບທາຮູ້ວ່າພໍ່ຂອງລາວໄດ້ສັນຍາກັບພຣະເຈົ້າຢ່າງຄັກແນ່ ດັ່ງນັ້ນນາງຈຶ່ງເລົ້າໂລມໃຈພໍ່ວ່າ " *ຖ້າພໍ່ສັນຍາໄວ້ກັບພຣະຜູ້ເປັນເຈົ້າແລ້ວ ຂໍໃຫ້ເຮັດຕໍ່ລູກຕາມທີ່ພໍ່ໄດ້ສັນຍາໄວ້ນັ້ນເຖີດ ເພາະພຣະອົງ*

*ໄດ້ໃຫ້ພໍ່ແກ້ແຄ້ນຊາວອຳໂມນສັດຕູຂອງພວກເຮົາແລ້ວ* " (ຂໍ້ 36). ນີ້ເປັນຄຳເລົ້າໂລມທີ່ຄອບຄົວ, ພີ່ວເນັ່ງ ຂອງຄຣິສຕຽນຄວນຮຽນເອົາເປັນແບບຢ່າງລູກສາວຂອງເຢັບທາ, ລາວຮູ້ແລ້ວວ່າລາວຈະກາຍເປັນເຄື່ອງ ເຜົາບູຊາຕາມຄຳສັນຍາຂອງພໍ່ລາວທີ່ສັນຍາໄວ້ກັບອົງພຣະຜູ້ເປັນເຈົ້າ ແຕ່ລາວກໍຍອມໃຫ້ເປັນໄປຕາມທີ່ ເຢັບທາຜູ້ເປັນພໍ່ທີ່ລາວສັນຍາໄວ້ແລ້ວນັ້ນ. ນາງຂໍເຢັບທາຜູ້ເປັນພໍ່ວ່າ "*ລູກຂໍພຽງສິ່ງດຽວ ຄືປ່ອຍໃຫ້ລູກໄປ ຕາມລຳພັງພາຍໃນສອງເດືອນ ເພື່ອວ່າລູກຈະທ່ອງທ່ຽວໄປມາທີ່ເທິງພູກັບໝູ່ເພື່ອນເພື່ອຮ້ອງໄຫ້ອາລັຍອາ ວອນຍ້ອນລູກຈະຕ້ອງຕາຍແຕ່ຍັງເປັນສາວ* " (ຂໍ້ 37).

ໃນເຣື່ອງນີ້ໄດ້ມີການຖົກຖຽງກັນໃນບັນດານັກສາສນາສາດທີ່ມີຄຳເຫັນວ່າ ເຢັບທາບໍ່ໄດ້ຂ້າຖວາຍລູກສາວ ເພາະວ່າໃນພຣະຄັມພີບໍ່ເຄີຍມີເອົາຄົນໄປເປັນເຄື່ອງຖວາຍບູຊາ, ມີເຣື່ອງຄ້າຍຄືກັນນີ້ໃນ 1 ຊາມູເອນ 1:11 ອີກດ້ວຍ. ສາສນາສາດໄດ້ກ່າວເຖິງ ພຣະທັມພຣະບັນຍັດສອງ 18:9-13 " *ຢ່າໃຫ້ມີຄົນນຶ່ງຄົນໃດໃນ ໝູ່ພວກທ່ານຊຶ່ງໃຫ້ບຸດຊາຍຫລືບຸດຍິງຂອງເຂົາລຸຍໄຟ ຢ່າໃຫ້ຜູ້ໃດເປັນຄົນທຳນວາຍ ເປັນໝໍດູ ເປັນໝໍ ຈັບຍາມເບິ່ງເຫດການ ຫລືເປັນນັກວິຊາອາຄົມເປັນໝໍຜີ ເປັນໝໍຜີທີ່ປຸກວິນຍານຂຶ້ນມາປຶກສາ ເປັນພໍ່ມົດ ແມ່ມົດ ຫລືເປັນໝໍພາຍ* " (ພຣະບັນຍັດສອງ 18: 10-11).

## <u>ຄຳຖາມ:</u>

1. ທ່ານເຄີຍຖືກເພື່ອນຝູງ ຫລືຜູ້ໃດຜູ້ນຶ່ງໄລ່ໜີ ຫລືຜູ້ອື່ນບໍ່ຢາກເວົ້ານຳບໍ່? ທ່ານຮູ້ສຶກແນວໃດ?

2. ຫາກທ່ານເປັນເຢັບທາ ລູກຂອງຍິງໂສເພນີທ່ານຈະມີຄວາມຮູ້ສຶກຢ່າງໃດ?

3. ທ່ານຂອບພຣະຄຸນພຣະເຈົ້າບໍ່ ທີ່ທ່ານບໍ່ໄດ້ເກີດມາແນວນັ້ນ?

4. ຫລັງຈາກເຢັບທາຖືກໄລ່ໜີອອກຈາກບ້ານແລ້ວລາວໃຊ້ຊີວິດແນວໃດ?

5. ເປັນຫຍັງເຂົາຈຶ່ງເອີ້ນລາວກັບບ້ານ?

6. ລາວໄດ້ສັນຍາກັບພຣະເຈົ້າແນວໃດ?

7. ທ່ານໄດ້ສັນຍາກັບພຣະເຈົ້າແນວໃດ?

*ທວ*

## ບົດຮຽນທີ 12
## ຜົນເສັຽຂອງການເຮັດຕາມໃຈ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ພວກຜູ້ປົກຄອງ 13:1-5; 14:1-9; 16:1-5, 20-30

**ພູມຫລັງຂອງພຣະຄັມພີ:** ພວກຜູ້ປົກຄອງ 11-16

**ຈຸດສໍາຄັນຂອງບົດຮຽນນີ້:** ຄວາມທະນົງຕົວ ແລະເຫັນແກ່ຕົວນໍາໄປເຖິງອັນຕະລາຍແລະຍັງເສັຽໂອກາດອີກ.

**ຄໍາຖາມເພື່ອການຄົ້ນຄວ້າ:** ເພື່ອສລຸບເບິ່ງການທະນົງຕົວແລະການເຫັນແກ່ຕົວຂອງຂ້ອຍເປັນຜົນສະທ້ອນຕໍ່ພຣະເຈົ້າແນວໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຫລີກເວັ້ນບໍ່ໃຫ້ເປັນຄົນທະນົງຕົວແລະເຫັນແກ່ຕົວ.

### ບົດນໍາ

ເລົ່າເຣື່ອງຂອງຊາຍໜຸ່ມຜູ້ນຶ່ງດັ່ງນີ້; ທ້າວເດດເປັນຊາຍໜຸ່ມເຈົ້າຊູ້, ເປັນຄົນສລາດຮຽນໜັງສືເກັ່ງ, ຫລິ້ນກິລາກໍເກັ່ງ, ຫລິ້ນດົນຕຣີກໍເປັນ, ຮ້ອງເພງກໍມ່ວນ ແຖມຍັງເປັນລູກຂອງຄົນລວຍອີກຊໍ້າ ລາວມີໝົດທຸກຢ່າງ ສິ່ງທັງໝົດນີ້ເຮັດໃຫ້ລາວເປັນຊາວໜຸ່ມນິສັຍບໍ່ດີຂີ້ອວດ ເຖິງປານນັ້ນພໍ່ແມ່ຂອງລາວກໍພ້ອມລາວທຸກຢ່າງ ແມ່ນແຕ່ລາວຜິດຕໍ່ເພື່ອນຝູງ ຫລືກົດຣະບຽບໂຮງຮຽນພໍ່ແມ່ກະຍັງພ້ອມລາວຢູ່, ດັ່ງນັ້ນຄວາມດີຫລາຍຢ່າງທີ່ລາວມີຢູ່ຈຶ່ງໃຊ້ໃນສັງຄົມບໍ່ໄດ້. ບົດຮຽນວັນນີ້ຈະເວົ້າເຖິງຊາຍໜຸ່ມຊື່ວ່າ ແຊມຊັນ ລາວມີພ້ອມຫລາຍຢ່າງ ລາວເປັນຜູ້ຮັບໃຊ້ພຣະເຈົ້າທີ່ຖືກສົ່ງໃຫ້ໄປຊ່ອຍອິສຣະເອນໃຫ້ພົ້ນຈາກການກົດຂີ່ຂົ່ມເຫງ ແຕ່ລາວເປັນຄົນທະນົງຕົວ ແລະເປັນຄົນເຫັນແຕ່ຕົວ ດັ່ງນັ້ນວຽກງານການຮັບໃຊ້ຂອງລາວຈຶ່ງບໍ່ໄປຮອດໃສ.

### 1. **ຕົ້ນເດີມຂອງຄໍາສັນຍາ:** (ພວກຜູ້ປົກຄອງ 13:1-5, 14:1-9).

ເນື່ອງຈາກຄວາມບໍ່ເຊື່ອຟັງຂອງອິສຣາເອນ ພຣະເຈົ້າປ່ອຍປະໃຫ້ຟີລິສະຕິນມີອໍານາດປົກຄອງແບບກົດຂີ່ຂົ່ມເຫງເປັນເວລາສີ່ສິບປີ, ຕໍ່ມາພຣະເຈົ້າໄດ້ກັບເມດຕາສົງສານເຂົາ ເມື່ອເຂົາອ້ອນວອນແລະຮ້ອງໄຫ້ສາຣະພາບຕໍ່ພຣະອົງ, ແລະແລ້ວພຣະອົງກໍມີພຣະທັຍເມດຕາ ຄົນຂອງພຣະອົງທີ່ມີຊື່ວ່າແຊມຊັນໃຫ້ມາເກີດໃນຊົນເຜົ່າດານທີ່ເປັນຊົນຊາດນ້ອຍຊົນຊາດນຶ່ງຂອງອິສຣະເອນ ເພື່ອຈະໃຫ້ລາວເປັນຜູ້ຊ່ອຍເຂົາໃຫ້ພົ້ນຈາກການປົກຄອງແບບກົດຂີ່ຂົ່ມເຫງນັ້ນ. ການມາເກີດຂອງແຊມຊັນເປັນດັ່ງນີ້; ທ່ານມາໂນອາ ມີເມັຽເປັນໝັນ ຄືວ່າລາວຈະບໍ່ມີລູກຕລອດຊາດ ແລະຍິງທີ່ບໍ່ມີລູກໃນສັງຄົມເຜົ່າດານແມ່ນຖືວ່າຂາດພຣະພອນເພາະບໍ່ມີລູກສືບໜໍ່ແທນແນວ, ແຕ່ໃນຄືນວັນນຶ່ງໃນຂະນະທີ່ນາງນອນຫລັບໄດ້ຝັນໄປວ່າ "*ທູດຂອງພຣະຜູ້ເປັນເຈົ້າ ຈຶ່ງປາກົດຕໍ່ນາງ ແລະເວົ້າວ່າ, "ເຈົ້າເປັນຄົນບໍ່ມີບຸດ ແຕ່ວ່າດຽວນີ້ເຈົ້າຈະຖືພາ ຈະໄດ້ບຸດຊາຍຈົ່ງລະວັງຢ່າດື່ມນໍ້າອະງຸ່ນຫລືເຫລົ້າ ແລະຢ່າກິນອາຫານທີ່ຫວງຫ້າມເພາະວ່າເຈົ້າຈະຖືພາແລະຈະໄດ້ບຸດຊາຍ*

*ນັບແຕ່ ນີ້ບຸດຊາຍເຈົ້າເກີດມາ ເຂົາຈະເປັນນາຊີຣີທີ່ອຸທິດຕົວແດ່ພຣະເຈົ້າ ສະນັ້ນເຈົ້າຢ່າໄດ້ຕັດຜົມໃຫ້ເຂົາຈັກເທື່ອ ເຂົາຈະເປັນຄົນເລີ່ມຊ່ອຍກູ້ພວກອິສຣາເອນໃຫ້ພົ້ນຈາກເງື້ອມມືຂອງພວກ ຟີລິສະຕິນ*" (ຂໍ້ 3-5). ເທວະດາໄດ້ບອກສິ່ງອັສຈັນຈະເກີດຂຶ້ນກັບລາວຄື 1. ລາວຈະມີລູກ 2. ເປັນລູກຊາຍອີກ. ເຣື່ອງນີ້ນັບວ່າເປັນພຣະຄຸນຢ່າງສູງທີ່ສຸດແລ້ວສຳລັບຍິງໝັນ ເພາະວ່າຜູ້ອື່ນຈະບໍ່ເວົ້າດູຖູກວ່າເປັນຄົນຂາດພຣະພອນ. 3. ເທວະດາຍັງໃຫ້ລາຍລະອຽດອີກວ່າລູກຊາຍຂອງລາວຈະເປັນ(ນາຊີຣີ) ແປວ່າຜູ້ອຸທິດຕົນແກ່ພຣະເຈົ້າ. ດັ່ງນັ້ນຜູ້ອຸທິດຕົນຈະບໍ່ດື່ມນ້ຳອະງຸ່ນ ຫລືເຫລົ້າໃດໆທັງໝົດ ເທວະດາຍັງບອກອີກວ່າ ຢ່າຕັດຜົມລາວ ເພາະວ່າລາວຈະເປັນຜູ້ເລີ່ມຊ່ອຍກູ້ຟັຍໃຫ້ພວກອິສຣາເອນ ແປວ່າລູກຊາຍຂອງລາວຈະເປັນຄົນບໍ່ດື່ມເຫລົ້າຫລືເປັນຄົນດີ ແລະແຖມຍັງຈະເປັນຄົນເກ່ງອີກ, ນີ້ເປັນຄວາມພາກພູມໃຈຂອງພໍ່ແມ່ ຄືລູກເປັນຄົນດີແລະເປັນຄົນເກ່ງ. (ສຳລັບກົດຂອງນາຊີຣີໃຫ້ອ່ານ ຈົດບັນຊີ 6:1-21). ທຸກຢ່າງເປັນໄປຕາມຄວາມຝັນຂອງຍິງໝັນ.

ເມື່ອລູກຊາຍທີ່ຊື່ວ່າແຊມຊັນໃຫຍ່ຂຶ້ນມາເປັນບ່າວແລ້ວກໍໄປຫລິ້ນທ່ຽວຕາມທຳມະດາຂອງຊາຍໜຸ່ມ ແຕ່ການອອກໄປຄັ້ງນີ້ລາວໄປຍັງເມືອງຕິມນາ ແລະລາວໄດ້ເຫັນສາວງາມຜູ້ນຶ່ງລາວຈຶ່ງຄຶດຢາກໄດ້ມາເປັນເມັຽ ດ້ວຍເຫດນີ້ລາວຈຶ່ງກັບບ້ານແລ້ວເວົ້າກັບພໍ່ແລະແມ່ວ່າ "*ລູກຢາກແຕ່ງງານກັບນາງ ກະຣຸນາໄປຂໍນາງໃຫ້ລູກແດ່*" (14:2ຂ). ແຊມຊັນເປັນລູກຂອງຍິງທີ່ຊາລືວ່າເປັນໝັນ ແຕ່ລາວໄດ້ລູກຕອນແກ່ແລ້ວ ເຫດການນີ້ໄດ້ບົ່ງບອກວ່າພໍ່ແລະແມ່ຂອງແຊມຊັນເປັນຄົນເອົາອົກເອົາໃຈລູກດັ່ງນັ້ນແຊມຊັນຈຶ່ງເປັນແຕ່ຄົນເອົາໃຈຕົນເອງ ຊຶ່ງພາສາດຽວນີ້ຮ້ອງວ່າເສັຽຄົນ, ເປັນຄືທ້າວເດດທີ່ກ່າວມາຕອນຕົ້ນນັ້ນ. ແຊມຊັນເຫັນຍິງສາວພຽງເທື່ອດຽວກໍມາບອກໃຫ້ພໍ່ແມ່ໄປຂໍໂລດ ຜູ້ເປັນພໍ່ແຊມຊັນໄດ້ຫ້າມບໍ່ຢາກໃຫ້ລາວໄປແຕ່ງກັບຊາວຟີລິ ສຕິນຜູ້ກົດຂີ່ຂົ່ມເຫັງອິສຣະເອນ ແລະພໍ່ກໍແນະນຳໃຫ້ແຕ່ງງານໃນຕະກູນຫລືຊາດດຽວກັນ ແຕ່ແຊມຊັນບໍ່ຍອມຈຶ່ງກ່າວດ້ວຍວາຈາເດັດຂາດວ່າ "ລູກພໍໃຈນຳນາງແຕ່ຄົນດຽວ ໄປສູ່ຂໍນາງໃຫ້ລູກແດ່" (ຂໍ້3ຂ). ສ່ວນ 14:4 ບອກອີກວ່ານັ້ນເປັນແຜນການຂອງພຣະເຈົ້າ.

ຕໍ່ມາພໍ່ແມ່ຂອງແຊມຊັນກໍພາແຊມຊັນໄປຍັງເມືອງຕິມນາເພື່ອຈະໄປຂໍຜູ້ສາວໃຫ້ແກ່ແຊມຊັນ ໃນຂະນະທີ່ເດີນທາງໄປນັ້ນໄດ້ມີສິງໜຸ່ມມາຂັດຂວາງທາງຂອງແຊມຊັນ ແຕ່ດ້ວຍກຳລັງວັງຊາທີ່ພຣະເຈົ້າຊົງໂຜດປະທານໃຫ້ ລາວຈຶ່ງເຂົ້າໄປຕໍ່ສູ້ກັບສິງຕົວນັ້ນແລະລາວກໍຈີກສິງຕົວນັ້ນດ້ວຍຝ່າມືເປົ່າແລ້ວປະຊາກສົບມັນໄວ້ແລ້ວຈຶ່ງກັບຄືນມາຫາພໍ່ແມ່ແລ້ວເດີນທາງຕໍ່ໄປ(ຂໍ້ 5-6). ເມື່ອໄປຮອດເມືອງຕິມນາແລ້ວແຊມຊັນກໍໄດ້ແຕ່ງງານກັບຜູ້ສາວນັ້ນຢ່າງສົມໃຈ, ເມື່ອຢູ່ກັບເມັຽຊົ່ວລະຍະນຶ່ງລາວກໍເດີນທາງກັບບ້ານແລ້ວແວ່ໄປເບິ່ງຊາກສົບສິງທີ່ລາວຈີກໃນວັນນັ້ນ ລາວໄດ້ເຫັນຝູງເຜິ້ງເຮັດຮັງໃນຊາກສິງແລ້ວລາວຈຶ່ງເອົານ້ຳເຜິ້ງມາກິນ ການກິນນ້ຳເຜິ້ງນີ້ເອງເຮັດໃຫ້ລາວຜິດຕໍ່ກົດຂອງນາຊີຣີທີ່ບໍ່ໃຫ້ໄປໃກ້ຊາກສົບ ຍິ່ງໄປກວ່ານັ້ນລາວຍັງກິນນ້ຳເຜິ້ງຈາກຊາກສົບສິງອີກ. ເຣື່ອງນີ້ໄດ້ບົ່ງບອກວ່າແຊມຊັນແຂງແຮງຝ່າຍຮ່າງກາຍ ແຕ່ພາຍໃນຂອງລາວຍັງອ່ອນແອເພາະບໍ່ໄດ້ປະຕິບັດຕາມກົດຂອງນາຊີຣີ ຜູ້ອຸທິດຕົນແກ່ພຣະເຈົ້າ.

## 2. <u>ແຊມຊັນບໍ່ເຮັດໜ້າທີ່ຂອງຜູ້ຊ່ອຍ:</u> (ພວກຜູ້ປົກຄອງ 16:1-30).

ແຊມຊັນເຕີບໂຕເປັນຜູ້ໃຫຍ່ຄົບຖ້ວນແຕ່ບໍ່ຮູ້ຈັກການບັງຄັບຕົນເອງ, ລາວໄດ້ເຂົ້າໄປໃນເມືອງກາສາຢ່າງຄົນຜຍອງຕົວແບບບໍ່ຢ້ານຢຳເກງໃຜ ເພາະວ່າລາວເປັນຄົນເກ່ງຍ້ອນເຫື່ອແຮງທີ່ພຣະຜູ້ເປັນເຈົ້າຊົງປະທານໃຫ້, ເມືອງນີ້ເປັນເຂດແດນຂອງພວກຟີລິສຕິນທີ່ເປັນສັດຕູກັບອິສຣາເອນໃນເວລານັ້ນ. ລາວໄດ້ໃຊ້ຂອງພຣະຣາຊະທານທີ່ພຣະເຈົ້າປະທານໃຫ້ໄປເຮັດຕາມກິເລດຕັນຫາຂອງລາວ ຄືໄປສະແດງຄວາມຍິ່ງໃຫຍ່ແລ້ວຍັງເອົາຕົນເອງໄປຢູ່ກິນກັບຍິງໂສເພນີອີກ. ຫວນຄືນຫລັງໃນບົດ14 ແຊມຊັນບອກກັບພໍ່ແມ່ວ່າ "*ລູກພໍໃຈນໍາ ນາງແຕ່ຄົນດຽວ ໄປສູ່ຂໍນາງໃຫ້ລູກແດ່*" (14:3ຂ). ບັດນີ້ແຊມຊັນບໍ່ເປັນຄືຕອນນັ້ນ ລາວໄດ້ຊອກສແວງຫາຍິງອື່ນ ຄໍາເວົ້າທີ່ເວົ້າວ່າພໍໃຈນໍານາງຄົນດຽວນັ້ນລາວລືມໄປແລ້ວ, ຍິງທີ່ລາວພົບພັນໃນເວລານີ້ນັ້ນເປັນຍິງໂສເພນີອີກຊໍ້າ. ເມື່ອເປັນເຊັ່ນນັ້ນຝ່າຍພວກສັດຕູໄດ້ຫລິງເຫັນຈຸດອ່ອນຂອງແຊມຊັນຈຶ່ງວາງແຜນຊື້ຈ້າງຍິງໂສເພນີເພື່ອຫລອກເອົາຄວາມລັບເຣື່ອງລາວມີແຮງຫລາຍນັ້ນມາຈາກອັນໃດ? "*ໃຫ້ເຈົ້າທໍາກົນອຸບາຍຖາມແຊມຊັນວ່າ ເປັນຫຍັງເຂົາຈຶ່ງມີແຮງແທ້ ພວກເຮົາຈະຊະນະແລະຈັບເຂົາໄດ້ດ້ວຍວິທີໃດ ແລ້ວພວກເຮົາທຸກຄົນຈະເອົາເງິນໃຫ້ເຈົ້າຜູ້ລະພັນນຶ່ງຮ້ອຍແຜ່ນ*" (ຂໍ້ 5).

ຕໍ່ມາຍິງໂສເພນີກໍເຮັດຕາມແຜນຂອງພວກຟີລິສຕິນຈ້າງລາວໆຊອກຫາໂອກາດອັນເໝາະສົມເພື່ຈະຖາມເອົາຄວາມລັບ ເມື່ອໂອກາດມາເຖິງຍິງໂສເພນີຈຶ່ງຈອບຖາມແຊມຊັນວ່າ "*ກະຣຸນາບອກໃຫ້ຂ້ອຍຮູ້ແດ່ວ່າແມ່ນຫຍັງເຮັດໃຫ້ເຈົ້າມີແຮງແທ້?*" (ຂໍ້ 7). ແຕ່ແຊມຊັນບໍ່ໄດ້ບອກຄວາມຈິງແກ່ລາວ, ຍິງໂສເພນີພະຍາຍາມເຖິງສາມເທື່ອຢາກຮູ້ຄວາມລັບຂອງແຊມຊັນເພື່ອຈະໄດ້ເງິນເປັນຄ່າຈ້າງຈາກກະສັດຊາວຟີລິສຕິນທັງຫ້າຄົນທີ່ສັນຍາວ່າຈະຈ່າຍໃຫ້ລາວຜູ້ລະ 1100 (ຂໍ້ 5). ດ້ວຍຄວາມພະຍາຍາມຂອງຍິງໂສເພນີຈຶ່ງເຮັດໃຫ້ຄວາມແຂງແຮງຂອງແຊມຊັນກາຍເປັນຄວາມອ່ອນແອໄປບອກຄວາມລັບໃຫ້ລາວຟັງວ່າ "*ຂ້ອຍບໍ່ເຄີຍຕັດຜົມຈັກເທື່ອ ເພາະຂ້ອຍອຸທິດຕົນແກ່ພຣະເຈົ້າເປັນຄົນນາຊີຣີ ນັບຕັ້ງແຕ່ມື້ທີ່ຂ້ອຍເກີດມາ ຖ້າຂ້ອຍຕັດຜົມເມື່ອໃດ ຂ້ອຍຈະຕ້ອງສູນເສັຽກໍາລັງວັງຊາ ແລະຈະກາຍເປັນຄົນບໍ່ມີແຮງເຫມືອນດັ່ງຄົນທົ່ວໄປ*" (ຂໍ້ 17). ເຣື່ອງຂອງແຊມຊັນຕອນນີ້ເປັນບົດຮຽນອັນໃຫຍ່ຫລວງສໍາລັບບັນດາຜູ້ນໍາຄຣິສຕຽນ ແລະຄຣິສຕຽນທົ່ວໄປອີກດ້ວຍ. ໃນພຣະຄັມພີໃໝ່ເຮົາເຫັນວ່າມານຊາຕານພະຍາຍາມຫລອກລວງພຣະເຢຊູເຖິງສາມຄັ້ງໃນເວລາທີ່ພຣະອົງຊົງອົດອາຫານສີ່ສິບວັນ ສີ່ສິບຄືນ, ຫລັງຈາກມານທົດລອງພຣະເຢຊູເຖິງສາມຄັ້ງແລ້ວມັນກໍໜີໄປ, ສ່ວນຍິງໂສເພນີລາວບໍ່ຍອມແພ້ຢ່າງງ່າຍຈຶ່ງໃຊ້ມານຍາຍິງໂດຍກ່າວວ່າ "*ເປັນຫຍັງເຈົ້າຈຶ່ງເວົ້າວ່າເຈົ້າຮັກຂ້ອຍ ໃນເມື່ອຈິດໃຈຂອງເຈົ້າບໍ່ໄດ້ຜູກພັນຢູ່ກັບຂ້ອຍ ເຈົ້າໄດ້ລໍ້ລວງຂ້ອຍສາມເທື່ອແລ້ວ ແລະເຈົ້າ ຍັງບໍ່ທັນບອກຂ້ອຍເລີຍວ່າ ດ້ວຍເຫດໃດເຈົ້າຈຶ່ງມີແຮງຫລາຍແທ້*" (ຂໍ້ 15).

ໃນທີ່ສຸດແຊມຊັນກໍບອກນາງຕາມຄວາມຈິງວ່າ, "*ຂ້ອຍບໍ່ເຄີຍຕັດຜົມຈັກເທື່ອ ຖ້າຂ້ອຍຕັດຜົມ ຂ້ອຍຈະຕ້ອງສູນເສັຽກໍາລັງວັງຊາ ແລະຈະກາຍເປັນຄົນອ່ອນແອເຫມືອນດັ່ງຄົນອື່ນໆ*" (ຂໍ້ 17). ມາບັດນີ້ເຮົາເຫັນວ່າແຊມຊັນບໍ່ໄດ້ເຮັດໃນສິ່ງທີ່ພຣະເຈົ້າບອກໃຫ້ເຮັດ, ລາວເຮັດຕາມໃຈລາວ ດ້ວຍເຫດນີ້ພຣະວິນຍານຂອງພຣະເຈົ້າຈຶ່ງຈາກແຊມຊັນໄປ ແລ້ວລາວກໍໝົດແຮງຈົນກາຍເປັນແບບຄົນສາມັນທົ່ວໄປ ເຣື່ອງຂອງແຊມຊັນໄດ້ສອນເຮົາທັງຫລາຍໃຫ້ໃຊ້ຂອງພຣະຣາຊທານເພື່ອຣາຊອານາຈັກຂອງພຣະເຈົ້າ ບໍ່ແມ່ນມາໃຊ້ເພື່ອ

ຄວາມຍິ່ງໃຫຍ່ໄປອວດຕໍ່ຜູ້ໃດ ຫລືເອົາຂອງພຣະຣາຊທານມາໃຊ້ເພື່ອຕົນເອງ, ແຊມຊັນນອກຈາກຊ່ອຍຜູ້ອື່ນບໍ່ໄດ້ແລ້ວລາວຍັງຊ່ອຍຕົນເອງບໍ່ໄດ້ອີກຊໍ້າ. ດັ່ງນັ້ນເມື່ອຍິງໂສເພນີຮູ້ຄວາມລັບຢ່າງຄັກແນແລ້ວ ລາວກໍສົ່ງຂ່າວບອກພວກກະສັດຟີລິສຕິນວ່າ *"ເຊີນກັບມາອີກເທື່ອນຶ່ງ ເພາະແຊມຊັນໄດ້ບອກຄວາມຈິງໃຫ້ແກ່ຂ້ອຍແລ້ວ" ພວກເຂົາຈຶ່ງພາກັນມາພ້ອມທັງຖືເງິນມານຳດ້ວຍ* " (ຂໍ້ 18).

ແຊມຊັນຖືກພວກຟີລິສຕິນຈັບເມື່ອລາວໝົດແຮງຍ້ອນພຣະຜູ້ເປັນເຈົ້າບໍ່ຊົງສະຖິດກັບລາວແລ້ວ, ພວກເຂົາໄດ້ເຈາະຕາຂອງລາວອອກທັງສອງຂ້າງ ແລະລ່າມໂສ້ໄວ້ໃນຄຸກພ້ອມທັງບັງຄັບໃຫ້ເຮັດງານໜັກອີກ(ຂໍ້ 21). ຕອນນີ້ແຊມຊັນອ່ອນທັງກາຍ ແລະອ່ອນທັງຈິດວິນຍານ ຍັງເຫລືອແຕ່ລົມຫາຍໃຈພໍໃຫ້ມີຊີວິດສືບໄປແຕ່ລະມື້ເທົ່ານັ້ນ, ສ່ວນພວກກະສັດທັງຫ້າຂອງຟີລິສຕິນໄດ້ພາກັນກິນລ້ຽງຮ່ວມກັບປະຊາຊົນສາມພັນຄົນ ເປັນການສລອງຄວາມສຳເຣັດຂອງເຂົາ. ພວກເຂົາໄດ້ເອົາແຊມຊັນອອກມາໃນງານລ້ຽງເພື່ອເປັນການເຍາະເຍີ້ຍໂດຍໃຫ້ລາວເປັນຕົວຕລົກໃນລາຍການມ່ວນຊື່ນ, ແລ້ວແຊມຊັນໄດ້ອ້ອນວອນຕໍ່ອົງພຣະຜູ້ເປັນເຈົ້າເປັນເທື່ອທຳອິດຫລັງຈາກຖືກຈັບວ່າ *"ຂ້າແດ່ພຣະຜູ້ເປັນເຈົ້າ ຂໍໂຜດຈື່ຈຳຂ້າພຣະອົງ ຂໍພຣະອົງຈົ່ງຊົງປະທານກຳລັງວັງຊາໃຫ້ຂ້າພຣະອົງອີກແດ່ພຽງເທື່ອນຶ່ງເທື່ອດຽວເທົ່ານັ້ນ ເພາະຂ້າພຣະອົງຄຽດຍ້ອນເຂົາເຈາະຕາສອງເບື້ອງຂອງຂ້າພຣະອົງອອກ ຂ້າພຣະອົງຈະລ້າງແຄ້ນພວກຟີລິສຕິນ"* (ຂໍ້ 28). ຈາກນັ້ນລາວກໍມີແຮງຊຸກເສົາໃຫຍ່ຂອງວິຫານຂອງຟີລິສຕິນໃຫ້ລົ້ມເພພັງຈົນທັບກະສັດທັງຫ້າຕາຍ ພ້ອມທັງປະຊາຊົນອີກສາມພັນຄົນກໍຕາຍໄປພ້ອມແຊມຊັນ (ຂໍ້ 29-30).

**<u>ຄຳຖາມ:</u>**

1. ທ່ານຄິດວ່າເປັນຫຍັງແຊມຊັນຈຶ່ງບໍ່ຮູ້ຈັກບັງຄັບຕົນເອງ?

2. ພໍ່ແມ່ຂອງແຊມຊັນສົມຄວນຈະຖືກຕ້ອງຕິວ່າເປັນຄົນເອົາໃຈລູກຫລາຍໂພດບໍ່?

3. ຫາກທ່ານເປັນໝູ່ເພື່ອນຂອງແຊມຊັນໃນເວລານັ້ນທ່ານຈະບອກເຕືອນລາວແນວໃດ?

4. ທ່ານເຄີຍຖືກພຣະເຈົ້າຫ່າງໜີຄືແຊມຊັນບໍ່? ແລ້ວທ່ານເຮັດແນວໃດ?

5. ການອວດອົ່ງທະນົງຕົວເຮັດໃຫ້ງານຂອງພຣະເຈົ້າຢຸດຊະງັກຄືແຊມຊັນແນວໃດ?

*ທວ*

# ບົດຮຽນທີ 13
## <u>ຄວາມບໍ່ເຂົ້າໃຈເປັນຈຸດເລີ່ມຂອງບັນຫາ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ພວກຜູ້ປົກຄອງ 17:1-6; 18:1; 19:1; 20;1-7; 21:25

**<u>ພູມຫລັງຂອງພຣະຄັມພີ:</u>** ພວກຜູ້ປົກຄອງ 17-21

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ການສ້າງພຣະເຈົ້າໃນຮູບຮ່າງເຮົາເປັນຫົນທາງສູ່ຫາຍຍະນະ.

**<u>ຄໍາຖາມເພື່ອການຄົ້ນຄວ້າ:</u>** ເຮົາຈະຊອກເຮັດອັນໃດເພື່ອໃຫ້ເໝາະກັບຄວາມເຊື່ອຂອງເຮົາ?

**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອເຮົາຈະຮູ້ວ່າເຮົາຈະຕ້ອງເຮັດອັນໃດເພື່ອໃຫ້ເໝາະກັບຄວາມເຊື່ອຂອງເຮົາ.

## <u>ບົດນໍາ</u>

ອິສຣາເອນນັບຖືພຣະເຈົ້າຄືຄົນທົ່ວໄປນັບຖືສາສນາໂດຍບໍ່ເຂົ້າໃຈຄວາມເປັນຈິງຂອງອົງພຣະຜູ້ເປັນເຈົ້າ, ການເຮັດຕາມໃຈມັກ, ຄວາມສັບສົນໃນເຣື່ອງພຣະເຈົ້າໄດ້ເຮັດໃຫ້ເຂົາມີບັນຫາຂ້າກັນອີກກະທົກ.

## 1. <u>ໂຈນ, ສ້າງພຣະປອມ, ແລະສ້າງສາສນາສໍາລັບຄອບຄົວ:</u> (ພວກຜູ້ປົກຄອງ 17:1-6)

ຜູ້ສ້າງຮູບໂຄຣົບ, ຜູ້ຂາບໄຫວ້ຮູບໂຄຣົບ, ທຸດຈະຣິດ, ຂົ່ມຂືນ, ໂສເພນີ, ລອບຂ້າ, ເສິກສົງຄາມ ສິ່ງເຫລົ່ານີ້ໄດ້ບັນທຶກໃນພຣະທັມພວກຜູ້ປົກຄອງ ຈາກບົດ 17-21 ຢ່າງຄົບຖ້ວນ ຈົນເຮັດໃຫ້ຜູ້ໃຈອ່ອນບໍ່ຢາກອ່ານ, ແຕ່ເຣື່ອງວັນນີ້ຈະເລີ່ມຕົ້ນດ້ວຍໂຈນໃນເຮືອນທີ່ບໍ່ມີໃຜປ້ອງກັນໄວ້ໄດ້ ເພາະວ່າໂຈນໄດ້ຢູ່ໃນເຮືອນແລ້ວ. ຊາຍຄົນນຶ່ງມີຊື່ວາ ມີກາ ລັກເງິນແມ່ 1100 ຫລຽນ ເມື່ອແມ່ຮູ້ວ່າເງິນໄດ້ເສັຽໄປລາວກໍບໍ່ຖາມຜູ້ໃດ ແຕ່ຕັ້ງຕົ້ນປ້ອຍດ່າສາບແຊ່ງຜູ້ລັກເງິນນັ້ນ ເພາະລາວຄຶດວ່າແມ່ນໂຈນມາລັກເອົາໄປ. ມີກາຜູ້ເປັນລູກທົນຟັງຄໍາປ້ອຍດາຂອງແມ່ບໍ່ໄດ້ຈຶ່ງສາຣະພາບກັບແມ່ວ່າ *"ເງິນນຶ່ງພັນນຶ່ງຮ້ອຍຫລຽນ ຊຶ່ງມີຄົນລັກໄປຈາກແມ່ ແລະແມ່ກໍໄດ້ສາບແຊ່ງ ແລະເວົ້າເຂົ້າຫູຂ້ອຍນັ້ນ ເບິ່ງແມ, ເງິນນັ້ນຢູ່ທີ່ຂ້ອຍ ຂ້ອຍເອົາໄປເອງ" ມານດາຈຶ່ງເວົ້າວ່າ, "ຂໍພຣະຜູ້ເປັນເຈົ້າຊົງອວຍພຣະພອນໃຫ້ລູກຂອງແມ່ເທີນ"* (ຂໍ້ 2). ຫລັງຈາກມີກາຜູ້ເປັນລູກຊາຍສາຣະພາບຕໍ່ແມ່ແລ້ວ ຜູ້ເປັນແມ່ນເລີຍປ່ຽນຄໍາຈາກຄໍາສາບແຊ່ງໃຫ້ມາເປັນຄໍາອວຍພອນທັນທີ. ເມື່ອເປັນເຊັ່ນນັ້ນລູກຊາຍມີກາຈຶ່ງນໍາເອົາເງິນທັງໝົດທີ່ລາວລັກໄປນັ້ນມາຄືນໃຫ້ແມ່ ແລ້ວແມ່ກໍຫາວິທີທາງແກ້ໄຂຄໍາສາບແຊ່ງທີ່ແມ່ໄດ້ສາບແຊ່ງໄປແລ້ວນັ້ນ ລາວຈຶ່ງເວົ້າວ່າ "*ເພື່ອໃຫ້ລູກຂອງແມ່ພົ້ນຈາກຄໍາສາບແຊ່ງ ແມ່ຂໍຖວາຍເງິນຈໍານວນນີ້ຢ່າງຈິງໃຈໃຫ້ແກ່ພຣະຜູ້ເປັນເຈົ້າ, ເຈົ້າຈະຕ້ອງເອົາເງິນນີ້ໄປເຄືອບຮູບໂຄຣົບເປັນໄມ້*" (ຂໍ້ 3). ເຣື່ອງນີ້ສລຸບເຫັນວ່າ ມີໂຈນໃນເຮືອນ ຫລືໃນຄອບຄົວທີ່ບໍ່ມີໃຜສາມາດປ້ອງກັນໂຈນໃນເຮືອນໄດ້, ເມື່ອຜູ້ເປັນແມ່ຈັບໄດ້ເນື່ອງຈາກລາວໄດ້ສາບແຊ່ງປ້ອຍດ່າເພາະບໍ່ຮູ້ວ່າລູກເປັນໂຈນ ດັ່ງນັ້ນເພື່ອຢາກຊ່ອຍລູກຊາຍຕົນເອງໃຫ້ລອດພົ້ນຈາກຄໍາສາບແຊ່ງ ກໍເລີຍເຮັດຕາມຄວາມຮູ້ສຶກຕົນເອງໂດຍເອົາເງິນໄປໂອບຮູບ

ພຣະປອມ ເຊິ່ງເປັນຕົ້ນຕໍຂອງບັນຫາແລະການເຮັດດັ່ງນີ້ນັ້ນຜິດຫລາຍກວ່າເກົ່າອີກ. ບົດຮຽນມີຢູ່ວ່າ ຄຣິສ ຕຽນຈະບໍ່ເປັນຄົນປ່ອຍດ່າແລະຈະບໍ່ເຮັດຕາມຄວາມເຂົ້າໃຈຕົນ ຄືເຮົາຈະຕ້ອງປຶກສານຳຜູ້ຮຽນຮູ້ສາກ່ອນໆ ຈະເຮັດຫຍັງລົງໄປ. ສຸດທ້າຍສອງແມ່ລູກນີ້ບໍ່ແມ່ນແຕ່ສ້າງພຣະປອມເທົ່ານັ້ນ ຍັງຕັ້ງສາສນາປະຈຳຄອບຄົວ ອີກໂດຍຕັ້ງຜູ້ນຶ່ງໃນຄອບຄົວໃຫ້ເປັນປະໂຣຫິດປະຈຳເຮືອນອີກ (ຂໍ້ 5).

## 2. <u>ປະໂຣຫິດຮັບຈ້າງ:</u> (ພວກຜູ້ປົກຄອງ 18:7-13)

ເລວີເປັນຊົນເຜົ່າທີ່ຖືກແຕ່ງຕັ້ງໃຫ້ເປັນຜູ້ຮັບໃຊ້ໃນພຣະວິຫານ ດ້ວຍເຫດນີ້ເມື່ອມີຄົນເລວີທ່ອງທ່ຽວຊອກ ຫາບ່ອນຢູ່ຫລືຕັ້ງບ້ານເຮືອນໃໝ່ລາວຈຶ່ງທ່ອງທຽວໄປເລື້ອຍໆ ຈົນວັນນຶ່ງລາວໄດ້ມາເຮືອນຂອງມີກາ "*ມີກາ ຈຶ່ງກ່າວແກ່ເຂົາວ່າ, “ຈົ່ງຢູ່ກັບຂ້າພະເຈົ້າເຖີດ ເປັນຍ່າງບິດາແລະປະໂຣຫິດຂອງຂ້າພະເຈົ້າກໍແລ້ວກັນ ຂ້າ ພະເຈົ້າຈະຈ່າຍເງິນໃຫ້ປີລະສິບແຜ່ນ ພ້ອມທັງເຄື່ອງນຸ່ງແລະອາຫານການກິນ” ເລວີຄົນນັ້ນຈຶ່ງເຂົ້າໄປ ເລ ວີຄົນນັ້ນກໍພໍໃຈທີ່ຈະຢູ່ກັບຊາຍຄົນນັ້ນ* "(ຂໍ້ 10). ເຫດການຕອນນີ້ອັນຕະລາຍຫລາຍ ຫາກເຮົາບໍ່ມີຫລັກສາສ ນາສາດກໍຈະເຫັນວ່າພຣະເຈົ້າສົ່ງຄົນເລວີໃຫ້ມາເປັນປະໂຣຫິດປະຈຳເຮືອນຂອງເຂົາ ເພາະເບິ່ງຄືວ່າມັນ ເປັນຄືແນວນັ້ນ, ແຕ່ເມື່ອເບິ່ງຕາມຫລັກສາສນາສາດແລ້ວມັນເປັນພຽງເຫດການບັງເອີນເທົ່ານັ້ນ, ອີກຢ່າງ ນຶ່ງຄົນເລວີຜູ້ຮັບໜ້າທີ່ນັ້ນກໍເປັນພຽງປະໂຣຫິດຮັບຈ້າງເທົ່ານັ້ນ. ເຖິງປານນັ້ນ “*ບັດນີ້ ຂ້າພະເຈົ້າຮູ້ແລ້ວວ່າ ພຣະຜູ້ເປັນເຈົ້າຈະຊົງໃຫ້ຂ້າພະເຈົ້າຮັ່ງມີເປັນດີ ເພາະວ່າຂ້າພະເຈົ້າມີເລວີຄົນນຶ່ງເປັນປະໂຣຫິດ*” (ຂໍ້ 13). ການກະທຳແລະການເຂົ້າໃຈຂອງມີກາແມ່ນການກະທຳແລະການເຂົ້າໃຈຜິດ ເປັນບົດຮຽນສຳລັບເຮົາທຸກ ຄົນຄືເຮົາບໍ່ຕ້ອງເພິ່ງຄວາມຮອບຮູ້ແລະຄວາມເຂົ້າໃຈຂອງຕົນເອງຜູ້ດຽວ ເຮົາຈະຕ້ອງໄປປຶກສາກັບຜູ້ມີ ຄວາມຮູ້ທີ່ເຕັມໄປດ້ວຍພຣະວິນຍານເສັຽກ່ອນຈະດີກວ່າເຮັດຕາມໃຈຕົນ. ພຣະເຢຊູຊົງກ່າວວ່າ " *ຜູ້ທີ່ຮັບ ຈ້າງບໍ່ເປັນຜູ້ລ້ຽງແກະ ແລະຝູງແກະບໍ່ແມ່ນຂອງຕົນ ເມື່ອເຫັນໝາໃນຜູ້ນັ້ນກໍປະຖິ້ມຝູງແກະປົບໜີໄປ ໝາ ໃນກໍຄາບຍາດເອົາແກະໄປເສັຽ ແລະເຮັດໃຫ້ຝູງແກະແຕກຊະກັນໄປ*" (ໂຢຮັນ 10:12). ບໍ່ໝາຍຄວາມວ່າ ຄົນຮັບຈ້າງບໍ່ດີ ແຕ່ຢາກບອກວ່າຜູ້ຮັບຈ້າງບໍ່ຮັບຜິດຊອບຢ່າງຈິງຈັງຄືເຈົ້າຂອງຈັກເທື່ອ.

## 3. <u>ໜີໄປກັບຜູ້ທີ່ຈ້າງແພງກວ່າ:</u> (ພວກຜູ້ປົກຄອງ 18:1-31)

ຫລັງຈາກຄົນເລວີຜູ້ນັ້ນເປັນປະໂຣຫິດປະຈຳເຮືອນຂອງມີກາບໍ່ນານເທົ່າໃດ ເຜົ່າດານເຊິ່ງເປັນເຜົ່ານຶ່ງໃນ ຊາດອິສຣາເອນ, ພວກເຂົາມີຄວາມຄິດຢາກໄດ້ດິນແດນມາເປັນສົມບັດຂອງເຜົ່າພັນຂອງເຂົາ. ໃນສມັຍ ນັ້ນຊົນຊາດອິສຣາເອນບໍ່ທັນມີກະສັດເປັນຜູ້ແບ່ງປັນດິນແດນໃຫ້ເຂົາເທື່ອ ດັ່ງນັ້ນພວກເຜົ່າດ່ານຈຶ່ງມີຄວາມ ຮ້ອນຮົນຊອກຫາດິນດອນຕອນຫຍ້າສຳລັບເຜົ່າຂອງເຂົາ. ໃນການຊອກຫາດິນດອນຕອນຫຍ້າຂອງເຂົານັ້ນ ເຂົາບໍ່ໄດ້ຊອກບ່ອນຫວ້າງເປົ່າຫລືບ່ອນບໍ່ມີເຈົ້າຂອງແຕ່ເຂົາໄດ້ຊອກເບິ່ງຕາມຫົວເມືອງຕ່າງໆ ຫາກເຫັນວ່າ ບ້ານເມືອງໃດເປັນບ້ານເມືອງທີ່ອຸດົມສົມບູນໜ້າຢູ່ ເຂົາກໍຈະເຮັດເສິກໂຈມຕີເອົາເມືອງນັ້ນມາເປັນຂອງເຂົາ. ພວກເຜົ່າດານໄດ້ໃຊ້ພວກນັກສືບຫ້າຄົນອອກໄປສອດແນມເບິ່ງຕາມຫົວເມືອງຕ່າງໆ ຈຶ່ງເຫັນວ່າເມືອງອາ ລິດເປັນເປົ້າໝາຍການໂຈມຕີຂອງເຂົາໆຈຶ່ງຊຸມນຸມເວົ້າກັນວ່າ " *ໃຫ້ພວກເຮົາພາກັນໄປຕີເອົາເມືອງອາລິດ ພວກຂ້ອຍໄດ້ເຫັນເມືອງນັ້ນເປັນດິນແດນດີທີ່ສຸດ*"(ຂໍ້ 9). ແລ້ວເຂົາຈຶ່ງຕຽມທະຫານ 600 ຄົນເພື່ອໄປສູ້ຮົບ

ພວກເຂົາໄດ້ເດີນທາງຜ່ານຫົວເມືອງຕ່າງໆ ແລະເມື່ອມາເຖິງເມືອງອາລິດຊາຍສອດແນມທັງຫ້າໄດ້ສັງເກດເຫັນເຮືອນຂອງມີກາມີຮູບໂຄຣົບໄມ້ທີ່ໂອບດ້ວຍເງິນແລະຍັງເຫັນຮູບໂຄຣົບອື່ນໆອີກ ດັ່ງນັ້ນເຂົາຈຶ່ງເອົາທະຫານທັງ 600 ຄົນມາຍຶດເອົາຮູບໂຄຣົບຂອງມີກາ ແລະເຄື່ອງອື່ນໆທີ່ມີກາໄດ້ສ້າງຂຶ້ນ (ຂໍ້ 10-16). ເມື່ອເຂົາໄດ້ຍຶດເອົາສິ່ງຂອງທັງໝົດແລ້ວປະໂຣຫິດປະຈໍາເຮືອນຂອງມີກາຈຶ່ງຕໍ່ວ່າ ເວົ້າກັບເຂົາວ່າ " *ພວກເຈົ້າກໍາລັງເຮັດຫຍັງ" ພວກເຂົາຕອບວ່າ ຢ່າປາກ ຈົ່ງມາກັບພວກເຮົາສາໄປເປັນປະໂຣຫິດແລະເປັນທີ່ປຶກສາຂອງພວກເຮົາ ທ່ານຈະເປັນປະໂຣຫິດຂອງຊາຍຄົນດຽວ ຫລືທ່ານຈະເປັນປະໂຣຫິດຂອງເຜົ່າໜຶ່ງໃນຊາດອິສຣາເອນທັງໝົດ ອັນໃດຈະດີກວ່າກັນ ເຣື່ອງນີ້ເຮັດໃຫ້ປະໂຣຫິດມີຄວາມດີໃຈຫລາຍ ສະນັ້ນລາວຈຶ່ງນໍາເອົາສິ່ງສັກສິດເຫລົ່ານັ້ນໜີຕາມຊາວດານໄປ*"( ຂໍ້ 18-20). ບົດຮຽນສໍາລັບເຮົາ 1. ປະໂຣຫິດຜູ້ນີ້ ແມ່ນມະນຸດຄອບຄົວນຶ່ງຄອບຄົວດຽວແຕ່ງຕັ້ງ. 2. ປະໂຣຫິດຮັບຈ້າງ ຈະເຫັນເບິ່ງເຫັນແຕ່ຄ່າຈ້າງ ຜູ້ໃດຈ້າງຫລາຍລາວກໍໄປຢູ່ກັບຜູ້ນັ້ນ. 3. ປະໂຣຫິດຜູ້ນີ້ຍັງລັກເອົາອີຟອດ (ເຄື່ອງນຸ່ງເຂົ້າເຝົ້ານະມັສການ) ແລະອື່ນໆໄປນໍາລາວອີກ. 4. ປະໂຣຫິດໄດ້ພິຈາຣະນາຣະຫວ່າງເປັນປະໂຣຫິດສໍາລັບຄອບຄົວດຽວ ກັບເປັນປະໂຣຫິດຂອງເຜົ່ານຶ່ງລາວເລືອກເປັນປະໂຣຫິດຂອງເຜົ່າ.

## 4. <u>ນັບມື້ນັບເສື່ອມໂຊມລົງ:</u> (ພວກຜູ້ປົກຄອງ 19:1-28)

ໃນສມັຍບໍ່ມີກະສັດປົກຄອງນັ້ນຜູ້ໃດກໍມັກຈະເຮັດຕາມໃຈຊອບຂອງຕົນ, ເຣື່ອງໃນຕອນນີ້ໄດ້ເວົ້າເຖິງຄົນເລວີຜູ້ນຶ່ງມີພູມລໍາເນົາທີ່ພູດອຍເອຟາຣາອີມ ແຕ່ລາວໄດ້ເມັຽນ້ອຍເປັນຄົນເມືອງເບັດເລເຮັມ ແຂວງຢູດາຍມາເປັນເມັຽ. ຢູ່ມາວັນນຶ່ງຜົວເມັຽຄູ່ນີ້ໄດ້ຜິດຖຽງແລະຄຽດໃຫ້ກັນ, ຜູ້ເປັນເມັຽໄດ້ໜີໄປຍັງບ້ານພໍ່ແມ່ຂອງລາວ ທີ່ເບດເລເຮັມເປັນເວລານານເຖິງສີ່ເດືອນແລ້ວ, ຕໍ່ມາຄົນເລວີຜູ້ເປັນຜົວກໍເອົາຄົນໃຊ້ຂອງລາວເດີນທາງໄປນໍາເອົາເມັຽຄືນມາບ້ານ. ເມື່ອລາວໄປຮອດບ້ານພໍ່ແມ່ຂອງເມັຽແລ້ວພໍ່ເມັຽຂອງລາວກໍດີໃຈທີ່ໄດ້ລູກເຂີຍເປັນຄົນເລວີຈຶ່ງໜ່ວງໜ່ຽວຊັກຊວນໃຫ້ລາວພັກຢູ່ຫລາຍມື້ດ້ວຍວິທີການຕ່າງໆ ແຕ່ໃນວັນທີຫ້າລາວຈຶ່ງຕັດສິນໃຈເດີນທາງກັບບ້ານ ແຕ່ເມື່ອເດີນທາງກັບບ້ານນັ້ນລາວກັບເມັຽແລະຄົນໃຊ້ໄດ້ເຂົ້າໄປພັກຢູ່ກັບຊາຍໃຈບຸນຜູ້ນຶ່ງ. ໃນຄືນນັ້ນມີເຫດການທີ່ບໍ່ຄາດຝັນເກີດຂຶ້ນ ຄືມີພວກນັກເລງມາກໍ່ກວນ " *ໄດ້ມີນັກເລງມາລ້ອມເຮືອນໄວ້ແລະໃຊ້ກໍາປັ້ນຕີປະຕູເຮືອນ ພວກເຂົາຮ້ອງບອກຊາຍແກ່ຜູ້ນັ້ນວ່າ ຈົ່ງນໍາເອົາຊາຍທີ່ມາຄ້າງຢູ່ໃນເຮືອນຂອງເຈົ້າອອກມາ ເພາະພວກເຮົາຢາກຮ່ວມເພດກັບລາວ*" (ຂໍ້ 22). ແຕ່ຊາຍແກ່ຜູ້ເປັນເຈົ້າຂອງເຮືອນໄດ້ພະຍາຍາມປົກປ້ອງແຂກຂອງລາວໂດຍສເນີເອົາລູກສາວມາປ່ຽນໂຕ ແຕ່ເຂົາກໍຍັງບໍ່ຍອມ ເມື່ອເປັນເຊັ່ນນັ້ນ ຄົນເລວີຈຶ່ງເອົາເມັຽຂອງລາວໄປໃຫ້ພວກນັກເລງຂົ່ມຂືນຊໍາເລົາຈົນລາວຕາຍຄາປະຕູໜ້າເຮືອນ (ຂໍ້ 25-26). ພໍຕື່ນເຊົ້າມາຄົນເລວີຜູ້ນັ້ນຈຶ່ງເອົາສົບຂອງເມັຽລາວກັບຄືນໄປຍັງເຮືອນຂອງລາວ (ຂໍ້ 28).

ຄຣິສຕຽນຈະບໍ່ເປັນຄົນປ້ອຍດ່າ ແລະຈະບໍ່ເຮັດຕາມຄວາມເຂົ້າໃຈຕົນ ຄືເຮົາຈະຕ້ອງປຶກສານໍາຜູ້ຮຽນຮູ້ສາກ່ອນໆຈະເຮັດຫຍັງລົງໄປ. ສຸດທ້າຍ ສອງແມ່ລູກນີ້ບໍ່ແມ່ນແຕ່ສ້າງພຣະປອມເທົ່ານັ້ນ ຍັງຕັ້ງສາສນາປະຈໍາຄອບຄົວອີກໂດຍຕັ້ງຜູ້ນຶ່ງໃນຄອບຄົວໃຫ້ເປັນປະໂຣຫິດປະຈໍາເຮືອນອີກ (ຂໍ້ 5).

## 5. <u>**ສົງຄາມກາງເມືອງ:**</u> (ພວກຜູ້ປົກຄອງ 19:29--20:48)

ຄວາມໂກດຮ້າຍຄຽດແຄ້ນນັ້ນມັນຮ້າຍແຮງກວ່າໄຟລາມປ່າ, ຄົນເລວີຄຽດແຄ້ນຕໍ່ພວກນັກເລງຈົນເຖິງຂັ້ນສຸດຂີດ ດັ່ງນັ້ນເມື່ອລາວນຳຊາກສົບຂອງເມັຽລາວໄປຮອດບ້ານແລ້ວ ລາວໄດ້ຕັດຮ່າງກາຍເມັຽຂອງລາວເປັນສິບສອງຕ່ອນເພື່ອສົ່ງຟ້ອງຄົນອິສຣາເອນທັງສິບສອງຕະກຸນ ເພື່ອໃຫ້ຄົນເຫລົ່ານີ້ຄຽດແຄ້ນແລ້ວໄປຂ້າພວກເຂົາເສັຽ "*ເມື່ອມາຮອດເຮືອນແລ້ວລາວກໍໃຊ້ພ້າຕັດຮ່າງກາຍຂອງເມັຽນ້ອຍນັ້ນອອກເປັນສິບສອງຕ່ອນແລະສົ່ງໃຫ້ແຕ່ລະເຜົ່າໃນສິບສອງເຜົ່າຂອງອິສຣາເອນ*" (ຂໍ້ 29). ເມື່ອທັງສິບສອງເຜົ່າໄດ້ຮັບພາກສ່ວນຂອງຮ່າງກາຍນີ້ແລ້ວຈຶ່ງເຕົ້າໂຮມກັນເອົາທະຫານ 400, 000 ຄົນ ເພື່ອຕຽມໂຈມຕີພວກນັກເລງຊົ່ວຮ້າຍ (20:2). ຕໍ່ມາອິສຣາເອນໄດ້ສົ່ງທູດໄປຫາເຜົ່າເບັນຈະມິນໃຫ້ສົ່ງຕົວຜູ້ຮ້າຍທັງໝົດມາໃຫ້ປະຫານເສັຽແຕ່ພວກເບັນຈະມິນກັບສ້າງຕັ້ງກອງທະຫານ 26,000 ແລະພວກຄົນແຮງຊ້າຍອີກ 500 ຄົນເພື່ອຕໍ່ສູ້ກັບອິສຣາເອນ ແລ້ວກໍມີສົງຄາມກາງເມືອງຂ້າກັນຢ່າງອຶກກະທຶກ. ການໂຈມຕີສອງຄັ້ງທຳອິດພວກອິສຣາເອນຖືກຂ້າຕາຍຄັ້ງທີໜຶ່ງ 22,000 ຄົນ (ຂໍ້ 21) ແລະຄັ້ງທີສອງອິສຣາເອນຖືກຂ້າຕາຍ 18,000 ຄົນ ຈຶ່ງເປັນການເສັຽຂວັນ, ດັ່ງນັ້ນເຂົາຈຶ່ງເຂົ້າເຝົ້າພຣະເຈົ້າແລະຖາມວ່າ " *ພວກຂ້າພຣະອົງຄວນຈະອອກໄປສູ້ຮົບພວກເບັນຈາມິນພີ່ນ້ອງຂອງພວກຂ້າພຣະອົງຫລືບໍ່? ຫລືໃຫ້ຍອມແພ້? ພຣະຜູ້ເປັນເຈົ້າຕອບວ່າ ຈົ່ງອອກໄປສູ້ຮົບ ມື້ອື່ນເຮົາຈະໃຫ້ເຈົ້າມີຊັຍຊະນະ*" ( ຂໍ້ 28). ໃນທີ່ສຸດພວກອິສຣາເອນໄດ້ຂ້າລ້າງເຜົ່າເບັນຈາມິນ ແລະສັດລ້ຽງຂອງເຂົາຈົນໝົດ (ຂໍ້ 48).

## 6. <u>**ຫາເມັຽໃຫ້ເຜົ່າເບັນຈະມິນ:**</u> (ພວກຜູ້ປົກຄອງ 21: 1-25)

ເມື່ອການສູ້ຮົບກັນຈົບສິ້ນລົງແລ້ວ ແຕ່ພວກອິສຣາເອນສັນນິຖານວ່າພວກເບັນຈະມິນອາດຈະບໍ່ຕາຍໝົດ ດັ່ງນັ້ນເຂົາຈຶ່ງປະຊຸມຕົກລົງກັນວ່າຈະບໍ່ໃຫ້ລູກສາວຂອງເຂົາແຕ່ງງານກັບຊາຍເຜົ່າເບັນຈະມິນ. ສ່ວນປະຊາຊົນອິສຣາເອນໄດ້ເຂົ້າເຝົ້າພຣະເຈົ້າອີກ ໂດຍຂໍໃຫ້ເບັນຈະມິນມີເຊື້ອສາຍສືບຕໍ່ໄປໃນສິບສອງຕະກຸນຂອງ ອິສຣະເອນ ແຕ່ພວກເຂົາເອງໄດ້ປະຕິຍານຕົນແລ້ວວ່າຈະບໍ່ຍອມໃຫ້ລູກສາວມີຜົວເປັນເຜົ່າເບັນຈະມິນ. ປະຊົນຈຶ່ງປະຊຸມກັນວ່າໃນຕອນເຮັດເສິກສົງຄາມນັ້ນມີເຜົ່າໃດທີ່ບໍ່ອອກສູ້ຮົບນຳພວກເຮົາ ເຂົາຈຶ່ງພົບວ່າຄົນໃນເມືອງຢາເບັດບໍ່ໄດ້ຊ່ອຍ ດັ່ງນັ້ນເຂົາຈຶ່ງສົ່ງທະຫານ 12. 000 ຄົນໄປຂ້າຊາວຢາເບັດ (ຂໍ້ 8-10). ເຂົາໄດ້ຈັບເອົາຍິງສາວບໍຣິສຸດ 400 ຄົນເພື່ອສົ່ງໄປເປັນເມັຽຂອງເຜົ່າເບັນຈະມິນ ເພື່ອເຜົ່າຂອງເຂົາຈະມີເຊື້ອສາຍສືບຕໍ່ໄປ (ຂໍ້ 11). ຍິງ 400 ຄົນຍັງບໍ່ພຽງພໍສຳລັບຊາຍຊາວເບັນຈະມິນ ດັ່ງນັ້ນເຂົາຈຶ່ງວາງແຜນໃຫ້ຊາຍເບັນຈະມິນລີ້ຢູ່ໃນສວນເມື່ອຍິງສາວເມືອງຊີໂລອອກມາເຕັ້ນລຳໃນເທສການປະຈຳປີນັ້ນໃຫ້ຊາຍເບັນຈະມິນໄປຍຶດເອົາພວກນາງໄປເປັນເມັຽ. (ຂໍ້ 21).

## <u>**ຄຳຖາມ:**</u>

1. ເປັນຫຍັງມີກາກັບແມ່ຂອງລາວຈຶ່ງສ້າງຮູບໂຄຣົບ?

2. ຮູບໂຄຣົບຜິດຕໍ່ພຣະເຈົ້າແລະເຮົາຢ່າງໃດ?

3. ຊາວເລວີໄປເຮັດຫຍັງແຖວບ້ານມີກາ ແລ້ວຖືກຈ້າງໄປເປັນປະໂຣຫິດ?

4. ມີກາແລະແມ່ຂອງລາວຄິດແນວໃດຈຶ່ງສ້າງສາສນາໃນເຮືອນ?

5. ເປັນຫຍັງຄົນເລວີທີ່ເປັນປະໂຣຫິດຂອງມີກາຈຶ່ງໜີໄປກັບຜູ້ອື່ນ?

6. ເປັນຫຍັງຈຶ່ງເກີດສົງຄາມກາງເມືອງ?

7. ເປັນຫຍັງເຂົາເຈົ້າຈຶ່ງຫາເມັງໃຫ້ເຜົ່າເບັນຈະມິນ?

8. ບົດຮຽນອັນສຳຄັນສຳລັບທ່ານໃນວັນນີ້ແມ່ນອັນໃດແດ່?

*ທວ*

# <u>ບົດຮຽນອິສເຕີ</u>
## <u>ຖືກດູໝິ່ນ, ຖືກປະລະ, ຖືກຄຶງ, ຄືນພຣະຊົນ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ມາຣະໂກ 15:16-20, 24-40; 16:1-8

**<u>ພູມຫລັງຂອງພຣະຄັມພີ:</u>** ມາຣະໂກ 15--16

**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ບອກໃຫ້ຮູ້ວ່າຊົງຖືກດູໝິ່ນ, ຖືກຄຶງ ແລະຄືນພຣະຊົນເພື່ອເຮົາ.

**<u>ຄໍາຖາມເພື່ອການຄົ້ນຄວ້າ:</u>** ເຮົາຈະຮຽນອົດທົນເມື່ອຖືກທົດລອງໄດ້ແນວໃດ?

**<u>ຈຸດປະສົງຂອງບົດຮຽນ</u>:** ເພື່ອສອນໃຫ້ຮູ້ວ່າການທົດລອງໃນຊີວິດຖືກຄໍ້າປະກັນໂດຍການຄືນພຣະຊົນ.

## <u>ບົດນໍາ</u>

ຊົງອົດທົນຕາງພວກເຮົາເພື່ອເຮົາທັງຫລາຍຈະໄດ້ລອດພົ້ນຈາກຄວາມຜິດບາບ ແຕ່ໜ້າເສັຽດາຍແມ່ນແຕ່ສາວົກຜູ້ໃກ້ຊິດກໍຍັງບໍ່ເຂົ້າໃຈຢ່າງຄັກແນ່ ຈົນກວ່າວັນຄືນພຣະຊົນມາເຖິງເຂົາຈຶ່ງເຂົ້າໃຈ.

### 1. <u>ຖືກປະລະ, ຖືກເຍາະເຍີ້ຍ ແລະຖືກຂົ່ມເຫງ:</u> (ມາຣະໂກ 15:16-20)

ຜູ້ທໍານວາຍເອຊາຢາໄດ້ກ່າວໄວ້ວ່າ " *ມັນເປັນຄວາມມຸ້ງມາດປາຖນາຂອງພຣະຜູ້ເປັນເຈົ້າ ທີ່ຄົນໃຊ້ຂອງພຣະອົງໄດ້ຈະເຣີນເຕີບໂຕເຫມືອນກົກໄມ້ປົ່ງຮາກໃນດິນແຫ້ງ ຄົນໃຊ້ນັ້ນບໍ່ໄດ້ສະງ່າຜ່າເຜີຍ ຫລືຈົບງາມເລີຍ* " (ເອຊາຢາ 53: 2). "*ແຕ່ທ່ານໄດ້ທົນແບກເອົາຄວາມລໍາບາກຂອງເຮົາ ຄືຄວາມເຈັບປວດທີ່ເຮົາແບກຢູ່ນັ້ນ ເຮົາຄິດສເມີວ່າຄວາມລໍາບາກຂອງທ່ານນັ້ນແມ່ນການລົງໂທດຂອງພຣະເຈົ້າ ແຕ່ທ່ານຖືກບາດເຈັບຍ້ອນບາບຂອງພວກເຮົາທັງຫລາຍ ທ່ານຖືກຕີຍ້ອນພວກເຮົາທໍາຊົ່ວ ການລົງໂທດທີ່ທ່ານໄດ້ຮັບນັ້ນທໍາໃຫ້ພວກເຮົາເປັນອິສຣະສົມບູນ ທີ່ທ່ານຖືກຕີນັ້ນກໍເພື່ອໃຫ້ເຮົາຫາຍດີ ເຮົາທັງຫມົດເປັນເຫມືອນແກະທີ່ສູນເສັຽແລ້ວ ເຮົາທຸກຄົນຕ່າງເດີນໄປຕາມທາງຂອງຕົນ ພຣະຜູ້ເປັນເຈົ້າໄດ້ຊົງລົງໂທດທ່ານ ຄືໂທດທີ່ເຮົາທັງຫມົດສົມຄວນໄດ້ຮັບທ່ານຖືກຫມິ່ນປມາດຢ່າງເຈັບແສບ ແຕ່ກໍມີຄວາມສຸພາບອ່ອນຫວານ ທ່ານບໍ່ເວົ້າຈາຫຍັງເລີຍເຫມືອນລູກແກະທີ່ຖືກນໍາໄປຂ້າ ແລະເຫມືອນແກະທີ່ຖືກເຂົາຕັດຂົນ ທ່ານບໍ່ເວົ້າຈາຫຍັງເລີຍທ່ານຖືກພິພາກສາລົງໂທດແລະນໍາອອກໄປປະຫານ ບໍ່ມີໃຜກັງວົນສົນໃຈໃນເຄາະກັມຂອງທ່ານເລີຍ ທ່ານຖືກຂ້າຍ້ອນບາບຂອງຊົນຊາດເຮົາ* " (ເອຊາຢາ 53:4-8). ທັງໝົດນີ້ເປັນພຣະປະສົງຂອງພຣະເຈົ້າທີ່ຈະໃຫ້ພຣະເຢຊູຜູ້ຊົງເປັນພຣະບຸດອົງດຽວຂອງພຣະອົງໄດ້ລົງມາມາເກີດເປັນມະນຸດ ເພື່ອຮັບໂທດກັມແທນທຸກຄົນທີ່ຍອມຮັບເອົາພຣະເຢຊູມາເປັນພຣະຜູ້ໄຖ່ໃຫ້ພົ້ນ.

ພຣະທັມເອຊາຢາໄດ້ກ່າວໄວ້ວ່າ ພຣະອົງຊົງຮັບທຸກທໍຣະມານນັ້ນໄດ້ເກີດເປັນຈິງທຸກປະການ, ແຕ່ໜ້າເສັຽດາຍການທົນທຸກທໍຣະມານຂອງພຣະອົງນັ້ນຄົນສ່ວນຫລາຍບໍ່ເຂົ້າໃຈຈຶ່ງບໍ່ຍອມຮັບເຊື່ອວ່າພຣະເຢຊູໄດ້ຊົງເປັນຜູ້ຮັບໂທດເຫລົ່ານີ້ແທນເຂົາ. " *ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກພຣະຣັສມີຂອງພຣະເຈົ້າ* " (ໂຣມ 3:23). ສລຸບແລ້ວແມ່ນຄວາມບາບໄດ້ບັງໄວ້ບໍ່ໃຫ້ເຫັນສິ່ງທີ່ພຣະເຢຊູໄດ້ກະທຳເພື່ອເຂົາ.

ຄວາມຜິດບາບໃນຕົວຂອງມະນຸດໄດ້ປົກຄຸມບໍ່ໃຫ້ເຫັນຄວາມຈິງ ແລະຄວາມບາບນັ້ນໄດ້ແບ່ງແຍກໃຫ້ມະນຸດຫ່າງໄກຈາກພຣະເຈົ້າ ແຕ່ຫາກຜູ້ໃດຍອມເຊື່ອວ່າພຣະເຢຊູຊົງເປັນພຣະຜູ້ຊ່ອຍໃຫ້ລອດຜູ້ນັ້ນກໍເຫັນແສງສວ່າງ " *ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າກໍຄືຊີວິດອັນຕລອດໄປເປັນນິດໃນພຣະຄຣິດ ຄືພຣະເຢຊູເຈົ້າຂອງພວກເຮົາ* " (ໂຣມ 6:23). ພຣະທັມມາຣະໂກບອກວ່າ " *ເຂົາໄດ້ເອົາເສື້ອສີມ່ວງອ່ອນມານຸ່ງໃຫ້ພຣະອົງ ແລ້ວເອົາເຄືອໜາມຖັກໂຄ້ງແທນພວງມາລັຍສຸບໃສ່ພຣະສຽນຂອງພຣະອົງແລະຕັ້ງຕົ້ນຄຳນັບພຣະອົງທູນວ່າ, "ກະສັດຂອງຊາດຢິວເອີຍ, ຈົ່ງຊົງ ພຣະຈະເຣີນເທີ້ນ" ເຂົາໄດ້ເອົາໄມ້ອໍ້ຕີພຣະສຽນພຣະອົງ ຖົ່ມນໍ້າລາຍໃສ່ພຣະອົງ ແລະຄຸເຂົ່າລົງຄຳນັບພຣະອົງ ເມື່ອໄດ້ເຍາະເຍີ້ຍພຣະອົງແລ້ວເຂົາໄດ້ຖອດເສື້ອສີມ່ວງອ່ອນໂຕນັ້ນອອກ ແລ້ວເອົາເຄື່ອງທົງຂອງພຣະອົງມານຸ່ງໃຫ້ ແລະນຳພຣະອົງອອກໄປເພື່ອຕອກຕິດໄວ້ທີ່ໄມ້ກາງແຂນ* " (ມາຣະໂກ 17-20). ພຣະເຢຊູໄດ້ຮັບການທີ່ເຂົາເຮັດແກ່ພຣະອົງນັ້ນແທນຄວາມຜິດບາບຂອງພວກເຮົາທັງຫລາຍ ແລະເຮົາບໍ່ໄດ້ຮັບສິ່ງເຫລົ່ານັ້ນກໍເພາະພຣະອົງຊົງຮັບແທນເຮົາໝົດແລ້ວ ດັ່ງນັ້ນເຮົາຈຶ່ງເປັນໜີ້ພຣະຄຸນພຣະອົງຢ່າງລົ້ນເຫລືອ.

## 2. <u>ພຣະເຢຊູສິ້ນພຣະຊົນ:</u> ( ມາຣະໂກ 24-40).

ການຄຶງທີ່ໄມ້ກາງແຂນເປັນວິທີຂອງໂຣມັນປະຫານນັກໂທດເພື່ອໃຫ້ພວກຫນັກໂທດໄດ້ຮັບຄວາມທຸກທໍຣະມານ, ເຂົາໄດ້ເອົາພຣະເຢຊູໄປຄຶງໄວ້ທີ່ໄມ້ກາງແຂນໃນຣະຫວ່າງໂຈນສອງຄົນທີ່ເປັນນັກໂທດສົມຄວນຖືກປະຫານຍ້ອນຄວາມຊົ່ວຮ້າຍຂອງເຂົາ, ສ່ວນພຣະເຢຊູບໍ່ມີຄວາມຜິດອັນໃດທີ່ສົມຄວນຈະຖືກຕຶງທີ່ໄມ້ກາງແຂນ ແມ່ນແຕ່ຂໍ້ກ່າວຫາກໍບໍ່ເປັນຄວາມຈິງຈັກຢ່າງ. ໃນຣະຫວ່າງທີ່ພຣະອົງຊົງຖືກຄຶງທີ່ໄມ້ກາງແຂນນັ້ນພວກທະຫານໄດ້ແກ້ເອົາເສື້ອຜ້າຂອງພຣະອົງອອກ ແລ້ວມາເຮັດຕລົກຈົກສລາກແບ່ງປັນເສື້ອຜ້າພຣະອົງ, ການທີ່ເຂົາເຮັດສລາກບໍ່ແມ່ນເຂົາຢາກໄດ້ເສື້ອຜ້າພຣະອົງດອກ ແຕ່ເຂົາໄດ້ເຮັດເພື່ອເປັນການເຍາະເຍີ້ຍໃຫ້ພຣະອົງອັບອາຍຂາຍໜ້າເທົ່ານັ້ນ (ຂໍ້ 24). ໃນພຣະທັມລູກາໄດ້ກ່າວເຖິງຄຳເວົ້າຂອງໂຈນທັງສອງເວົ້າກັບພຣະເຢຊູວ່າ " *ຝ່າຍຄົນນຶ່ງໃນຜູ້ຮ້າຍທີ່ຖືກຄຶງໄວ້ ໄດ້ເວົ້າໝິ່ນປມາດຕໍ່ພຣະອົງວ່າ, "ເຈົ້າເປັນພຣະຄຣິດບໍ່ແມ່ນຫລື ຈົ່ງຊ່ອຍຕົວເອງກັບຊ່ອຍເຮົາໃຫ້ພົ້ນເສັຽ"ແຕ່ຄົນນຶ່ງໄດ້ຫ້າມວ່າ, "ໂຕບໍ່ຢ້ານພຣະເຈົ້າຫລື ເພາະໂຕກໍຖືກໂທດເໝືອນກັນຝ່າຍເຮົາກໍສົມກັບໂທດນັ້ນແທ້ ເພາະເຮົາກຳລັງໄດ້ຮັບສົມກັບການທີ່ເຮົາເຮັດນັ້ນແຕ່ຜູ້ນີ້ບໍ່ໄດ້ເຮັດຜິດອັນໃດ"ແລ້ວຄົນນັ້ນຈຶ່ງທູນວ່າ, "ພຣະເຢຊູເອີຍ, ເມື່ອໃດທ່ານມາໃນແຜ່ນດິນຂອງທ່ານຂໍຈົ່ງລະນຶກເຖິງຂ້ານ້ອຍແດ່* " (ລູກາ 23:39).

ຮູບພາບຕອນນີ້ເຮັດໃຫ້ເຮົາເຫັນວ່າພຣະເຢຊູຊົງວາຍພຣະຊົນເພື່ອທຸກຄົນທີ່ຍອມຮັບວ່າຕົນເອງເປັນຄົນຜິດຄົນບາບ, ພຣະເຢຊູໄດ້ຖືກຄຶງໃນຣະຫວ່າງຜູຮ້າຍທັງສອງ ອັນໝາຍເຖິງຄົນຜິດບາບທີ່ຢູ່ອ້ອມຂ້າງພຣະອົງ, ນຶ່ງໃນສອງໂຈນຮ້າຍນັ້ນໄດ້ຮັບເຊື່ອພຣະອົງ ອັນໝາຍເຖິງທ່ານແລະຂ້າພະເຂົ້າເຊິ່ງເມື່ອກ່ອນເຮົາກໍເປັນຄົນຜິດບາບ ແຕ່ໄດ້ຮັບເຊື່ອພຣະເຢຊູແລ້ວຈຶ່ງພົ້ນໂທດບາບທັງປວງ. ພຣະເຢຊູໄດ້ກ່າວກັບໂຈນຜູ້ຮັບເຊື່ອພຣະອົງວ່າ " *ເຮົາບອກທ່ານຕາມຈິງວ່າ ວັນນີ້ທ່ານຈະຢູ່ກັບເຮົາໃນທີ່ສຸຂເສີມ* " (ລູກາ 23:40). ສ່ວນອີກຜູ້ນຶ່ງທີ່ກ່າວຄຳໝິ່ນປມາດພຣະອົງນັ້ນຄືບຸກຄົນທີ່ຍັງບໍ່ທັນຮັບເຊື່ອພຣະອົງ ແລະຫວັງໃຈວ່າພວກຄົນເຫລົ່ານັ້ນຄົງຈະມີໂອກາດຮັບເຊື່ອກ່ອນທີ່ເຂົາຈະຈາກໂລກໄປຢູ່ແດນມໍຣະນາ. ກ່ອນທີ່ພຣະອົງຈະສິ້ນລົມຫາຍໃຈມາຣະໂກບອກວ່າໄດ້ເກີດຟ້າມືດມົວທົ່ວແຜ່ນດິນ " *ຄັນເຖິງເວລາທ່ຽງໂມງກໍບັງເກີດມືດມົວທົ່ວແຜ່ນດິນຈົນເຖິງເກົ້າໂມງ ພໍເກົ້າໂມງແລ້ວພຣະເຢຊູຊົງຮ້ອງສຽງດັງວ່າ, "ເອໂລອີ, ເອໂລອີ ແລມາ ຊະບັກທານີ" (ແປວ່າ "ພຣະເຈົ້າຂອງຂ້າພຣະອົງ ພຣະເຈົ້າຂອງຂ້າພຣະອົງ ເພາະເຫດໃດພຣະອົງຈຶ່ງປະຖິ້ມຂ້າພຣະອົງເສັຽ") ບາງຄົນທີ່ຢືນຢູ່ທີ່ນັ້ນເມື່ອໄດ້ຍິນກໍເວົ້າວ່າ, "ເບິ່ງແມ, ມັນຮ້ອງຫາເອລີຢາ" ມີຄົນນຶ່ງແລ່ນໄປເອົາຟອງນ້ຳຈຸ່ມເຫລົ້າແວງສົ້ມໃຫ້ເຕັມ ຈຶ່ງສຽບໃສ່ປາຍໄມ້ອໍ້ຍື່ນໃຫ້ພຣະອົງສເວີຍໂດຍເວົ້າວ່າ, "ຟ້າວເທື່ອ ຖ້າເບິ່ງກ່ອນວ່າເອລີຢາຈະມາປົດມັນລົງຫລືບໍ່" ຝ່າຍພຣະເຢຊູຊົງຮ້ອງສຽງດັງແລ້ວກໍສິ້ນພຣະຊົນ* " (ມາຣະໂກ 33-37).

## 3. <u>**ການຄືນພຣະຊົນເປັນຄວາມຫວັງ:**</u> (ມາຣະໂກ 16:1-8).

ມີເຣື່ອງເລົ່າຢູ່ວ່າ: ມີນາງນ້ອຍຜູ້ນຶ່ງນອນປ່ວຍຢູ່ໂຮງພະຍາບານລໍຖ້າປ່ຽນໝາກໄຂ່ຫລັງມາເປັນເວລານຶ່ງເດືອນແລ້ວ ແຕ່ຍັງບໍ່ທັນມີໝາກໄຂ່ຫລັງທີ່ຖືກຕ້ອງກັບລາວເທື່ອ ແຕ່ລາວກໍມີຄວາມຫວັງເພາະວ່າລາວໄດ້ມີຊື່ໃນບັນຊີແລ້ວ, ດັ່ງນັ້ນເມື່ອໃດຫາກມີໝາກໄຂ່ຫລັງທີ່ຖືກຕ້ອງລາວຈະໄດ້ປ່ຽນທັນທີ. ເຣື່ອງນີ້ມັນເປັນຄືຄົນທີ່ຕົກຢູ່ໃນຄວາມບາບຈະຕ້ອງຖືກຈຳຈອງຍ້ອນຄວາມບາບ ແລະຖືກແຍກອອກຈາກພຣະເຈົ້າໂດຍປາສຈາກຄວາມຫວັງຈະໄດ້ໄປສວັນ, ແຕ່ພຣະເຈົ້າຍັງໃຫ້ໂອກາດຄົນບາບໃຫ້ສາຣະພາບບາບແລ້ວຍອມຮັບເຊື່ອພຣະເຢຊູກ່ອນສິ້ນຊີວິດດັ່ງໂຈນຜູ້ທີ່ຮັບເຊື່ອພຣະເຢຊູໃນລົມຫາຍໃຈຄັ້ງສຸດທ້າຍນັ້ນ, ສ່ວນທຸກຄົນທີ່ໄດ້ເຊື່ອໃນພຣະເຢຊູແລ້ວກໍມີຄວາມຫວັງເໝືອນຄົນທີ່ໄດ້ຂຶ້ນບັນຊີໄວ້ແລ້ວ ເໝືອນດັ່ງນາງນ້ອຍທີ່ນອນຖ້າປ່ຽນໝາໄຂ່ຫລັງທີ່ໂຮງພະຍາບານນັ້ນແລ້ວ.

ຕອນແຣກພວກສາວົກກໍບໍ່ເຂົ້າໃຈ, ພວກແມ່ຍິງກໍບໍ່ເຂົ້າໃຈວ່າຕົນເອງມີຄວາມຫວັງ ເພາະໃນໃຈເຂົາອາດຄຶດວ່າພຣະເຢຊູເປັນຜູ້ນຳແບບສາສນາທົ່ວໄປ ດ້ວຍເຫດນີ້ພວກແມ່ຍິງເຫລົ່ານີ້ຈຶ່ງພາກັນຕັ້ງໃຈຈະໄປທາສົງພຣະສົບຂອງພຣະເຢຊູທີ່ອຸບໂມງຫລັງຈາກສາມວັນຜ່ານໄປ " *ມາຣີອາແມ່ຂອງຢາໂກໂບ ແລະນາງຊາໂລເມໄດ້ຊື້ເຄື່ອງຫອມເພື່ອຈະເອົາໄປທາສົງພຣະສົບຂອງພຣະອົງເວລາຮຸ່ງເຊົ້າໃນວັນຕົ້ນສັປດາ ພໍຕາເວັນອອກເຂົາກໍມາເຖິງອຸບໂມງແລະເຂົາເວົ້າກັນຢູ່ວ່າ, "ໃຜທໍຈະກິ້ງກ້ອນຫີນອອກຈາກປາກອຸບໂມງໃຫ້ເຮົາ* " (ມາຣະໂກ ຂໍ້ 1-3). ແມ່ນແລ້ວຫາກພຣະເຢຊູເປັນຜູ້ນຳສາສານທົ່ວໄປຈະຕ້ອງເປັນຄືພວກແມ່ຍິງໄດ້ຄຶດນີ້

ແຕ່ພຣະເຢຊູແມ່ນພຣະບຸດພຣະເຈົ້າທີ່ຖືກສົ່ງລົງມາເກີດເປັນມະນຸດເພື່ອຈະໄດ້ຕາຍໄຖ່ໂທດຄວາມຜິດບາບຂອງທຸກຄົນທີ່ຍອມຮັບເອົາພຣະອົງມາເປັນພຣະຜູ້ຊ່ອຍ ແລະພຣະອົງຍັງຄືນພຣະຊົນເພື່ອທຸກຄົນທີ່ເຊື່ອໃນພຣະອົງຈະມີຄວາມຫວັງຢ່າງເຕັມສ່ວນ ແລະຍັງເປັນການພິສູດອີກວ່າພຣະອົງຊົງເປັນພຣະເຈົ້າອົງດຽວທີ່ມີໄຊຍະຊະນະເໜືອຄວາມຕາຍ ແລະຜູ້ທີ່ເຊື່ອໃນພຣະອົງກໍຈະເປັນຄືພຣະອົງເໝືອນກັນ.

" *ເມື່ອເຂົ້າໄປໃນອຸບໂມງແລ້ວ ເຂົາໄດ້ເຫັນຄົນໜຸ່ມຄົນນຶ່ງນັ່ງຢູ່ເບື້ອງຂວານຸ່ງເສື້ອຍາວສີຂາວພວກຍິງນັ້ນກໍສະທ້ານຕົກໃຈຝ່າຍຄົນໜຸ່ມນັ້ນໄດ້ບອກເຂົາວ່າ, "ຢ່າຕົກໃຈເທາະ ພວກນາງມາຊອກຫາພຣະເຢຊູໄທນາຊາເຣັດຜູ້ຖືກຄຶງໄວ້ທີ່ໄມ້ກາງແຂນ ພຣະອົງຊົງຖືກບັນດານໃຫ້ເປັນຄືນມາແລ້ວ ພຣະອົງບໍ່ໄດ້ປະທັບຢູ່ທີ່ນີ້ນີ້ແຫລະ, ບ່ອນທີ່ເຂົາໄດ້ວາງພຣະສົບຂອງພຣະອົງໄວ້ແຕ່ຈົ່ງໄປບອກພວກສາວົກຂອງພຣະອົງທັງເປໂຕວ່າ "ພຣະອົງສະເດັດໄປຍັງແຂວງຄາລີເລກ່ອນເຈົ້າທັງຫຼາຍ ແລະເຈົ້າທັງຫລາຍຈະເຫັນພຣະອົງຢູ່ທີ່ນັ້ນເໝືອນພຣະອົງຊົງບອກໄວ້ແກ່ເຈົ້າທັງຫລາຍແລ້ວ* " (ຂໍ້ 5-7). ສິ່ງທີ່ບໍ່ຄາດຝັນໄດ້ເກີດຂຶ້ນຢ່າງອັສຈັນ, ພວກຜູ້ຍິງພາກັນຄຶດຍາກວ່າໃຜຈະກິ້ງຫີນອອກຈາກປາກອຸບໂມງໃຫ້? ແຕ່ດ້ວຍຄວາມຮັກທີ່ເຂົາມີຕໍ່ພຣະເຢຊູເຂົາຈຶ່ງພາກັນໄປ, ແຕ່ເມື່ອໄປຮອດແລ້ວສິ່ງເຂົາຄຶດວ່າຍາກກໍກັບເປັນງ່າຍ, ສິ່ງທີ່ເຂົາຄຶດບໍ່ເຖິງກໍກາຍເປັນຈິງ. ນີ້ແຫລະຄືຄວາມຫວັງຂອງຄຣິສຕຽນ ແລະຄວາມຫວັງຢ່າງດຽວກັນນີ້ຍັງມີໄວ້ສຳລັບທຸກຊາດທຸກພາສາອີກດ້ວຍ. ພຣະເຢຊູຊົງກ່າວວ່າ " *ເຮົານີ້ແຫລະ, ເປັນທາງນັ້ນ, ເປັນຄວາມຈິງ , ແລະເປັນຊີວິດ ບໍ່ມີໃຜໄປເຖິງພຣະບິດາໄດ້ນອກຈາກມາທາງເຮົາ* " (ໂຢຮັນ 14:6).

## ຄຳຖາມ:

1. ການມີຊີວິດນິຣັນຮ່ວມກັບພຣະເຢຊູໄດ້ເປັນກຳລັງໃຈແນວໃດເມື່ອເຮົາຕໍ່ສູ້ກັບຊີວິດໃນໂລກນີ້?

2. ການຄືນພຣະຊົນຂອງພຣະເຢຊູໄດ້ຊ່ອຍໃຫ້ທ່ານຊື່ສັດໝັ້ນຄົງແນວໃດ?

3. ເປັນຫຍັງພຣະເຈົ້າຈຶ່ງສົ່ງໃຫ້ພຣະເຢຊູລົງມາຮັບໂທດຄວາມຜິດບາບພວກເຮົາ?

4. ພຣະເຢຊູຖືກເຂົາດ່າວ່າ, ຖືກເຂົາເຍາະເຍີ້ຍຈົນສິ້ນໃຈຕາຍທີ່ໄມ້ກາງແຂນເພື່ອຜູ້ໃດ?

5. ເປັນຫຍັງໂລກນີ້ຈຶ່ງບໍ່ເຂົ້າໃຈໃນເຣື່ອງພຣະເຢຊູ?

6. ວັນນີ້ທ່ານຈະຂອບພຣະຄຸນພຣະເຢຊູໂດຍການເຮັດຫຍັງແດ່?

*ຫວ*